ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ວິໄສທັດຮອດປີ 2030 ແລະ ຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025)

**(ຜ່ານກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VIII
ໃນລະຫວ່າງ ວັນທີ 20-22 ເມສາ 2016 ທີ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ)**

**ກະຊວງແຜນການ ແລະ ການລົງທຶນ**

**ມິຖຸນາ 2016**

# ສາລະບານ

**ພາກທີ I: ສະພາບການພັດທະນາເສດຖະກິດ-ສັງຄົມ ໄລຍະ 15 ປີ ຜ່ານມາ (2001-2015) .........1**

**1.1** ທົບທວນຄືນຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະຜ່ານມາ............................... 1

**1.2** ຜົນສຳເລັດຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 15 ປີ ຜ່ານມາ ........................ 2

1.2.1 ດ້ານການເມືອງ ແລະ ຄວາມສະຫງົບທາງດ້ານສັງຄົມ ................................................ 2

1.2.2 ດ້ານເສດຖະກິດ ................................................................................................ 2

1.2.**3** ດ້ານສັງຄົມ...................................................................................................... 4

1.2.4 ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ................................................. 5

1.2.5 ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ................................................ 6

**1.3** ບັນຫາຄົງຄ້າງ ................................................................................................... 6

**ພາກທີ II: ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025).........................................................................................................9**

**2.1** ສະພາບແວດລ້ອມສາກົນ, ຈຸດພິເສດ ແລະ ສະພາວະຄວາມເປັນຈິງພາຍໃນປະເທດ ............... 9

2.1.1 ສະພາບແວດລ້ອມສາກົນ ...................................................................................... 9

2.1.2 ຈຸດພິເສດ ແລະ ສະພາວະຄວາມເປັນຈິງຢູ່ພາຍໃນປະເທດ ..........................................10

**2.2** ວິໄສທັດຮອດປີ 2030 ..........................................................................................14

**2.3** ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025).......................15

2.3.1 ທິດທາງລວມ .....................................................................................................15

2.3.2 ເປົ້າໝາຍ ແລະ ຄາດໝາຍລວມຂອງຍຸດທະສາດຮອດປີ 2025 .......................................16

2.3.3 ບັນດາຍຸດທະສາດລະດັບຊາດຂອງການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ..............................................................................................................17

2.3.3.1 ຍຸດທະສາດການພັດທະນາເສດຖະກິດຢ່າງຕໍ່ເນື່ອງຕາມທິດທີ່ມີຄຸນນະພາບ, ສົມດຸນ, ຍືນຍົງ ແລະ ສີຂຽວ.................................................................................................................17

2.3.3.2 ຍຸດທະສາດ ເພື່ອບັນລຸບັນດາເປົ້າໝາຍຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ (LDCs) ໃນປີ 2020 ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs)..........................18

2.3.3.3 ຍຸດທະສາດວ່າດ້ວຍການພັດທະນາຊັບພະຍາກອນມະນຸດ...........................................19

2.3.3.4 ຍຸດທະສາດການປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ, ມີປະສິດທິຜົນ ແລະ ຕາມທິດທັນເປັນສີຂຽວ ..........................................................................20

2.3.3.5 ຍຸດທະສາດວ່າດ້ວຍການເພີ່ມທະວີຄວາມສັກສິດຂອງລະບົບການປົກຄອງດ້ວຍກົດໝາຍຂອງລັດປະຊາທິປະໄຕປະຊາຊົນ .............................................................................20

2.3.3.6 ຍຸດທະສາດການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ.........................21

2.3.3.7 ຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ..................................................22

**ພາກທີ III:  ນະໂຍບາຍ, ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດ ..................................... 24**

**3.1** ນະໂຍບາຍ ............................................................................................24

**3.2** ກົນໄກຈັດຕັ້ງປະຕິບັດ...............................................................................25

**3.3** ມາດຕະການຈັດຕັ້ງປະຕິບັດ .......................................................................27

**ເອກະສານຊ້ອນທ້າຍ 1 : ຕາຕະລາງສຳຄັນທາງດ້ານເສດຖະກິດ-ສັງຄົມ................................ 29**

**ເອກະສານຊ້ອນທ້າຍ 2 : ບາງເປົ້າໝາຍສູ້ຊົນຂອງຍຸດທະສາດຮອດ ປີ 2030.......................... 32**

**ເອກະສານຊ້ອນທ້າຍ 3 : ມາດຖານ ແລະ ເງື່ອນໄຂຂອງປະເທດດ້ອຍພັດທະນາ.................... 33**

**ເອກະສານຊ້ອນທ້າຍ 4 : ເປົ້າໝາຍການພັດທະນາແບບຍືນຍົງ (SDGS).............................. 36**

**ເອກະສານຊ້ອນທ້າຍ 5 : ດັດຊະນີໝາຍການພັດທະນາຂອງປະເທດດ້ອຍພັດທະນາ ໃນປີ 2015 ............................................................................................................ 37**

**ເອກະສານຊ້ອນທ້າຍ 6 : ບັນຊີປະເທດຕາມການແບ່ງຂອງທະນາຄານໂລກຕາມລາຍຮັບ……..40**

# ອາລຳພະບົດ

ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແມ່ນແຜນຍຸດທະສາດພັດທະນາທີ່ສືບຕໍ່ຈາກຍຸດທະສາດພັດທະນາຮອດປີ 2020 ເຊິ່ງໄດ້ຮັບຮອງເອົາຢູ່ໃນກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ (2001), ເປັນການສືບຕໍ່ຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ IX, ແລະ ເພື່ອກະກຽມເນື້ອໃນໃຫ້ແກ່ກອງປະຊຸມໃຫຍ່ ຄັ້ງທີ X ແລະ XI ຂອງພັກໃນຕໍ່ໜ້າ, ທັງເປັນແຜນຍຸດທະສາດບຸກທະລຸ ເພື່ອຮັບປະກັນໃຫ້ການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມໝັ້ນຄົງ ຕາມທິດຍືນຍົງ ແລະ ສີຂຽວ, ແນໃສ່ພັດທະນາປະເທດຊາດໃຫ້ບັນລຸເງື່ອນໄຂຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020 ແລະ ສືບຕໍ່ໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາຢ່າງສົມບູນໃນປີ 2025, ສ້າງພື້ນຖານຫັນເປັນອຸດສາຫະກຳ ແລະ ທັນສະໄໝອີກກ້າວໜຶ່ງ ເພື່ອກ້າວໄປສູ່ປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງໃນປີ 2030. ແນໃສ່ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນເທື່ອລະກ້າວ, ຮັບປະກັນສະຖຽນລະພາບທາງດ້ານການເມືອງໃຫ້ມີຄວາມໝັ້ນຄົງ, ສັງຄົມມີຄວາມສະຫງົບສຸກ ແລະ ເປັນລະບຽບຮຽບຮ້ອຍດີ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ປະເທດຊາດເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມຍຸດຕິທຳ ແລະ ສີວິໄລ ຕາມທິດກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ.

ຜ່ານການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 15 ປີ ຜ່ານມາ (2001-2015) ພວກເຮົາໄດ້ມີຜົນສຳເລັດເປັນທີ່ໜ້າເພິ່ງພໍໃຈໃນຫຼາຍດ້ານ. ແຕ່ຄຽງຄູ່ກັນນັ້ນ, ກໍຍັງມີສິ່ງຄົງຄ້າງຈຳນວນໜຶ່ງທີ່ຍັງຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ. ຜົນສຳເລັດ ແລະ ສິ່ງຄົງຄ້າງນັ້ນ ໄດ້ກາຍເປັນບົດຮຽນອັນລ້ຳຄ່າ ແລະ ເປັນບ່ອນອີງພື້ນຖານໃຫ້ແກ່ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດພັດທະນາ (2016-2025) ໃຫ້ມີຜົນສຳເລັດທີ່ຍິ່ງໃຫຍ່ກວ່າເກົ່າ. ດັ່ງນັ້ນ, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ນີ້ຈຶ່ງເປັນແຜນສືບຕໍ່ຜັນຂະຫຍາຍໝາກຜົນທີ່ຍາດມາໄດ້ ແລະ ປັບປຸງແກ້ໄຂສິ່ງທີ່ຄົງຄ້າງ ໃນໄລຍະ 15 ປີ ຜ່ານມາ, ມີບົດບາດສຳຄັນໃນການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກໃຫ້ເປັນແຜນຍຸດທະສາດການພັດທະນາຂອງລັດຖະບານ, ເປັນບ່ອນອີງໃຫ້ແກ່ການຜັນຂະຫຍາຍເປັນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ IX ໃຫ້ມີການຫັນປ່ຽນໃໝ່ທັງທາງປະລິມານ ແລະ ຄຸນນະພາບຕາມທິດ 4 ບຸກທະລຸທີ່ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກໄດ້ກຳນົດໄວ້, ແນໃສ່ສ້າງບາດກ້າວ ແລະ ພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມທີ່ໜັກແໜ້ນ ເພື່ອບັນລຸໃຫ້ໄດ້ບັນດາຄາດໝາຍສູ້ຊົນ ສຳລັບໄລຍະ 2016-2020, 2021-2025 ແລະ ວິໄສທັດຮອດປີ 2030.

ຄຸນລັກສະນະສະເພາະຂອງວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແມ່ນເອກະສານກຳນົດເປົ້າໝາຍໃຫຍ່ໆຂອງການພັດທະນາເສດຖະກິດ-ສັງຄົມຮອດປີ 2030, ກຳນົດທິດທາງ, ຄາດໝາຍສູ້ຊົນ ແລະ ຍຸດທະສາດບຸລິມະສິດແຫ່ງຊາດຮອດປີ 2025 ເພື່ອເປັນບ່ອນອີງສຳລັບການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ IX, ກໍ່ຄືຍຸດທະສາດ ແລະ ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ.

ການກຳນົດວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ໄດ້ອີງໃສ່ຜົນຂອງການສະຫຼຸບຕີລາຄາວຽກງານທີ່ໄດ້ປະຕິບັດໃນໄລຍະຜ່ານມາ, ຜົນການສຶກສາຄົ້ນຄວ້າກ່ຽວກັບຈຸດພິເສດ, ສະພາວະຄວາມເປັນຈິງ, ທ່າແຮງບົ່ມຊ້ອນທີ່ໄດ້ປຽບ, ກາລະໂອກາດ, ສິ່ງທ້າທາຍ, ຂໍ້ຈຳກັດ, ທ່າອ່ຽງຂອງຍຸກສະໄໝຢູ່ພາຍໃນປະເທດ, ຂົງເຂດ ແລະ ສາກົນ, ທ່າອ່ຽງລວມຂອງຂະບວນການໂລກາພິວັດ, ການຫັນເປັນພາກພື້ນ ແລະ ຫັນເປັນສາກົນ ໃນປັດຈຸບັນ ແລະ ອະນາຄົດ ໂດຍສະເພາະແມ່ນທ່າອ່ຽງຂອງການປ່ຽນແປງ ແລະ ການຂະຫຍາຍຕົວທາງດ້ານການເມືອງ, ສັງຄົມ, ເສດຖະກິດ, ການຄ້າ, ການລົງທຶນ, ວິທະຍາສາດ-ເຕັກໂນໂລຊີ ຢູ່ໃນພາກພື້ນ ແລະ ສາກົນ, ການປ່ຽນແປງສິ່ງແວດລ້ອມທຳມະຊາດຂອງໂລກ, ບົດຮຽນຕົວຈິງຂອງການພັດທະນາປະເທດ ໃນໄລຍະຜ່ານມາ, ບົດຮຽນຂອງພາກພື້ນ ແລະ ສາກົນ ເຊິ່ງລວມທັງບົດຮຽນທີ່ມີ

ຜົນສຳເລັດ ແລະ ບົດຮຽນທີ່ລົ້ມເຫຼວ, ຄວາມຮຽກຮ້ອງຕ້ອງການພັດທະນາຂອງປະເທດເຮົາໃນໄລຍະໃໝ່, ຄວາມເປັນໄປໄດ້ ແລະ ບັນດາທາງເລືອກທີ່ດີທີ່ສຸດຂອງການພັດທະນາ, ຜົນຂອງກອງປະຊຸມສຳມະນາວິທະຍາສາດ, ຄຳຄິດເຫັນຂອງພາກລັດ, ພາກເອກະຊົນ, ຄູ່ຮ່ວມພັດທະນາ ແລະ ທິດຊີ້ນຳຂອງລັດຖະບານ ແລະ ກົມການເມືອງສູນກາງພັກ ເປັນຂໍ້ມູນ ແລະ ແນວຄວາມຄິດ ສຳລັບການສ້າງວິໄສທັດ ແລະ ຍຸດທະສາດສະບັບນີ້.

ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ໄດ້ກຳນົດທາງເລືອກ ແລະ ທິດທາງໃນການພັດທະນາແບບມີຄວາມສົມດູນລະຫວ່າງການພັດທະນາເສດຖະກິດ, ການພັດທະນາວັດທະນະທຳ-ສັງຄົມ, ການປົກປັກຮັກສາ ແລະ ຟື້ນຟູສະພາບແວດລ້ອມໃຫ້ມີຄວາມຍືນຍົງ ແລະ ເປັນສີຂຽວ ໂດຍຖືເອົາການພັດທະນາເສດຖະກິດເປັນໃຈກາງ, ວັດທະນາທຳສັງຄົມເປັນເປົ້າໝາຍສູງສຸດ ແລະ ສິ່ງແວດລ້ອມເປັນສິ່ງຈຳເປັນ; ສ້າງ ແລະ ບູລະນະລະບອບການປົກຄອງຕາມທິດສ້າງລັດທີ່ມີການຄຸ້ມຄອງດ້ວຍກົດໝາຍໃຫ້ເຂັ້ມແຂງຂຶ້ນເທື່ອລະກ້າວ, ເປັນເຈົ້າການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບທາງດ້ານສັງຄົມ, ເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮັກສາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ ໃຫ້ໜັກແໜ້ນ ແລະ ໝັ້ນຄົງ, ໂດຍສຸມໃສ່ປະຕິບັດ 7 ຍຸດທະສາດບຸລິມະສິດແຫ່ງຊາດ ຄື:

1. ຍຸດທະສາດການພັດທະນາເສດຖະກິດຕາມທິດທີ່ມີຄຸນນະພາບ, ສົມດູນ, ຕໍ່ເນື່ອງ, ຍືນຍົງ ແລະ ເປັນສີຂຽວ,
2. ຍຸດທະສາດເພື່ອເປົ້າໝາຍຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ (LDCs) ໃນປີ 2020 ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs),
3. ຍຸດທະສາດວ່າດ້ວຍການພັດທະນາຊັບພະຍາກອນມະນຸດ,
4. ຍຸດທະສາດການປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ, ມີປະສິດທິຜົນ ແລະ ຕາມທິດຫັນເປັນສີຂຽວ,
5. ຍຸດທະສາດວ່າດ້ວຍການເພີ່ມທະວີຄວາມສັກສິດຂອງລະບົບການປົກຄອງປະຊາທິປະໄຕປະຊາຊົນ ແລະ ເພີ່ມຄວາມສັກສິດໃນການປົກຄອງຕາມກົດໝາຍ,
6. ຍຸດທະສາດການເຊື່ອມໂຍງ ແລະ ເຊື່ອມຕິດກັບພາກພື້ນ ແລະ ສາກົນ,
7. ຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

ຈຸດພິເສດ ແລະ ບັນຫາໃໝ່ຂອງວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ໄດ້ຍົກໃຫ້ເຫັນແຈ້ງກ່ຽວກັບຍຸດທະສາດ ເພື່ອບັນລຸເງື່ອນໄຂຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາໃນປີ 2020 ແລະ ຂ້າມຜ່ານຈາກປະເທດດ້ອຍພັດທະນາໃຫ້ໄດ້ສົມບູນໃນປີ 2025 ຕາມທິດສີຂຽວ ແລະ ຍືນຍົງ. ອັນໃໝ່ພິເສດຢູ່ໃນຍຸດທະສາດນີ້ ແມ່ນໄດ້ຍົກໃຫ້ເຫັນແຈ້ງກ່ຽວກັບມາດຕະຖານ ແລະ ເງື່ອນໄຂ ເພື່ອຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນປີ 2020 ເປັນຕົ້ນແມ່ນມາດຕະຖານລາຍໄດ້ແຫ່ງຊາດຕໍ່ຫົວຄົນ (Gross National Income: GNI), ດັດຊະນີຊັບສິນມະນຸດ (Human Asset Index: HAI), ດັດຊະນີຄວາມບອບບາງ ຫຼື ຄວາມສ່ຽງທາງດ້ານເສດຖະກິດ (Economic Vulnerability Index: EVI) ແລະ ໄດ້ຍົກໃຫ້ເຫັນບັນດາທັດສະນະການພັດທະນາສີຂຽວ ແລະ ຍືນຍົງ (SDGs) ເປັນມາດຖານການພັດທະນາສຳລັບບັນດາປະເທດຕ່າງໆໃນໂລກທີ່ສາກົນໄດ້ກຳນົດ ເຊິ່ງປະເທດພວກເຮົາຈະຕ້ອງໄດ້ສ້າງຍຸດທະສາດ ແລະ ກຳນົດມາດຕະການໃຫ້ສອດຄ່ອງ ເພື່ອໃຫ້ບັນລຸໄດ້ມາດຖານດັ່ງກ່າວ. ສຳລັບມາດຕະການ ແລະ ກົນໄກຈັດຕັ້ງປະຕິບັດ ນັ້ນແມ່ນໄດ້ເນັ້ນໃສ່ການເພີ່ມທະວີການຈັດຕັ້ງປະຕິບັດ 4 ບຸກທະລຸທີ່ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ໄດ້ກຳນົດໄວ້ໃຫ້ເປັນຮູບປະທຳ, ສືບຕໍ່ປ່ຽນແປງໃໝ່ທາງດ້ານເສດຖະກິດຢ່າງຮອບດ້ານ ແລະ ຄົບຊຸດ, ເຂັ້ມງວດໃນການປະຕິບັດນິຕິກຳຕ່າງໆທີ່ມີຢູ່ແລ້ວ ແລະ ເອົາໃຈໃສ່ສືບຕໍ່ສ້າງຕື່ມໃຫ້ຄົບຖ້ວນສົມບູນ ເພື່ອອຳນວຍຄວາມສະດວກ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຍຸດທະສາດນີ້ໃຫ້ເປັນຮູບປະທຳ ແລະ ມີຄຸນນະພາບ ເປັນຕົ້ນແມ່ນເນັ້ນໃສ່

ການສ້າງຄວາມເຂັ້ມແຂງຂອງກົນໄກແຜນການຕິດພັນກັບກົນໄກຕະຫຼາດ ແລະ ກົນໄກການປະສານງານໃຫ້ມີຄວາມກົມກຽວກັນຢ່າງເປັນລະບົບ.

- ໂຄງປະກອບຂອງວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແມ່ນປະກອບດ້ວຍ 3 ພາກຕົ້ນຕໍ ຄື: ພາກທີ I: ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 15 ປີ (2001-2015) ຜ່ານມາ ເຊິ່ງປະກອບດ້ວຍ 4 ເນື້ອໃນຍ່ອຍ ຄື: 1. ທົບທວນຄືນຍຸດທະສາດການພັດທະນາໃນໄລຍະຜ່ານມາ; 2. ຕີລາຄາບັນດາຜົນສຳເລັດ; 3. ຕີລາຄາບັນດາຂໍ້ຄົງຄ້າງ; ແລະ 4. ບາງບົດຮຽນທີ່ຖອດຖອນໄດ້. ພາກທີ II: ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແມ່ນປະກອບດ້ວຍ 4 ເນື້ອໃນຍ່ອຍ ຄື: 1. ຄຸນລັກສະນະຂອງວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາຮອດປີ 2025; 2. ຈຸດພິເສດ ແລະ ສະພາວະຄວາມເປັນຈິງຢູ່ພາຍໃນປະເທດ ແລະ ສະພາບແວດລ້ອມສາກົນ; 3. ວິໄສທັດ; 4. ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ລວມມີທິດທາງລວມ, ເປົ້າໝາຍ ແລະ ຄາດໝາຍສູ້ຊົນ, ຈຸດສຸມຍຸດທະສາດການພັດທະນາ (7 ຈຸດສຸມຍຸດທະສາດ); ພາກທີ III: ແຜນງານບຸລິມະສິດແຫ່ງຊາດ, ນະໂຍບາຍ, ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດ.

ນະຄອນຫຼວງວຽງຈັນ, ວັນທີ 01 JUN 2016

**ລັດຖະມົນຕີ**

**ກະຊວງແຜນການ ແລະ ການລົງທຶນ**

ດຣ. ສຸພັນ ແກ້ວມີໄຊ

## ຄຳຂວັນຂອງວິໄສທັດຮອດປີ 2030 ແລະ ຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025)

**“ສູ້ຊົນພັດທະນາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບ**
**ຄວາມດ້ອຍພັດທະນາໃນປີ 2020 ກ້າວໄປສູ່ປະເທດ**
**ກຳລັງພັດທະນາທີ່ມີລາຍຮັບປານກາງສູງ**
**ຕາມທິດການພັດທະນາສີຂຽວ**
**ແລະ ຍືນຍົງໃນປີ 2030”.**

# ພາກທີ I: ສະພາບການພັດທະນາເສດຖະກິດ-ສັງຄົມ ໄລຍະ 15 ປີຜ່ານມາ (2001-2015)

## 1.1 ທົບທວນຄືນຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະຜ່ານມາ

**ກອງປະຊຸມໃຫຍ່ ຄັ້ງທີ VII** ຂອງພັກໄດ້ກຳນົດທິດທາງ ແລະ ຄາດໝາຍສູ້ຊົນຂອງ ສປປ ລາວ ແຕ່ປີ 2001 ເຖິງ 2020 ໄວ້ດັ່ງລຸ່ມນີ້:

**ຮອດປີ 2005:**

- ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນລະດັບສະເລ່ຍ 7-7,5% ຕໍ່ປີ;
- ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ 500-550 ໂດລາ;
- ແກ້ໄຂຄວາມທຸກຍາກໃຫ້ໄດ້ເຄິ່ງໜຶ່ງຂອງຈຳນວນ 39,1% (ໃນສົກປີ 1997/1998);
- ຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍໃຫ້ໄດ້ໂດຍພື້ນຖານ ແລະ ຢຸດຕິການປູກຝິ່ນຢ່າງຂາດຕົວ;
- ທຸກຮູບການຈັດຕັ້ງທຸລະກິດໄດ້ຮັບການປັບປຸງ;
- ສ້າງໃຫ້ມີຊັບພະຍາກອນມະນຸດໃນຂະແໜງວິຊາ ແລະ ຊັ້ນຕ່າງໆທີ່ຈຳເປັນ.

**ຮອດປີ 2010:**

- ເສດຖະກິດຂະຫຍາຍຕົວໂດຍສະເລ່ຍໃນລະດັບ 7% ຕໍ່ປີ;
- ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ 700-750 ໂດລາ;
- ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ໂດຍພື້ນຖານ;
- ຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍໃຫ້ໄດ້ຢ່າງຂາດຕົວ;
- ສ້າງໃຫ້ມີໜໍ່ແໜງອຸດສາຫະກຳອັນພື້ນຖານ ແລະ ມີຊັບພະຍາກອນມະນຸດໃນຈຳນວນ ແລະ ຄຸນນະພາບພຽງພໍເພື່ອກ້າວໄປສູ່ການພັດທະນາອຸດສາຫະກຳ ແລະ ທັນເປັນທັນສະໄໝ;
- ສ້າງປະເທດເປັນໃຈກາງການບໍລິການທາງຜ່ານໃຫ້ໄດ້ໂດຍພື້ນຖານ.

**ຮອດປີ 2020:**

- ເສດຖະກິດ-ສັງຄົມຂະຫຍາຍຕົວດ້ວຍຈັງຫວະປານກາງ;
- ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ 1.200-1.500 ໂດລາ;
- ການຜະລິດກະສິກຳ ແລະ ບໍລິການມີການຂະຫຍາຍຕົວໜັກແໜ້ນ ແລະ ມີດ້ານທັນສະໄໝ;
- ການສຶກສາ ແລະ ການບໍລິການສາທາລະນະສຸກ ໄດ້ຮັບການພັດທະນາຢ່າງທົ່ວເຖິງ;
- ຫຼຸດພົ້ນອອກຈາກສະພາວະເປັນປະເທດດ້ອຍພັດທະນາ;
- ຄວາມທຸກຍາກໄດ້ຮັບການແກ້ໄຂຢ່າງສິ້ນເຊີງ;
- ມີບຸກຄະລາກອນ ແລະ ກຳລັງແຮງງານທີ່ມີຄວາມສາມາດໃນການພັດທະນາ;
- ມີການຮ່ວມມືກັບສາກົນຢ່າງກວ້າງຂວາງ ແລະ ສາມາດເຂົ້າຮ່ວມກັບທ່າອ່ຽງລວມຂອງຍຸກສະໄໝຢ່າງເປັນເຈົ້າການ.

**ກອງປະຊຸມໃຫຍ່ ຄັ້ງທີ VIII** ຂອງພັກ ໄດ້ມີການທົບທວນຄືນ ແລະ ປັບປຸງບາງຄາດໝາຍທີ່ບໍ່ສອດຄ່ອງຕື່ມ ດັ່ງນີ້:

**ຮອດປີ 2010:**

- ເສດຖະກິດຂະຫຍາຍຕົວໂດຍສະເລັ່ຍ 7,5% ຕໍ່ປີ;
- ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ 800 ໂດລາ;
- ເສີມຂະຫຍາຍກຳລັງແຮງຂອງທຸກພາກສ່ວນເສດຖະກິດ ແລະ ການພົວພັນຮ່ວມມືກັບຕ່າງປະທດ;
- ການຖາງປ່າເຮັດໄຮ່ແບບເລື່ອນລອຍຕ້ອງຢຸດຕິຢ່າງສິ້ນເຊີງ ໂດຍມີອາຊີບໃໝ່ປ່ຽນແທນທີ່ໝັ້ນຄົງ;
- ຄອບຄົວທຸກຍາກໄດ້ຮັບການແກ້ໄຂໂດຍພື້ນຖານ;

- ປະເທດມີໂຄງລ່າງພື້ນຖານເສດຖະກິດ-ເຕັກນິກ, ວັດທະນາທຳ, ວິທະຍາສາດ ແລະ ບຸກຄະລາກອນທີ່ມີຄຸນນະພາບຈຳນວນໜຶ່ງ ເພື່ອຮອງຮັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

<u>**ກອງປະຊຸມໃຫຍ່ ຄັ້ງທີ IX**</u> ຂອງພັກ ໄດ້ກຳນົດເອົາເປົ້າໝາຍການນຳພາປະເທດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນປີ 2020. ພ້ອມກັນນັ້ນ, ກໍສູ້ຊົນເພື່ອໃຫ້ບັນລຸເປົ້າໝາຍສະຫະສະວັດ (MDGs) ໃນປີ 2015 ເຊິ່ງກອງປະຊຸມໄດ້ກຳນົດເປົ້າໝາຍການພັດທະນາເສດຖະກິດ-ສັງຄົມໄວ້ດັ່ງນີ້:

<u>**ຮອດປີ 2015:**</u>

- ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ ດ້ວຍຈັງຫວະ 8% ຕໍ່ປີຂຶ້ນໄປ;
- ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ 1.700 ໂດລາ;
- ດຳເນີນຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝ;
- ອັດຕາສ່ວນຄວາມທຸກຍາກໃຫ້ຍັງເຫຼືອ 10% ຂອງຈຳນວນຄອບຄົວທັງໝົດໃນທົ່ວປະເທດ;
- ປະຕິບັດລະບອບການສຶກສາພາກບັງຄັບໃຫ້ເປັນຈິງ ແລະ ພົນລະເມືອງສ່ວນໃຫຍ່ຕ້ອງຈົບມັດທະຍົມຕອນຕົ້ນ;
- ບັນລຸເປົ້າໝາຍ MDGs;
- ສປປ ລາວ ມີເພື່ອນມິດສາກົນຢ່າງກວ້າງຂວາງ, ສາມາດເຂົ້າຮ່ວມໃນຂະບວນວິວັດແຫ່ງການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ.

<u>**ຮອດປີ 2020:**</u>

- ປະເທດຊາດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ.

## 1.2 ຜົນສຳເລັດຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 15 ປີ ຜ່ານມາ

ກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ (ໃນປີ 2001) ໄດ້ກຳນົດທິດທາງຍຸດທະສາດການພັດທະນາ ສຳລັບໄລຍະ 2001-2005, 2006-2010 ແລະ ຮອດປີ 2020. ມາຮອດປັດຈຸບັນນີ້, ພວກເຮົາສາມາດສະຫຼຸບຕີລາຄາໄດ້ບາງຜົນສຳເລັດຕົ້ນຕໍດັ່ງລຸ່ມນີ້:

### 1.2.1 ດ້ານການເມືອງ ແລະ ຄວາມສະຫງົບທາງດ້ານສັງຄົມ:

ຜົນສຳເລັດອັນສຳຄັນແມ່ນພວກເຮົາສາມາດປົກປັກຮັກສາຄວາມເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ໄດ້ຢ່າງໝັ້ນຄົງ, ລະບອບການເມືອງມີສະຖຽນລະພາບຢ່າງໜັກແໜ້ນ, ສັງຄົມມີຄວາມປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ກຳລັງປະກອບອາວຸດຂອງປະຊາຊົນໄດ້ຮັບການປັບປຸງໃຫ້ເຂັ້ມແຂງໄປຕາມທິດທີ່ມີແບບແຜນ ແລະ ທັນສະໄໝ, ເປັນກຳລັງຫຼັກແຫຼ່ງໃນການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກ, ຮັບປະກັນຄວາມໝັ້ນຄົງຂອງຊາດ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງສາພັດທະນາປະເທດໄດ້ຢ່າງໜັກແໜ້ນ.

### 1.2.2 ດ້ານເສດຖະກິດ:

ໃນໄລຍະ 15 ປີຜ່ານມາ (2001-2015), ໂດຍລວມແລ້ວເສດຖະກິດແຫ່ງຊາດ (GDP) ໄດ້ມີການຂະຫຍາຍຕົວດ້ວຍຈັງຫວະທີ່ໄວ ແລະ ຕໍ່ເນື່ອງ, ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງໂດຍພື້ນຖານ ເຊິ່ງສະແດງອອກດັ່ງນີ້:

- ອັດຕາການຂະຫຍາຍຕົວຂອງເສດຖະກິດ (GDP) ໃນໄລຍະປີ 2001-2015 ໂດຍສະເລ່ຍ ແມ່ນບັນລຸໄດ້ 7,4% ຕໍ່ປີ. GDP ສະເລ່ຍຕໍ່ຫົວຄົນ ໄດ້ເພີ່ມຂຶ້ນຈາກ 319 ໂດລາ ໃນສົກປີ 2000-2001 ມາເປັນ 1.970 ໂດລາ ໃນສົກປີ 2014-2015 (ຕາຕະລາງ 1 ໃນເອກະສານຊ້ອນທ້າຍ). ໃນປີ 2011, ທະນາຄານໂລກ ໄດ້ເລື່ອນ ສປປ ລາວ ຈາກກຸ່ມປະເທດທີ່ມີລາຍໄດ້ຕ່ຳ (Low Income Countries) ຂຶ້ນມາສູ່ກຸ່ມປະເທດທີ່ມີລາຍໄດ້ປານ

ກາງໃນລະດັບຕ່ຳ (Lower-Middle Income Countries) ແລະ ຢັ້ງຢືນວ່າ ສປປ ລາວ ແມ່ນ 1 ໃນ 10 ປະເທດ ໃນໂລກທີ່ມີການຂະຫຍາຍຕົວດ້ານເສດຖະກິດໄວ. ການເຕີບໂຕຂອງເສດຖະກິດທີ່ໄວຄືດັ່ງກ່າວນັ້ນແມ່ນເປັນການຢັ້ງ ຢືນເຖິງການບັນລຸບາດກ້າວການພັດທະນາ ແລະ ການສ້າງໄດ້ພື້ນຖານ ເພື່ອກ້າວໄປສູ່ການບັນລຸຄາດໝາຍຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາຂອງປະເທດເຮົາໃນປີ 2020 ທີ່ພັກເຮົາໄດ້ກຳນົດໄວ້.

- ສປປ ລາວ ມີຄວາມຄືບໜ້າໃນການກະກຽມຄວາມພ້ອມ ເພື່ອນຳປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ (LDCs). ອີງຕາມການປະເມີນຄັ້ງຫຼ້າສຸດຂອງຄະນະກຳມາທິການເສດຖະກິດ-ສັງຄົມຂອງອົງການສະຫະປະຊາຊາດ (CDP) ໃນເດືອນ ມີນາ ປີ 2015 ເຫັນວ່າລາຍໄດ້ສະເລ່ຍ (GNI) ແມ່ນມີຄວາມຄືບໜ້າດີ, ປະຕິບັດໄດ້ 1.232 ໂດລາສະຫະລັດ[1]ເທົ່າກັບ 99% ຂອງມາດຖານ (ມາດຖານຂອງປີ 2015 ແມ່ນ 1.242 ໂດລາ), ດັດຊະນີຊັບສິນມະນຸດ (HAI) ປະຕິບັດໄດ້ 60,8 ເທົ່າກັບ 92% ຂອງມາດຖານ (ມາດຖານຕ້ອງສູງກວ່າ 66). ເຖິງຢ່າງໃດກໍ່ຕາມ, ດັດຊະນີຄວາມບອບບາງທາງເສດຖະກິດ (EVI) ຍັງເປັນສິ່ງທ້າທາຍສຳລັບປະເທດເຮົາ, ຕົວເລກປັດຈຸບັນ ຢູ່ໃນລະດັບ 36,2 ເທົ່າກັບ 88% ຂອງມາດຖານ (ມາດຖານຕ້ອງຕ່ຳກວ່າ 32). ສະນັ້ນ, ຕາມການປະເມີນດັ່ງກ່າວ, ປະເທດເຮົາ ຍັງບໍ່ສາມາດບັນລຸໄດ້ຈັກເງື່ອນໄຂເລີຍໃນປີ 2015 ເຊິ່ງຕ້ອງບັນລຸໄດ້ຢ່າງໜ້ອຍ 2 ໃນ 3 ເງື່ອນໄຂ ແລະ ຕ້ອງບັນລຸ 2 ຄັ້ງໃນຮອບ 3 ປີຕິດຕໍ່ກັນ. ເຖິງແນວໃດກໍ່ຕາມ, ຄາດວ່າໃນປີ 2018 ທີ່ CDP ຈະມີການປະເມີນຄັ້ງຕໍ່ໄປ, ພວກເຮົາຈະສາມາດບັນລຸໄດ້ 2 ຕົວຊີ້ບອກ ຄື GNI ແລະ HAI ຫຼື ສາມາດບັນລຸເງື່ອນໄຂຫຼຸດພົ້ນຈາກປະເທດດ້ອຍພັດທະນາ ຄັ້ງທຳອິດ[2].

- ໂຄງປະກອບເສດຖະກິດຫັນປ່ຽນຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເຊິ່ງອັດຕາສ່ວນຂອງຂະແໜງກະສິກຳ-ປ່າໄມ້ ໄດ້ຫຼຸດລົງຈາກ 46,2% ໃນສົກປີ 1999-2000 ມາເປັນ 23,7% ໃນສົກປີ 2014-2015; ຂະແໜງອຸດສາຫະກຳ ໄດ້ເພີ່ມຂຶ້ນຈາກ 17,9% ມາເປັນ 29,1% ແລະ ຂະແໜງການບໍລິການ[3]ໄດ້ເພີ່ມຂຶ້ນຈາກ 35,9% ມາເປັນ 47,2% ໃນສົກປີ 2014-2015 (ຕາຕະລາງ 2 ໃນເອກະສານຊ້ອນທ້າຍ).

- ໂຄງປະກອບແຮງງານໄດ້ມີການຫັນປ່ຽນ ຄື: ແຮງງານໃນຂະແໜງກະສິກຳ-ປ່າໄມ້ ໄດ້ຫຼຸດລົງຈາກ 78,5% ໃນປີ 2005 ມາເປັນ 71,3% ໃນປີ 2010 ແລະ ຫຼຸດລົງຮອດ 65,3% ໃນປີ 2015; ແຮງງານໃນຂະແໜງອຸດສາຫະກຳໄດ້ ເພີ່ມຂຶ້ນຈາກ 4,8% ໃນປີ 2005 ມາເປັນ 8,3% ໃນປີ 2010 ແລະ ຄາດວ່າຈະເພີ່ມຂຶ້ນເປັນ 11,51% ໃນປີ 2015 ແລະ ຂະແໜງບໍລິການ ໄດ້ເພີ່ມຂຶ້ນຈາກ 16,7% ໃນປີ 2005 ເປັນ 20,4% ໃນປີ 2010 ແລະ ຄາດວ່າຈະເປັນ 23,45% ຂອງແຮງງານລວມ[4]ໃນປີ 2015 (ຕາຕະລາງ 3 ໃນເອກະສານຊ້ອນທ້າຍ).

- ການຄ້າຕ່າງປະເທດ: ສປປ ລາວ ໄດ້ມີການພົວພັນການຄ້າກັບຫຼາຍກວ່າ 80 ປະເທດໃນໂລກ, ເຊິ່ງໃນໄລຍະປີ 2011-2015 ການສົ່ງອອກທັງໝົດ ປະຕິບັດໄດ້ 21,6 ຕື້ໂດລາ ເທົ່າກັບ 25% ຂອງ GDP; ການນຳເຂົ້າປະຕິບັດໄດ້ 27,3 ຕື້ໂດລາ ເທົ່າກັບ 32% ຂອງ GDP; ການຂາດດຸນການຄ້າສະເລ່ຍ ແມ່ນເທົ່າກັບ 7,2% ຂອງ GDP. ອັດຕາການການເປີດກວ້າງການຄ້າລະຫວ່າງປະເທດ (ການສົ່ງອອກ+ການນຳເຂົ້າ) ສະເລ່ຍໃນລະຫວ່າງປີ

---

[1]ຕົວເລກດັ່ງກ່າວ ແມ່ນປະເມີນໂດຍຄະນະກຳມາທິການເສດຖະກິດ-ສັງຄົມຂອງອົງການສະຫະປະຊາຊາດ ເຊິ່ງວິທີການປະເມີນ ແມ່ນນຳໃຊ້ຄ່າສະເລ່ຍ 3 ປີຂອງ GNI ຕໍ່ຫົວຄົນ ຍ້ອນຫຼັງໄປອີກ 2 ປີ ເພື່ອໃຫ້ສາມາດປຽບທຽບກັບປະເທດອື່ນໆທີ່ອາດຈະບໍ່ມີຂໍ້ມູນຫຼ້າສຸດໃນການຈັດກຸ່ມປະເທດດ້ອຍພັດທະນາ. ຕົວຢ່າງ: ໃນກໍລະນີນີ້, GNI ຕໍ່ຫົວຄົນ 1.232 ໂດລາສະຫະລັດ ແມ່ນຄ່າສະເລ່ຍ 3 ປີ ຂອງປີ 2011, 2012 ແລະ 2013. ດັ່ງນັ້ນ, ຕົວເລກດັ່ງກ່າວ ຈຶ່ງຕ່ຳກວ່າຕົວເລກຕົວຈິງ ຫຼື ຕົວເລກທາງການໃນປີ 2015, ເຊິ່ງ GDP ຕໍ່ຫົວຄົນໄດ້ປະມານ 1.857 ໂດລາສະຫະລັດ ແລະ GNI ຕໍ່ຫົວຄົນ ປະມານ 1.460 ໂດລາສະຫະລັດ.

[2]ຖ້າສາມາດຮັກສາການບັນລຸເງື່ອນໄຂຫຼຸດພົ້ນໄດ້ອີກໃນປີ 2021, ສປປ ລາວ ຈະສາມາດອອກຈາກບັນຊີປະເທດດ້ອຍພັດທະນາບົນພື້ນຖານການສະເໜີຂອງລັດຖະບານລາວ.

[3]ຂະແໜງບໍລິການ ແມ່ນລວມທັງພາສີອາກອນຜະລິດຕະພັນ ແລະ ພາສີຂາເຂົ້າ.

[4]ຂໍ້ມູນໂຄງປະກອບແຮງງານ ປີ 2005 ແມ່ນອີງໃສ່ການຜົນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ຂໍ້ມູນປີ 2010 ແມ່ນໃຊ້ຂໍ້ມູນຈາກການສຳຫຼວດການນຳໃຊ້ແຮງງານເດັກ ແລະ ສະພາບແຮງງານປີ 2010. ສ່ວນປີ 2015 ແມ່ນອີງໃສ່ການຄາດຄະເນຈາກຂໍ້ມູນດິບຈາກການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ປີ 2013 (LECS 5).

2001-2010 ແມ່ນເທົ່າກັບ 48% ຂອງ GDP ເພີ່ມຂຶ້ນເປັນ 63,4% ໃນປີ 2011-2015 ເຊິ່ງສະແດງໃຫ້ເຫັນໄດ້ວ່າການພັດທະນາການຄ້າລະຫວ່າງປະເທດໄດ້ມີການຂະຫຍາຍຕົວດີຂຶ້ນ.

- ການລົງທຶນ: ໃນໄລຍະ 15 ປີຜ່ານມາ, ການລົງທຶນລວມທົ່ວສັງຄົມໂດຍສະເລ່ຍແມ່ນເທົ່າກັບ 44,8% ຂອງ GDP ຫຼື 330,1 ພັນຕື້ກີບ; ໃນນັ້ນ: ມີທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດກວມເອົາ 28%; ທຶນຂອງລັດກວມເອົາ 3,3%; ທຶນຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ (ODA) ກວມເອົາ 7,7%; ແລະ ສິນເຊື່ອທະນາຄານກວມ 5,8%. ການລົງທຶນ ໃນໄລຍະແຜນການ 5 ປີ ຄັ້ງທີ VII ໄດ້ເພີ່ມຂຶ້ນ 6,7% ເທົ່າທຽບກັບແຜນການ 5 ປີ ຄັ້ງທີ V (2001-2005) ຄື: ຈາກ 30,6 ພັນຕື້ກີບມາເປັນ 236,7 ພັນຕື້ກີບ.

- ການລະດົມການລົງທຶນຈາກຕ່າງປະເທດ ໃນໄລຍະປີ 2001-2015 ແມ່ນໄດ້ທັງໝົດ 20,1 ຕື້ໂດລາ[5] ເຊິ່ງສ່ວນໃຫຍ່ແມ່ນລົງທຶນໃນຂະແໜງໄຟຟ້າກວມເອົາ 31%, ບໍ່ແຮ່ກວມເອົາ 25%, ບໍລິການ 21%, ສ່ວນຂະແໜງກະສິກຳ ແລະ ອຸດສາຫະກຳປຸງແຕ່ງແມ່ນກວມເອົາ 13% ແລະ 10% ຕາມລຳດັບ. ມາຮອດປັດຈຸບັນ, ໄດ້ມີນັກລົງທຶນຈາກ 41 ປະເທດຢູ່ທົ່ວໂລກທີ່ເຂົ້າມາລົງທຶນໃນ ສປປ ລາວ; ປະເທດທີ່ນຳໜ້າໃນການລົງທຶນໂດຍກົງຢູ່ ສປປ ລາວ ໃນ 10 ອັນດັບທຳອິດ; ໃນນັ້ນ 6 ປະເທດທີ່ມາຈາກທະວີບອາຊີ ຄື: ສປຈີນ, ໄທ, ສສຫວຽດນາມ, ສເກົາຫຼີ, ມາເລເຊຍ, ຝະລັ່ງ, ໂຮນລັງ, ຍີ່ປຸ່ນ, ນອກແວ ແລະ ອັງກິດ.

- ການຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ (ODA) ແຕ່ປີ 2001-2015 ແມ່ນສາມາດລະດົມທຶນໄດ້ທັງໝົດ 6,9 ຕື້ໂດລາ. ທຶນດັ່ງກ່າວ ແມ່ນໄດ້ສຸມໃສ່ການພັດທະນາໂຄງລ່າງພື້ນຖານທາງເສດຖະກິດ ແລະ ສັງຄົມ, ພິເສດແມ່ນເສັ້ນທາງຄົມມະນາຄົມ, ພະລັງງານໄຟຟ້າ ແລະ ໂຄງລ່າງພື້ນຖານຂະແໜງສັງຄົມ ເປັນຕົ້ນແມ່ນຂະແໜງການສຶກສາ ແລະ ສາທາລະນະສຸກ ເພື່ອສ້າງຄວາມຄືບໜ້າໃນການບັນລຸເປົ້າໝາຍ MDGs.

- ເສດຖະກິດມະຫາພາກມີສະຖຽນລະພາບດີ ເຊິ່ງສະແດງອອກຄື: ອັດຕາເງິນເຟີ້ສະເລ່ຍໃນໄລຍະ 15 ປີຜ່ານມາ ແມ່ນປະຕິບັດໄດ້ຕ່ຳກວ່າສອງຕົວເລກ (6,8%) ຕາມແຜນການທີ່ໄດ້ກຳນົດໄວ້. ສາເຫດທີ່ສາມາດຮັກສາສະຖຽນລະພາບໃຫ້ອັດຕາເງິນເຟີ້ຢູ່ໃນລະດັບໜຶ່ງຕົວເລກນັ້ນ ແມ່ນຜົນເນື່ອງມາຈາກການປະຕິບັດນະໂຍບາຍຄຸ້ມຄອງເສດຖະກິດມະຫາພາກທີ່ເຂັ້ມແຂງຢູ່ພາຍໃນປະເທດບວກກັບສະພາບແວດລ້ອມຂອງສາກົນເປັນຕົ້ນແມ່ນວິກິດການການເງິນ-ເສດຖະກິດໂລກໃນສົກປີ 2008-2009 ເຮັດໃຫ້ລະດັບລາຄາສິນຄ້າໃນທົ່ວໂລກ ໂດຍສະເພາະແມ່ນລາຄານ້ຳມັນເຊື້ອໄຟຫຼຸດລົງຫຼາຍ ໄດ້ສົ່ງຜົນດີຕໍ່ການຮັກສາສະຖຽນລະພາບທາງດ້ານເສດຖະກິດຂອງປະເທດເຮົາໃຫ້ມີຄວາມໝັ້ນທ່ຽງ. ພ້ອມກັນນັ້ນ, ອັດຕາແລກປ່ຽນລະຫວ່າງສະກຸນເງິນກີບທຽບກັບສະກຸນເງິນຕາສາກົນກໍ່ມີສະຖຽນລະພາບດີພໍສົມຄວນ ເຊິ່ງເຄື່ອນເໜັງຂຶ້ນລົງປີຕໍ່ປີຢູ່ໃນລະດັບບໍ່ເກີນ 5% ຕາມຄາດໝາຍທີ່ໄດ້ກຳນົດໄວ້; ໃນນັ້ນ: ອັດຕາແລກປ່ຽນລະຫວ່າງເງິນກີບທຽບກັບເງິນບາດ ເພີ່ມຂຶ້ນຈາກ 203 ກີບ/ບາດ ໃນປີ 2001 ມາເປັນ 245 ກີບ/ບາດ ໃນສົກປີ 2014-2015 ແລະ ອັດຕາແລກປ່ຽນລະຫວ່າງເງິນກີບທຽບກັບເງິນໂດລາ ແມ່ນຫຼຸດລົງຈາກ 8.049 ກີບ/ໂດລາ ມາເປັນ 8.123 ກີບ/ໂດລາໃນໄລຍະດຽວກັນນັ້ນ. ສ່ວນການຂະຫຍາຍ ຕົວຂອງປະລິມານເງິນ M2 ໃນໄລຍະປີ 2001-2015 ສະເລ່ຍແມ່ນຢູ່ທີ່ລະດັບ 28,9% ຕໍ່ປີ; ໃນນັ້ນ: ເງິນຝາກທີ່ເປັນເງິນຕາຕ່າງປະເທດຕໍ່ປະລິມານເງິນ M2 ສະເລ່ຍແມ່ນຢູ່ໃນລະດັບ 58% ຕໍ່ປີ ແລະ ມີທ່າອ່ຽງຫຼຸດລົງ ຄື: ຫຼຸດລົງຈາກ 75% ໃນປີ 2001 ມາເປັນ 53,8% ໃນປີ 2010 ແລະ 50% ໃນປີ 2014 ເຊິ່ງສະແດງເຖິງສະຖຽນລະພາບ ແລະ ການນຳໃຊ້ເງິນກີບລາວໄດ້ຮັບການພັດທະນາດີຂຶ້ນ.

### 1.2.3 ດ້ານສັງຄົມ:

ໃນປີ 2015, ພົນລະເມືອງລາວມີທັງໝົດປະມານ 6,5 ລ້ານຄົນ ເພີ່ມຂຶ້ນ 0,9 ລ້ານຄົນຈາກປີ 2005, ເຊິ່ງມີອັດຕາການຂະຫຍາຍຕົວຂອງພົນລະເມືອງລາວໂດຍສະເລ່ຍແມ່ນ 1,8% ຕໍ່ປີ. ພົນລະເມືອງລາວແມ່ນຂະຫຍາຍຕົວຕາມຮູບທາດ ເຊິ່ງພົນລະເມືອງໃນໄວອາຍຸໜຸ່ມແມ່ນມີຖານລຸ່ມກວ້າງ, ໄວອາຍຸກາງຄົນ ແລະ ແກ່ແມ່ນ

[5] ສະເພາະມູນຄ່າການລົງທຶນໃນປີ 2013 ເປັນຕົ້ນມາ ແມ່ນໄດ້ລວມເອົາແຕ່ໂຄງການລົງທຶນສຳປະທານເທົ່ານັ້ນ.

ຫຼຸດລົງຕາມລຳດັບ. ສັງເກດເຫັນໄດ້ວ່າຈຳນວນປະຊາກອນໃນໄວອາຍຸກາງຄົນ ແລະ ແກ່ແມ່ນມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ.

ອັດຕາຄວາມທຸກຍາກຂອງປະຊາຊົນ ໄດ້ຫຼຸດລົງຈາກ 33,5% ໃນປີ 2003 ມາເປັນ 27,6% ໃນປີ 2008 ແລະ ສືບຕໍ່ຫຼຸດລົງມາເປັນ 23,2% ໃນປີ 2013; ອາຍຸຍືນສະເລ່ຍບັນລຸໄດ້ 69,41 ປີ (ໃນປີ 2015) ເພີ່ມຂຶ້ນຈາກ 66 ປີໃນປີ 2010, ອັດຕາການຮູ້ໜັງສືຂອງປະຊາກອນອາຍຸ 15 ປີ ຂຶ້ນໄປ ບັນລຸໄດ້ 81,3%, ເພີ່ມຂຶ້ນຈາກ 68% ໃນປີ 2000 ແລະ ສປປ ລາວ ສາມາດປະກາດຜົນສຳເລັດການຮຽນປະຖົມບຳລຸງທົ່ວປະເທດໃນປີ 2015. ນອກຈາກນີ້, ໃນປີ 2014, ປະຊາຊົນສາມາດເຂົ້າເຖິງການຊົມໃຊ້ນ້ຳສະອາດໄດ້ 84% ແລະ ເຂົ້າເຖິງການຊົມໃຊ້ຫ້ອງນ້ຳໄດ້ 65% ຂອງຈຳນວນປະຊາກອນທັງໝົດ. ໃນປີ 2012, ອັດຕາການຕາຍຂອງເດັກອາຍຸຕ່ຳກວ່າ 1 ປີ ແມ່ນຫຼຸດລົງເປັນ 32,62 ຄົນຕໍ່ຈຳນວນເດັກເກີດໃໝ່ມີຊີວິດ 1.000 ຄົນ (ໃນປີ 2015).

ອົງການສະຫະປະຊາຊາດເພື່ອການພັດທະນາ ໄດ້ຈັດອັນດັບດັດຊະນີການພັດທະນາມະນຸດ (Human Development Index: HDI) ໃນປີ 2011, ເຊິ່ງ ສປປ ລາວ ຖືກຈັດຢູ່ອັນດັບທີ 138 ໃນຈຳນວນ 187 ປະເທດທີ່ມີຂໍ້ມູນ (ປີ 2001 ແມ່ນຢູ່ໃນອັນດັບທີ 131 ໃນຈຳນວນ 162 ປະເທດທີ່ມີຂໍ້ມູນ) .

ອີງຕາມການປະເມີນຕີລາຄາການຈັດຕັ້ງປະຕິບັດເປົ້າໝາຍສະຫະສະວັດເພື່ອການພັດທະນາ (MDGs) ຮ່ວມກັນລະຫວ່າງລັດຖະບານລາວ ແລະ ອົງການສະຫະປະຊາຊາດ ໃນປີ 2013 ເຫັນວ່າ: ສປປ ລາວ ມີຄວາມເປັນໄປໄດ້ທີ່ຈະບັນລຸເປົ້າໝາຍດັ່ງກ່າວ, ແຕ່ກໍ່ມີບາງເປົ້າໝາຍຍັງເປັນສິ່ງທີ່ທ້າທາຍ ແລະ ຈະບໍ່ສາມາດບັນລຸໄດ້ຕາມແຜນການທີ່ກຳນົດໄວ້ ໂດຍສະເພາະແມ່ນເປົ້າໝາຍທີ 1 (ອັດຕາສ່ວນຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີທີ່ມີລວງສູງ ແລະ ນ້ຳໜັກຕ່ຳກວ່າມາດຕະຖານ), ເປົ້າໝາຍທີ 2 (ອັດຕາການເຂົ້າໂຮງຮຽນ ແລະ ສືບຕໍ່ຮຽນຮອດຊັ້ນປີ 5 ຂອງເດັກນ້ອຍ), ເປົ້າໝາຍທີ 4 (ອັດຕາການຕາຍຂອງເດັກອາຍຸຕ່ຳກວ່າ 1 ປີ), ເປົ້າໝາຍ 7 (ໂດຍສະເພາະອັດຕາການປົກຫຸ້ມຂອງປ່າໄມ້ ເຫັນວ່າຍັງຕ່ຳກວ່າເປົ້າໝາຍຫຼາຍ) ແລະ ເປົ້າໝາຍທີ 9 (ເນື້ອທີ່ໄດ້ຮັບການເກັບກູ້ລະເບີດຕໍ່ປີຍັງຕ່ຳກວ່າເປົ້າໝາຍຫຼາຍ ແລະ ຈຳນວນຜູ້ບາດເຈັບ, ເສຍຊີວິດຍ້ອນລະເບີດບໍ່ທັນແຕກຍັງສູງຢູ່) (ລາຍລະອຽດແມ່ນຢູ່ໃນຕາຕະລາງ 4 ເອກະສານຊ້ອນທ້າຍ).

#### 1.2.4 ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:

ການປົກປັກຮັກສາ, ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເປັນວຽກງານໜຶ່ງທີ່ສຳຄັນໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ, ເຊິ່ງໃນໄລຍະ 15 ປີທີ່ຜ່ານມາ, ພັກ ແລະ ລັດຖະບານແຫ່ງ ສປປ ລາວ ໄດ້ປະສົບຜົນສຳເລັດໃນຫຼາຍດ້ານດັ່ງລຸ່ມນີ້:

\+ ການພັດທະນາບຸກຄະລາກອນ, ອົງກອນ ແລະ ສະຖາບັນການສຶກສາ ແລະ ວິໄຈດ້ານສິ່ງແວດລ້ອມ:
- ໄດ້ຍົກລະດັບອົງການໃຫ້ເປັນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ສ້າງຕັ້ງຄະນະວິທະຍາສາດສິ່ງແວດລ້ອມຂຶ້ນໃນມະຫາວິທະຍາໄລແຫ່ງຊາດ;
- ສ້າງຕັ້ງ ແລະ ປັບປຸງສະຖາບັນສິ່ງແວດລ້ອມໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງຂຶ້ນເລື້ອຍໆ;
- ສ້າງຕັ້ງ, ປັບປຸງ ແລະ ເພີ່ມຂີດຄວາມສາມາດໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດ;
- ສ້າງຕັ້ງສູນຂໍ້ມູນຂ່າວສານ ແລະ ປັບປຸງລະບົບເຕືອນໄພລ່ວງໜ້າ;

\+ ການພັດທະນານິຕິກຳທີ່ກ່ຽວຂ້ອງກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ:
- ໄດ້ອອກກົດໝາຍວ່າດ້ວຍສິ່ງແວດລ້ອມ;
- ກົດໝາຍວ່າດ້ວຍປ່າໄມ້;
- ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ;
- ກົດລະບຽບກ່ຽວກັບການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA);
- ກົດລະບຽບກ່ຽວກັບການນຳເຂົ້າ, ຜະລິດ ແລະ ນຳໃຊ້ຝຸ່ນເຄມີໃນການຜະລິດກະສິກຳ;

- ກົດລະບຽບກ່ຽວກັບການນຳເຂົ້າ, ຜະລິດ ແລະ ນຳໃຊ້ຢາຂ້າຫຍ້າ ແລະ ຢາປາບສັດຕູພືດໃນການຜະລິດ ກະສິກຳ.

+ ການປົກປັກຮັກສາ ແລະ ຄຸ້ມຄອງປ່າສະຫງວນ, ເຂດດິນຊຸ່ມນໍ້າ ແລະ ເຂດຊີວະນາໆພັນ:
  - ໃນຂອບເຂດທົ່ວປະເທດມີປ່າສະຫງວນທັງໝົດ 243 ແຫ່ງ, ເຊິ່ງກວມເນື້ອທີ່ທັງໝົດ 4.777.680 ເຮັກຕາ; ໃນນັ້ນ: ມີປ່າສະຫງວນແຫ່ງຊາດ 24 ແຫ່ງ ມີເນື້ອທີ່ 3.768.550 ເຮັກຕາ ແລະ ປ່າສະຫງວນຂອງແຂວງ 66 ແຫ່ງ ມີເນື້ອທີ່ 600.000 ເຮັກຕາ ແລະ ສ່ວນທີ່ເຫຼືອແມ່ນປ່າສະຫງວນຂອງເມືອງ;
  - ມີເຂດດິນຊຸ່ມນໍ້າທີ່ໄດ້ຂຶ້ນທະບຽນຕາມສົນທິສັນຍາລຳຊາແລ້ວ ຈຳນວນ 2 ແຫ່ງ ຄື: ເຊຈຳພອນ ແລະ ບຶງຂຽດໂງ້ງ.

#### 1.2.5 ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ:

ດ້ານການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ແມ່ນນັບມື້ເຂົ້າສູ່ລວງເລິກ, ເຊິ່ງ ສປປ ລາວ ໄດ້ເຊັນສັນຍາຮ່ວມມືສອງຝ່າຍກ່ຽວກັບເສດຖະກິດ ແລະ ການຄ້າກັບ 15 ປະເທດ ແລະ ການຮ່ວມມືການຄ້າໃນຂອບຫຼາຍຝ່າຍ, ຫຼາຍຂອບ ເຊັ່ນ: ໄດ້ກະກຽມເຂົ້າຮ່ວມປະຊາຄົມອາຊຽນ, ສຳເລັດການຮ່ວມລົງນາມໃນສັນຍາຫຼາຍດ້ານຄື: ການຄ້າດ້ານຜະລິດຕະພັນອາຊຽນ (ATIGA), ການລົງທຶນອາຊຽນ ASEAN (ACIA) ແລະ ການບໍລິການອາຊຽນພາຍໃຕ້ສັນຍາອາຊຽນວ່າດ້ວຍການບໍລິການຈຳນວນ 7 ພູດ; ສຳເລັດການເຈລະຈາເຂດການຄ້າເສລີອາຊຽນ-ສປຈີນ, ອາຊຽນ+6 ແລະ ອາຊຽນ-ຍີ່ປຸ່ນ; ສຳເລັດການຮ່ວມລົງນາມໃນສັນຍາວ່າດ້ວຍການສ້າງຕັ້ງເຂດການຄ້າເສລີລະຫວ່າງ ອາຊຽນ-ອົດສະຕາລີ ແລະ ນິວຊີແລນ ແລະ ດ້ານຜະລິດຕະພັນອາຊຽນ-ອິນເດຍ; ສຳເລັດການຮ່ວມລົງນາມໃນສັນຍາການລົງທຶນລະຫວ່າງ ອາຊຽນ-ສເກົາຫຼີ; ສຳເລັດການສ້າງບົດສຶກສາຄວາມເປັນໄປໄດ້ໃນການສ້າງເຂດການຄ້າເສລີອາຊຽນ+3 (EAFTA) ແລະ ອາຊຽນ+6 (CEPEA). ສິ່ງທີ່ພົ້ນເດັ່ນແມ່ນການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ໃນຕົ້ນປີ 2013; ນອກນັ້ນກໍ ແມ່ນຜົນສຳເລັດໃນການເປັນເຈົ້າພາບຈັດກອງປະຊຸມລັດຖະສະພາອາຊີ-ເອີຣົບ ຄັ້ງທີ VII ແລະ ກອງປະຊຸມສຸດຍອດ ອາຊີ-ເອີຣົບ ຄັ້ງທີ IX ໃນທ້າຍປີ 2012, ກອງປະຊຸມສຸດຍອດລະຫວ່າງກຳປູເຈຍ-ລາວ-ມຽນມາ-ຫວຽດນາມ (CLMV) ຄັ້ງທີ VI ແລະ ກອງປະຊຸມສຸດຍອດກ່ຽວກັບການຮ່ວມມືດ້ານເສດຖະກິດລະຫວ່າງແມ່ນໍ້າອີຣາວາດີ-ເຈົ້າພະຍາ-ນໍ້າຂອງ (ACMECS) ຄັ້ງທີ IV ໃນຕົ້ນປີ 2013.

## 1.3 ບັນຫາຄົງຄ້າງ

(1) ການປະຕິບັດບາດກ້າວບຸກທະລຸ ແລະ ຄາດໝາຍສູ້ຊົນທີ່ກອງປະຊຸມໃຫຍ່ຂອງພັກວາງອອກຍັງບໍ່ທັນເລິກເຊິ່ງ. ວຽກງານສຶກສາອົບຮົມການເມືອງ-ແນວຄິດ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງປ່ຽນແປງໃໝ່ຂອງພັກຕາມທິດສ້າງບາດກ້າວບຸກທະລຸຍັງບໍ່ທັນເລິກເຊິ່ງ; ການຫັນມະຕິຕ່າງໆເປັນແຜນການ, ແຜນງານ ແລະ ໂຄງການລະອຽດໃຫ້ແທດເໝາະກັບທ້ອງຖິ່ນ ຍັງບໍ່ເປັນຈຸດສຸມ ແລະ ຊັກຊ້າ; ຫຼາຍຄາດໝາຍທາງດ້ານສັງຄົມຍັງບໍ່ທັນສາມາດບັນລຸໄດ້ຕາມແຜນການ.

(2) ການເຕີບໂຕທາງດ້ານເສດຖະກິດຍັງບໍ່ຮັບປະກັນດ້ານຄຸນນະພາບເທົ່າທີ່ຄວນ; ເສດຖະກິດເຕີບໂຕໄວໂດຍອີງໃສ່ການຂຸດຄົ້ນຊັບພະຍາກອນທຳມະຊາດສູງ, ການສະສົມພາຍໃນຍັງຈຳກັດ, ສິນຄ້າສົ່ງອອກມີມູນຄ່າເພີ່ມຕໍ່າ, ການຜະລິດກະສິກຳຍັງກະແຈກກະຈາຍ ບໍ່ຕິດພັນສະໜິດແໜ້ນກັບອຸດສາຫະກຳປຸງແຕ່ງ ແລະ ການຕະຫຼາດ. ການລົງທຶນລັດຍັງບໍ່ມີຈຸດສຸມ, ບໍ່ມີປະສິດທິຜົນເທົ່າທີ່ຄວນ, ການປະຕິບັດວິໄນແຜນການ-ການເງິນຍັງເຮັດບໍ່ທັນເຂັ້ມງວດ. ວິສາຫະກິດເອກະຊົນ ໄດ້ຮັບການສົ່ງເສີມຫຼາຍຂຶ້ນ ແຕ່ຄວາມສາມາດແຂ່ງຂັນຍັງບໍ່ສູງ, ສະພາບແວດລ້ອມດ້ານການລົງທຶນ ຍັງບໍ່ສາມາດຕອບສະໜອງຄວາມຕ້ອງການຂອງການລົງທຶນເທົ່າທີ່ຄວນ.

(3) ການພັດທະນາເສດຖະກິດ ຍັງບໍ່ທັນສົມຄູ່ກັບການພັດທະນາວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ; ການກະຈາຍລາຍໄດ້ຍັງບໍ່ທົ່ວເຖິງ, ຍັງມີຄວາມແຕກໂຕນກັນລະຫວ່າງເຂດຊົນນະບົດ ແລະ ຕົວເມືອງ, ລະຫວ່າງເຂດແຄວ້ນ ແລະ ພາຍໃນເຂດແຄວ້ນດ້ວຍກັນ; ການຈັດຕັ້ງປະຕິບັດເປົ້າໝາຍ MDGs ມີຄວາມຄືບໜ້າ ແຕ່ກໍຍັງມີບາງຄາດໝາຍຍັງເປັນສິ່ງທ້າທາຍໃນການບັນລຸຕາມຄາດໝາຍທີ່ວາງໄວ້; ວັດທະນະທຳອັນດີງາມຂອງຊາດນັບມື້ຖືກເຊື່ອມຖອຍ; ການພັດທະນາຊັບພະຍາກອນມະນຸດທັງດ້ານຈຳນວນ ແລະ ຄຸນນະພາບຍັງບໍ່ທັນສົມຄູ່ກັບຄວາມຕ້ອງການຂອງການພັດທະນາ, ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃນຫຼາຍກໍລະນີຍັງມີລັກສະນະບໍ່ຍືນຍົງ, ນຳໃຊ້ແບບຟູມເຟືອຍ ແລະ ບໍ່ເປັນມິດຕໍ່ສິ່ງແວດລ້ອມ.

(4) ປະຕິບັດການປົກຄອງ ແລະ ການບໍລິຫານລັດດ້ວຍກົດໝາຍ ຍັງບໍ່ທັນເຂັ້ມງວດ ແລະ ສັກສິດ ເຮັດໃຫ້ການດຳເນີນກົນໄກເສດຖະກິດຕະຫຼາດຍັງບໍ່ທັນໄດ້ດີເທົ່າທີ່ຄວນ; ເກີດມີຊ່ອງຫວ່າງຂອງການສໍ້ລາດບັງຫຼວງເພີ່ມຂຶ້ນໃນຫຼາຍຮູບການ ແລະ ລະດັບຕ່າງໆ ເຊິ່ງໄດ້ສົ່ງຜົນກະທົບຕໍ່ຄວາມເຊື່ອໝັ້ນ ແລະ ຄວາມສັດທາຂອງປະຊາຊົນຕໍ່ລະບອບການປົກຄອງຂອງພັກ ແລະ ລັດເຮົາ. ສະຕິການເຄົາລົບກົດໝາຍໃນສັງຄົມລວມທັງການປະຕິບັດຂອງເຈົ້າໜ້າທີ່ລັດນັ້ນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ.

(5) ການກະກຽມຄວາມພ້ອມ ເພື່ອເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ຍັງເຮັດບໍ່ໄດ້ດີ; ການໂຄສະນາເຜີຍແຜ່ນະໂຍບາຍການເຊື່ອມໂຍງດ້ານການຄ້າຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນເຮັດໃຫ້ຜູ້ປະກອບການຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບການເຊື່ອມໂຍງ ແລະ ກົນໄກໃນການຮັບມືທີ່ເໝາະສົມກັບການເປີດກວ້າງທີ່ເພີ່ມຂຶ້ນ; ການນຳໃຊ້ກາລະໂອກາດຈາກສິດທິພິເສດທາງດ້ານການຄ້າຂອງປະເທດຄູ່ເຈລະຈາ ແລະ ການນຳໃຊ້ໂອກາດຈາກທີ່ຕັ້ງເປັນໃຈກາງຂອງອະນຸພາກພື້ນແມ່ນ້ຳຂອງຍັງຈຳກັດ.

## 1.4 ບາງບົດຮຽນທີ່ຖອດຖອນໄດ້

(1) ການມີສະຖຽນລະພາບທາງດ້ານການເມືອງ, ມີຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າພາຍໃນຊາດ ແມ່ນເປັນພື້ນຖານສຳຄັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເຂັ້ມແຂງ.

(2) ການຜັນຂະຫຍາຍແນວທາງນະໂຍບາຍ ແລະ ມະຕິຂອງພັກ-ລັດ ອອກເປັນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງານ ແລະ ໂຄງການຢ່າງລະອຽດພ້ອມທັງມີຄວາມກົມກຽວລະຫວ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນເປັນກຸນແຈສຳຄັນໃນການຈັດຕັ້ງປະຕິບັດແຜນ ແລະ ເປົ້າໝາຍການພັດທະນາໃຫ້ປະສົບຜົນສຳເລັດເປັນຢ່າງດີ.

(3) ການພັດທະນາເສດຖະກິດ-ສັງຄົມ ໂດຍອີງຕາມກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງ ແລະ ດັດສົມຈາກພາກລັດຢ່າງເປັນລະບົບຄົບຊຸດແມ່ນເປັນປັດໄຈສຳຄັນໃຫ້ແກ່ການພັດທະນາຕາມທິດສັງຄົມນິຍົມ.

(4) ການເຕີບໂຕຂອງເສດຖະກິດໂດຍອີງໃສ່ຂະແໜງຊັບພະຍາກອນທຳມະຊາດແມ່ນມີລັກສະນະບໍ່ຍືນຍົງ. ສະນັ້ນ, ການພັດທະນາເສດຖະກິດໃນຕໍ່ໜ້າ ຄວນໃຫ້ຄວາມສຳຄັນຫຼາຍຂຶ້ນຕໍ່ກັບຂະແໜງທີ່ບໍ່ນຳໃຊ້ຊັບພະຍາກອນທຳມະຊາດໂດຍສະເພາະແມ່ນເລັ່ງໃສ່ພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ໂດຍເອົາໃຈໃສ່ສ້າງສະພາບແວດລ້ອມທາງທຸລະກິດ ແລະ ສ້າງເງື່ອນໄຂໃນການເຂົ້າເຖິງແຫຼ່ງທຶນ, ເລັ່ງພັດທະນາດ້ານກະສິກຳສະອາດ ເພື່ອຕອບສະໜອງໃນການຜະລິດສິນຄ້າອຸດສາຫະກຳ.

(5) ການລົງທຶນຂອງລັດ ແລະ ການສົ່ງເສີມການລົງທຶນຈາກເອກະຊົນພາຍໃນ ແລະ ຈາກຕ່າງປະເທດຄວນມີການຄຸ້ມຄອງ ແລະ ນຳໃຊ້ທຶນດັ່ງກ່າວຢ່າງມີຈຸດສຸມ ເຊັ່ນ: ການລົງທຶນຂອງລັດຄວນສຸມເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນໃຫ້ແກ່ການພັດທະນາ, ເອົາໃຈໃສ່ໃນການລະດົມທຶນຈາກການຊ່ວຍເຫຼືອ ແລະ ກູ້

ຢືມຈາກຕ່າງປະເທດ (ODA) ແລະ ນຳໃຊ້ທຶນຢ່າງເປັນເຈົ້າການທີ່ມີຄວາມຮັບຜິດຊອບສູງ, ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນສູງ. ສຳລັບວຽກງານສົ່ງເສີມການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃນການເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ, ມີການກະກຽມນິຕິກຳຢ່າງລະອຽດຮອບຄອບ ແລະ ຄົບຊຸດ, ມີການຕິດຕາມກວດກາການຈັດຕັ້ງປະຕິບັດຕົວຈິງ ແລະ ມີການສະຫຼຸບ, ລາຍງານການຖອດຖອນບົດຮຽນຢ່າງເປັນລະບົບປົກກະຕິ.

(6) ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ຕ້ອງຕິດພັນກັບການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດທີ່ເຮັດຢ່າງຮອບດ້ານຕາມ 4 ເນື້ອໃນ ແລະ 4 ຄາດໝາຍ ເປັນລະບົບຕໍ່ເນື່ອງ, ມີຈຸດສຸມ, ຊຸດຄົ້ນ, ນຳໃຊ້ທ່າແຮງ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງທຸກຊັ້ນຄົນ, ພ້ອມທັງຖືເອົາວຽກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດກາຍເປັນສະໜາມຮົບອັນດັບໜຶ່ງຂອງການພັດທະນາປະເທດ, ເປັນປັດໄຈພື້ນຖານໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕາມທິດ 3 ສ້າງ.

(7) ການຜະລິດເປັນສິນຄ້າທີ່ຕິດພັນກັບການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ, ຄຽງຄູ່ກັບການນຳໃຊ້ເຕັກນິກທັນສະໄໝທີ່ເໝາະສົມເປັນປັດໄຈສຳຄັນທີ່ຊຸກຍູ້ໃນການຜະລິດສິນຄ້າ. ການສ້າງຕ່ອງໂສ້ການຜະລິດ ແລະ ສຳພັນກັບເສດຖະກິດລະຫວ່າງທ້ອງຖິ່ນເຂົ້ານຳກັນເປັນສິ່ງທີ່ຈຳເປັນໃນການຂະຫຍາຍການຜະລິດເປັນສິນຄ້າໃນເງື່ອນໄຂການເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

(8) ການຄຸ້ມຄອງລັດແຫ່ງກົດໝາຍ ແມ່ນການປັບປຸງ ແລະ ສ້າງນິຕິກຳໃຫ້ມີຄວາມສອດຄ່ອງກັບສະພາບການປັດຈຸບັນເພື່ອເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງປະເທດແມ່ນມີຄວາມຈຳເປັນ, ການປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ ແລະ ສອດຄ່ອງກັບເງື່ອນໄຂຕົວຈິງເປັນສິ່ງທີ່ຈຳເປັນຢ່າງຍິ່ງ. ພ້ອມທັງກຳນົດພາລະບົດບາດ ແລະ ໜ້າທີ່ຂອງແຕ່ລະຂັ້ນຢ່າງຈະແຈ້ງ.

(9) ການຮ່ວມມື ແລະ ເຊື່ອມໂຍງດ້ານເສດຖະກິດກັບປະເທດເພື່ອນມິດ, ພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ.

(10) ການບຸກທະລຸທາງດ້ານຈິນຕະນາການແມ່ນມີຄວາມຈຳເປັນທີ່ສຸດ ແລະ ຈະຕ້ອງໄດ້ສືບຕໍ່ປະຕິບັດໃຫ້ສຳເລັດ. ການປະສານງານທີ່ສອດຄ່ອງ, ກົມກຽວ ແລະ ເປັນລະບົບລະຫວ່າງຂະແໜງການຂັ້ນສູນກາງ, ລະຫວ່າງຂະແໜງການ ແລະ ທ້ອງຖິ່ນ ແລະ ແຂວງກັບແຂວງ, ຂະແໜງການຕາມສາຍຕັ້ງແມ່ນມີຄວາມຈຳເປັນຕໍ່ການບັນລຸເປົ້າໝາຍລວມຂອງປະເທດ.

(11) ການປັບປຸງລະບົບການຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ສອດຄ່ອງກັບສະພາບການຕົວຈິງໃນແຕ່ລະໄລຍະ.

# ພາກທີ II: ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025)

## 2.1 ສະພາບແວດລ້ອມສາກົນ, ຈຸດພິເສດ ແລະ ສະພາວະຄວາມເປັນຈິງພາຍໃນປະເທດ

### 2.1.1 ສະພາບແວດລ້ອມສາກົນ

**ກ) ຂໍ້ສະດວກ/ກາລະໂອກາດ:**

ໃນໄລຍະ 15 ປີ (2016-2030) ຂ້າງໜ້ານີ້, ຄາດຄະເນວ່າສະພາບແວດລ້ອມສາກົນ ຈະເປັນກາລະໂອກາດ ແລະ ຂໍ້ສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາດັ່ງນີ້:

- ເສດຖະກິດຂອງໂລກໃນຕໍ່ໜ້າ ຈະມີທ່າອ່ຽງຂະຫຍາຍຕົວຄ່ອຍໆດີຂຶ້ນ ເນື່ອງຈາກຄວາມພະຍາຍາມແກ້ໄຂບັນຫາເສດຖະກິດໂລກໃນປັດຈຸບັນຂອງປະເທດຕ່າງໆ ແລະ ສາກົນ; ດັ່ງນັ້ນ, ການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍຂອງ ສປປ ລາວ ເຮົາໃນຕໍ່ໜ້າ ກໍຈະເພີ່ມຂຶ້ນໄວເມື່ອທຽບໃສ່ຊຸມປີຜ່ານມາ ໂດຍສະເພາະແມ່ນການຮ່ວມມືໃນລະດັບພາກພື້ນ.

- ຕະຫຼາດສາກົນ ສຳລັບປະເທດເຮົາຈະຂະຫຍາຍກວ້າງອອກເປັນຕົ້ນແມ່ນຕະຫຼາດໃນເຂດການຄ້າເສລີອາ ຊຽນ, ອາຊຽນ+1 (ສປຈີນ), +2 (ສເກົາຫຼີ), +3 (ຍີ່ປຸ່ນ), +6 (ອິນເດຍ, ອົດສະຕຼາລີ, ນິວຊີແລນ).

- ການເປັນສະມາຊິກຂອງອົງການການຄ້າໂລກ ແລະ ເປັນສ່ວນໜຶ່ງຂອງສະມາຄົມເສດຖະກິດອາຊຽນໃນຕໍ່ໜ້າ ຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ ສປປ ລາວ ໃນດ້ານການເປັນຖານການຜະລິດຮັບໃຊ້ຕະຫຼາດອາຊຽນ ເຊິ່ງຈະເຮັດໃຫ້ການລົງທຶນໂດຍກົງຂອງຕ່າງປະເທດມີທ່າອ່ຽງເພີ່ມຂຶ້ນ.

- ຂະບວນການປະຕິວັດດ້ານວິທະຍາສາດ-ເຕັກໂນໂລຊີ ໂດຍສະເພາະແມ່ນເຕັກໂນໂລຊີຂໍ້ມູນຂ່າວສານຈະສືບຕໍ່ຂະຫຍາຍຕົວຢ່າງແຂງແຮງ ແລະ ການຫັນໄປສູ່ເສດຖະກິດສັງຄົມພູມປັນຍາຈະມີທ່າອ່ຽງກວ້າງຂວາງໃນຂອບເຂດທົ່ວໂລກຫຼາຍຂຶ້ນເຊິ່ງຈະເຮັດໃຫ້ ສປປ ລາວ ສາມາດຍາດແຍ່ງເອົາມານຳໃຊ້ເຂົ້າໃນການພັດທະນາປະເທດໃຫ້ເກີດປະໂຫຍດສູງສຸດໄດ້.

- ການເຊື່ອມໂຍງດ້ານເສດຖະກິດສາກົນ ໄດ້ເປີດໂອກາດໃຫ້ປະເທດເຮົາສະແດງບົດບາດຂອງຕົນໃນເວທີສາກົນນັບມື້ຫຼາຍຂຶ້ນ, ສ້າງເງື່ອນໄຂໃຫ້ ສປປ ລາວ ສາມາດເຂົ້າຫາກົນໄກການແກ້ໄຂຂໍ້ຂັດແຍ່ງຂອງສາກົນ, ປະກອບສ່ວນເຂົ້າໃນການກຳນົດລະບຽບການຄ້າ ແລະ ການລົງທຶນ ທັງເປັນການປັບປຸງລະບຽບກົດໝາຍພາຍໃນໃຫ້ສອດຄ່ອງກັບມາດຕະຖານຂອງສາກົນ ເພື່ອເປັນປັດໄຈຕົ້ນຕໍໃນການຊ່ວຍດຶງດູດການລົງທຶນຈາກຕ່າງປະເທດ.

**ຂ) ສິ່ງທ້າທາຍ:**

- ສະພາບການຂອງໂລກ ຍັງສືບຕໍ່ຜັນແປຢ່າງສັບສົນ, ການປະທະກັນດ້ວຍກຳລັງອາວຸດ, ການກໍ່ການຮ້າຍທີ່ເກີດຂຶ້ນຢູ່ໃນບາງປະເທດໃນໂລກ ຈະສົ່ງຜົນກະທົບເຖິງເສດຖະກິດຂອງພາກພື້ນ ແລະ ປະເທດເຮົານັ້ນ ແມ່ນເປັນສິ່ງທີ່ຫຼີກລ້ຽງໄດ້ຍາກ.

- ຂະບວນການເຊື່ອມໂຍງ ແລະ ຫັນເປັນສາກົນຕ່າງໆ ເຊິ່ງຮຽກຮ້ອງໃຫ້ພວກເຮົາຕ້ອງໄດ້ມີການຫັນປ່ຽນຢ່າງຕັ້ງໜ້າ ເພື່ອຍາດແຍ່ງໃຫ້ໄດ້ຜົນປະໂຫຍດສູງສຸດ, ຕ້ານ ແລະ ຮັບມືກັບດ້ານຫຍໍ້ທໍ້ຕ່າງໆຈາກການເຊື່ອມໂຍງ ເປັນຕົ້ນແມ່ນຜົນກະທົບຕໍ່ຄວາມສາມາດການຍາດແຍ່ງແຂ່ງຂັນຂອງທຸລະກິດພາຍໃນປະເທດ, ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ, ຜົນກະທົບຕໍ່ວັດທະນະທຳ-ສັງຄົມ, ຄວາມສ່ຽງສຳລັບກຸ່ມທີ່ບອບບາງກວ່າໝູ່ (ໂດຍສະເພາະແມ່ຍິງ ແລະ ໄວໜຸ່ມ) ຈາກການໃຊ້ຄວາມຮຸນແຮງ, ການຄ້າມະນຸດ, ການຂູດຮີດທາງເພດ ແລະ ປະກົດການຫຍໍ້ທໍ້ອື່ນໆທີ່ຕາມມາຈາກຂະບວນການເຊື່ອມໂຍງດັ່ງກ່າວ.

- ການຍາດແຍ່ງແຂ່ງຂັນກັນພັດທະນາ ໂດຍສະເພາະແມ່ນການດຶງດູດການລົງທຶນຂອງຕ່າງປະເທດ, ການຄ້າເສລີຢູ່ໃນຂົງເຂດນີ້ ແລະ ຂົງເຂດອື່ນໆຂອງໂລກ ຈະມີລັກສະນະຂ້ຽວຂາດ ແລະ ຊິງດີຊິງເດັ່ນກັນຫຼາຍຂຶ້ນ

ກວ່າເກົ່າ ເພື່ອຜົນປະໂຫຍດຂອງແຕ່ລະກຸ່ມ ແລະ ພັກຝ່າຍ ໂດຍອີງໃສ່ອຳນາດຕໍ່ລອງທີ່ຕົນເອງມີຢູ່.

- ການປ່ຽນແປງນະໂຍບາຍທາງເສດຖະກິດ-ການເມືອງຂອງປະເທດມະຫາອຳນາດ ແລະ ວິກິດການທາງດ້ານເສດຖະກິດ-ການເງິນມັກຈະເກີດຂຶ້ນ ຍ້ອນຄວາມບໍ່ສົມດຸນຂອງລະບົບເສດຖະກິດ-ການເງິນໂລກໃນແຕ່ລະໄລຍະ ຈະສົ່ງຜົນກະທົບ ແລະ ສ້າງຄວາມກົດດັນຕໍ່ເສດຖະກິດຂອງປະເທດເຮົາ (ຕົວຢ່າງ: ລາຄານ້ຳມັນ, ຄ່າເງິນ, ການອຸດໜູນລາຄາ ແລະ ກຳແພງກີດຂວາງທີ່ບໍ່ແມ່ນພາສີຕ່າງໆຕໍ່ສິນຄ້າຂອງປະເທດເຮົາ).

- ການປ່ຽນແປງຂອງດິນຟ້າອາກາດ ເປັນຕົ້ນແມ່ນອາກາດໂລກຮ້ອນຂຶ້ນ, ອາກາດປົນເປື້ອນດ້ອຍສານພິດ, ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ແຜ່ນດິນໄຫວ, ລົມພະຍຸຮ້າຍແຮງມັກເກີດຂຶ້ນເລື້ອຍໆຢູ່ຫຼາຍປະເທດໃນໂລກ ແລະ ຢູ່ປະເທດເຮົາ ຈະເປັນສິ່ງທ້າທາຍບໍ່ໜ້ອຍຕໍ່ກັບການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃນຕໍ່ໜ້າ.

### 2.1.2 ຈຸດພິເສດ ແລະ ສະພາວະຄວາມເປັນຈິງຢູ່ພາຍໃນປະເທດ

#### 2.1.2.1 ທ່າແຮງບົ່ມຊ້ອນ/ຂໍ້ສະດວກ:

**1) ສະຖຽນລະພາບທາງດ້ານການເມືອງ ແລະ ຄວາມສະຫງົບທາງດ້ານສັງຄົມ**

ປະເທດເຮົາເປັນປະເທດທີ່ມີພັກການເມືອງດຽວຄື: ພັກປະຊາຊົນປະຕິວັດລາວ ມີບົດຮຽນຕົວຈິງໃນການນຳພາປະເທດຊາດປະຕິບັດພາລະກິດຕໍ່ສູ້ປົດປ່ອຍປະເທດຊາດໃນໄລຍະກ່ອນ ແລະ ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດດ້ວຍໄຊຊະນະທີ່ຍິ່ງໃຫຍ່ຈົນມາຮອດປັດຈຸບັນ, ສະພາບການເມືອງຂອງປະເທດເຮົາມີສະຖຽນລະພາບຢ່າງໝັ້ນຄົງ, ສັງຄົມມີຄວາມສະຫງົບສຸກ, ປະຊາຊົນມີຄວາມສາມັກຄີປອງດອງກັນເປັນປຶກແຜ່ນ, ມີຄວາມຍຸຕິທຳ ແລະ ເປັນເອກະພາບກັນ.

**2) ພື້ນຖານທາງດ້ານເສດຖະກິດ**

ເສດຖະກິດແຫ່ງຊາດ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ໂຄງປະກອບເສດຖະກິດແຫ່ງຊາດໄດ້ຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ. <u>ດ້ານກະສິກຳ</u>: ກໍສາມາດຜະລິດໄດ້ ແລະ ຮັບປະກັນໄດ້ທາງດ້ານສະບຽງອາຫານຢ່າງພຽງພໍກັບຄວາມຕ້ອງການພາຍໃນ ແລະ ເລີ່ມມີສ່ວນເຫຼືອໄວ້ເປັນສິນຄ້າສົ່ງອອກຈຳນວນໜຶ່ງ. <u>ດ້ານການຜະລິດອຸດສາຫະກຳ:</u> ກໍສາມາດສ້າງໄດ້ອຸດສາຫະກຳປຸງແຕ່ງຈຳນວນໜຶ່ງ ເຊັ່ນ: ໂຮງງານຊີມັງ, ໂຮງງານຜະລິດເຫຼັກກໍ່ສ້າງ, ໂຮງງານເບຍ, ໂຮງງານນ້ຳອັດລົມ, ໂຮງງານປຸງແຕ່ງຜະລິດຕະພັນກະສິກຳຈຳນວນໜຶ່ງ... ແລະ ຂະແໜງອຸດສາຫະກຳພະລັງງານ ແລະ ບໍ່ແຮ່ກໍເຊັ່ນກັນ ຄື: ມີໂຮງງານໄຟຟ້າພະລັງນ້ຳ, ໂຮງງານໄຟຟ້າຖ່ານຫີນ ແລະ ລະບົບສາຍສົ່ງໄຟຟ້າທີ່ກວ້າງຂວາງສົມຄວນ, ມີໂຮງງານປຸງແຕ່ງແຮ່ຄຳ, ທອງແດງ ແລະ ເກືອໂປຕາສ... ແລະ <u>ດ້ານການບໍລິການ:</u> ກໍໄດ້ຮັບການພັດທະນາຢ່າງວ່ອງໄວຄື: ມີທະນາຄານທຸລະກິດທີ່ທັນສະໄໝ, ມີລະບົບຕາໜ່າງການຄ້າພາຍໃນ ແລະ ການຄ້າສາກົນກັບຫຼາຍປະເທດໃນໂລກ, ມີແຫຼ່ງທ່ອງທ່ຽວທີ່ເປັນມໍລະດົກໂລກ ແລະ ເປັນເອກະລັກຂອງຊາດທີ່ມີຊື່ສຽງລະດັບພາກພື້ນ ແລະ ສາກົນຫຼາຍແຫ່ງ.

ເສດຖະກິດມະຫາພາກມີສະຖຽນລະພາບທີ່ໜັກແໜ້ນ, ສາມາດຜ່ານຜ່າວິກິດການທາງດ້ານເສດຖະກິດ-ການເງິນໃນຂົງເຂດທີ່ເກີດຂຶ້ນໃນປີ 2007-2008 ແລະ ໄພນ້ຳຖ້ວມທີ່ຮ້າຍແຮງໃນແຕ່ລະປີ, ອັດຕາເງິນເຟີ້ກໍສາມາດຮັກສາໄດ້ໃນລະດັບໜຶ່ງຕົວເລກຕາມແຜນການທີ່ໄດ້ກຳນົດໄວ້, ອັດຕາແລກປ່ຽນລະຫວ່າງເງິນກີບທຽບກັບເງິນບາດ ແລະ ເງິນໂດລາໃນໄລຍະ 5 ປີຜ່ານມາກໍມີສະຖຽນລະພາບດີ (ເໜັງຕີງຢູ່ລະຫວ່າງ +5% ແລະ -5%.

ດ້ານພື້ນຖານໂຄງລ່າງ (ເປັນຕົ້ນແມ່ນຂົວທາງ) ໃນປັດຈຸບັນ (2015) ແມ່ນພວກເຮົາມີເສັ້ນທາງໃນທົ່ວປະເທດຍາວ ທັງໝົດ 36.831 ກິໂລແມັດ, ເພີ່ມຂຶ້ນ 320,27% ທຽບກັບປີ 1976; ມີເສັ້ນທາງຄົມມະນາຄົມທີ່ເຊື່ອມຕໍ່ລະຫວ່າງນະຄອນຫຼວງວຽງຈັນຫາທຸກໆແຂວງໃນທົ່ວປະເທດ, ພິເສດແມ່ນມີເສັ້ນທາງສາຍຂວາງເຊື່ອມຕໍ່ກັບ ສສ ຫວຽດນາມ ແລະ ໄທ ທີ່ເປັນເສັ້ນທາງຜ່ານຂອງພາກພື້ນ GMS, ເປັນຕົ້ນແມ່ນເສັ້ນທາງເລກ 9 ແລະ ທາງເລກ 3; ມີບັນດາເສັ້ນທາງຫຼວງແຫ່ງຊາດ ຕາມແລວທາງຕາເວັນອອກ-ຕາເວັນຕົກ ຄື: ທາງເລກ 8, ເລກ 12, ເລກ 6, ເລກ 7, ເລກ 15, ເລກ 16 ແລະ ເລກ 18 ເຊື່ອມຕັດກັບເສັ້ນທາງເໜືອ-ໃຕ້ ຄື: ເລກທີ 13 ແລະ ເລກ 1, ແລະ ກຳລັງກໍ່ສ້າງເສັ້ນທາງລົດໄຟອາຊີລະຫວ່າງຄຸນໝິງ-ສິງກະໂປຜ່ານ ສປປ ລາວ (ລະຫວ່າງນະຄອນຫຼວງ

ວຽງຈັນ-ບໍ່ເຕັນ); ໂຄງການກໍ່ສ້າງເສັ້ນທາງລົດໄຟລະຫວ່າງຂົວມິດຕະພາບແຫ່ງທີ 2 (ເມືອງໄກສອນພົມວິຫານ)-ບ້ານແດນສະຫວັນ (ຊາຍແດນລາວ-ຫວຽດນາມ), ເສັ້ນທາງລົດໄຟດັ່ງກ່າວນີ້ ເປັນໂຄງລ່າງພື້ນຖານທີ່ສຳຄັນຢ່າງຍິ່ງ ສຳລັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ໂດຍສະເພາະແມ່ນເພື່ອເຊື່ອມຕໍ່ ສປປ ລາວ ກັບບັນດາປະເທດອ້ອມຂ້າງ, ພາກພື້ນ ແລະ ສາກົນ, ແນໃສ່ການຫັນປະເທດຈາກທີ່ຕັ້ງທີ່ບໍ່ມີຊາຍແດນຕິດກັບທະເລມາເປັນປະເທດທີ່ມີເສັ້ນທາງເຊື່ອມຕໍ່ກັບທະເລ ແລະ ບັນດາປະເທດຕ່າງໆໃນພາກພື້ນ.

**3) ທ່າແຮງໄດ້ປຽບດ້ານທີ່ຕັ້ງຍຸດທະສາດຂອງປະເທດ**

ປະເທດເຮົາມີທີ່ຕັ້ງຢູ່ໃຈກາງຂອງອະນຸພາກພື້ນແມ່ນ້ຳຂອງຕອນລຸ່ມ (GMS), ມີຊາຍແດນຕິດຈອດກັບ 5 ປະເທດຄື: ສສຫວຽດນາມ, ສປຈີນ, ໄທ, ກຳປູເຈຍ ແລະ ມຽນມາ; ໃນນັ້ນ: ໄທ ແມ່ນຄູ່ການຄ້າຕົ້ນຕໍຂອງປະເທດເຮົາ, ຮອງລົງມາແມ່ນ ສສຫວຽດນາມ ແລະ ສປຈີນ. ສປປ ລາວ ເປັນປະເທດເຊື່ອມຕໍ່ທາງບົກທີ່ມີໄລຍະທາງສັ້ນທີ່ສຸດລະຫວ່າງ ສປຈີນ ແລະ ບັນດາປະເທດອາຊຽນ ເປັນຕົ້ນແມ່ນປະເທດໄທ, ກຳປູເຈຍ, ມາເລເຊຍ, ສິງກະໂປ ແລະ ອິນໂດເນເຊຍ. ພວກເຮົາສາມາດພັດທະນາຈຸດພິເສດທາງດ້ານທີ່ຕັ້ງຂອງປະເທດໃຫ້ເປັນປະເທດບໍລິການຜ່ານດ້ານການຄົມມະນາຄົມ-ຂົນສົ່ງທີ່ສະດວກ, ວ່ອງໄວ ແລະ ປອດໄພລະຫວ່າງບັນດາປະເທດອ້ອມຂ້າງ ແລະ ໄປຍັງປະເທດທີສາມ, ສ້າງໃຫ້ເປັນສູນກາງເສດຖະກິດ ແລະ ເປັນໃຈກາງການບໍລິການຂອງພາກພື້ນໄດ້.

**4) ທ່າແຮງບົ່ມຊ້ອນທີ່ໄດ້ປຽບດ້ານຊັບພະຍາກອນທຳມະຊາດ**

**ຊັບພະຍາກອນທີ່ດິນ**:

ສປປ ລາວ ຍັງມີເນື້ອທີ່ດິນກວ້າງຂວາງພໍສົມຄວນທີ່ຍັງບໍ່ທັນໄດ້ຂຸດຄົ້ນ ແລະ ນຳໃຊ້ໃຫ້ເປັນປະໂຫຍດທາງດ້ານເສດຖະກິດ-ສັງຄົມ ເຊິ່ງຍັງສາມາດຮອງຮັບການພັດທະນາຂະແໜງການເສດຖະກິດ-ສັງຄົມຕ່າງໆໄດ້ຫຼາຍຕື່ມອີກ. ຈຸດພິເສດຂອງດິນໃນປະເທດເຮົາ, ສ່ວນຫຼາຍແມ່ນຍັງເປັນທີ່ດິນທີ່ມີຄວາມອຸດົມສົມບູນ ແລະ ມີຄຸນນະພາບຕາມທຳມະຊາດ, ຍັງບໍ່ທັນຖືກທຳລາຍຈາກການນຳໃຊ້ເຄມີ ແລະ ການຊະລ້າງຂອງໜ້າດິນຫຼາຍປານໃດ.

**ຊັບພະຍາກອນປ່າໄມ້**:

ປະເທດເຮົາມີເນື້ອທີ່ປ່າດົງດິບປົກຫຸ້ມກວມປະມານ 40%[6] ຂອງເນື້ອທີ່ທົ່ວປະເທດ (2010), ເນື້ອທີ່ປ່າໄມ້ສະເລ່ຍຕໍ່ຫົວຄົນແມ່ນໄດ້ປະມານ 2,65 ເຮັກຕາ ເຊິ່ງຖືວ່າສູງກວ່າໝູ່ຢູ່ໃນຂົງເຂດພາກພື້ນນີ້ (ສສ ຫວຽດນາມ 1,57 ເຮັກຕາ; ກຳປູເຈຍ 0,77 ເຮັກຕາ; ອິນໂດເນເຊຍ 0,41 ເຮັກຕາ, ປະເທດໄທ 0,23 ເຮັກຕາ ແລະ ສປຈີນ 0,15 ເຮັກຕາຕໍ່ຄົນ). ນອກນັ້ນ, ສປປ ລາວ ຍັງມີເຂດທີ່ມີທ່າແຮງຟື້ນຟູເປັນປ່າຄືນໄດ້ 34,75% ຂອງເນື້ອທີ່ທົ່ວປະເທດ.

**ຊັບພະຍາກອນນ້ຳ ແລະ ແຫຼ່ງນ້ຳ:**

ປະເທດເຮົາມີທ່າແຮງບົ່ມຊ້ອນທາງດ້ານຊັບພະຍາກອນນ້ຳຢ່າງຫຼວງຫຼາຍ, ໃນນັ້ນ: 32% ຂອງປະລິມານນ້ຳໃນແມ່ນ້ຳຂອງທັງໝົດແມ່ນນ້ຳທີ່ໄຫຼມາຈາກ ສປປ ລາວ. ໃນແຕ່ລະປີແຫຼ່ງນ້ຳທັງໝົດມີ 190 ກິໂລແມັດກ້ອນ (ເທົ່າກັບ 1,7% ຂອງປະລິມານລວມຂອງທະວີບອາຊີທີ່ບໍ່ນັບລວມເອົາບັນດາປະເທດຕາເວັນອອກກາງ); ສະເລ່ຍຕໍ່ຫົວຄົນແມ່ນເທົ່າກັບ 34.435 ແມັດກ້ອນ (ເກືອບເທົ່າ 10,6 ເທື່ອຂອງລະດັບສະເລ່ຍໃນທະວີບອາຊີ, 10,5 ເທື່ອຂອງປະເທດໄທ, 7,5 ເທື່ອຂອງ ສສ ຫວຽດນາມ, 3,9 ເທື່ອຂອງກຳປູເຈຍ). ສັງລວມແລ້ວ, ໃນແຕ່ລະປີຊັບພະຍາກອນນ້ຳທີ່ໄດ້ເກີດຂຶ້ນເອງຈາກທຳມະຊາດຢູ່ພາຍໃນປະເທດເຮົາລວມກັບສາຍນ້ຳຈາກປະເທດໃກ້ຄຽງທີ່ໄຫຼເຂົ້າສູ່ປະເທດລາວ ແມ່ນ 334 ກິໂລແມັດກ້ອນ; ສະເລ່ຍໃສ່ຫົວຄົນແມ່ນ 60.318 ແມັດກ້ອນ (ເກືອບເທົ່າ 9,5 ເທື່ອຂອງປະເທດໄທ, 5,4 ເທື່ອຂອງປະເທດສສຫວຽດນາມ, 1,7 ເທື່ອຂອງປະເທດກຳປູເຈຍ).

---

[6] ຂໍ້ມູນຈາກ ກະຊວງກະສິກຳ ແລະ ປ່າໄມ້. 2012. ບົດລາຍງານ ການສຳຫລວດອັດຕາປົກຫຸ້ມປ່າໄມ້ 2010.

ທ່າແຮງດ້ານແຫຼ່ງນ້ຳດັ່ງກ່າວນີ້ ເປັນເງື່ອນໄຂອັນດີ ສຳລັບການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຢູ່ຫຼາຍແຫ່ງ, ເຮັດໃຫ້ ສປປ ລາວ ມີຄວາມສາມາດບົ່ມຊ້ອນໃນການກໍ່ສ້າງແຫຼ່ງກຳເນີດໄຟຟ້າພະລັງນ້ຳທັງໝົດໄດ້ປະມານ 23.000 ເມກາວັດ; ໃນປັດຈຸບັນພວກເຮົາຫາກໍ່ໄດ້ນຳໃຊ້ພຽງປະມານ 11% ຂອງທ່າແຮງບົ່ມຊ້ອນທັງໝົດທີ່ມີຢູ່ (ບໍ່ນັບໄຟຟ້າຄວາມຮ້ອນຈາກຖ່ານຫີນ, ໄຟຟ້າພະລັງງານລົມ, ໄຟຟ້າແສງຕາເວັນ ແລະ ອື່ນໆ).

ນອກຈາກນັ້ນ, ແຫຼ່ງນ້ຳຍັງມີຄວາມສຳຄັນຫຼາຍ ສຳລັບການບໍລິໂພກ, ການໃຊ້ສອຍໃນຊີວິດປະຈຳວັນ, ການລ້ຽງສັດ, ການປະມົງ, ການເດີນເຮືອ, ການທ່ອງທ່ຽວ (ແມ່ນ້ຳລຳເຊ, ນ້ຳຕົກຕາດ, ແກ້ງ, ໜອງ, ຄອງ, ບຶງ...) ແລະ ອື່ນໆ.

**ຊັບພະຍາກອນແຮ່ທາດ:**

ປັດຈຸບັນ, ການສຳຫຼວດແຮ່ທາດຂັ້ນພື້ນຖານຂອງພວກເຮົາແມ່ນຍັງບໍ່ທັນສຳເລັດທົ່ວປະເທດເທື່ອ, ສ່ວນການສຳຫຼວດລະອຽດກໍມີພຽງບາງກິດຈະການແຮ່ທາດທີ່ບໍລິສັດລົງທຶນເປັນຜູ້ສຳຫຼວດເອງເທົ່ານັ້ນ. ສະນັ້ນ, ຈຶ່ງຍັງບໍ່ທັນສາມາດກຳນົດໄດ້ຢ່າງຄົບຖ້ວນເທື່ອວ່າມີແຫຼ່ງແຮ່ທາດຊະນິດໃດແດ່ຢູ່ໃນພື້ນດິນຂອງປະເທດເຮົາ ແລະ ມີປະລິມານສະສົມຫຼາຍປານໃດ. ຕາມຂໍ້ມູນການສຳຫຼວດທີ່ຜ່ານມາ ໄດ້ພົບເຫັນແຮ່ທາດຈຳນວນໜຶ່ງ ເຊັ່ນ: ຄຳ, ທອງ, ເງິນ, ກົ່ວ, ຊືນ, ສັງກະສີ, ຫີນກາວ, ບົກຊິດ, ໂປຕາສ໌, ຖ່ານຫີນ, ແກ້ວປະເສີດ, ອັງຕີມອນ, ແຮ່ເຫຼັກ, ເລຕາລິດ ແລະ ອື່ນໆ... ເຊິ່ງໃນປັດຈຸບັນໄດ້ຂຸດຄົ້ນ ແລະ ປຸງແຕ່ງບາງແຮ່ທາດທີ່ສຳຄັນຈຳນວນໜຶ່ງເທົ່ານັ້ນ.

ຮອດທ້າຍປີ 2011, ໄດ້ມີບັນດາບໍລິສັດລົງທຶນດ້ານບໍ່ແຮ່ຈາກພາຍໃນ ແລະ ຕ່າງປະເທດທີ່ມີສັນຍາຂຸດຄົ້ນແຮ່ທາດທີ່ສຳຄັນຕໍ່ເສດຖະກິດແຫ່ງຊາດ ຈຳນວນ 97 ກິດຈະການ (ໂຄງການ), ມີເນື້ອທີ່ຂຸດຄົ້ນທັງໝົດ 2.749 ກິໂລຕາແມັດ, ກວມເອົາ 1,16% ຂອງເນື້ອທີ່ທົ່ວປະເທດ. ບັນດາໂຄງການດັ່ງກ່າວ ໄດ້ກາຍເປັນແຫຼ່ງການຂະຫຍາຍຕົວທີ່ສຳຄັນຂອງເສດຖະກິດແຫ່ງຊາດ, ເປັນການສ້າງລາຍຮັບເຂົ້າງົບປະມານຂອງລັດຢູ່ໃນອັນດັບ ຕົ້ນໆ ແລະ ເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນບັນດາເຜົ່າ. ສ່ວນເນື້ອທີ່ຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນທີ່ລັດຖະບານໄດ້ອະນຸມັດແລ້ວນັ້ນມາຮອດປັດຈຸບັນແມ່ນກວມເອົາປະມານ 28% ຂອງເນື້ອທີ່ທົ່ວປະເທດໂດຍສ່ວນໃຫຍ່ແມ່ນຍັງຢູ່ໃນຂັ້ນຕອນການຊອກຄົ້ນ ແລະ ສຳຫຼວດ.

**5) ທ່າແຮງບົ່ມຊ້ອນດ້ານແຫຼ່ງທ່ອງທ່ຽວ**

ປະເທດເຮົາມີທ່າແຮງບົ່ມຊ້ອນທາງຊັບພະຍາກອນທ່ອງທ່ຽວດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ເຊັ່ນ: ມໍລະດົກໂລກຫຼວງພະບາງ ເຊິ່ງໄດ້ຮັບການຍ້ອງຍໍຈາກນັກທ່ອງທ່ຽວຫຼາຍປະເທດໃນໂລກວ່າເປັນປະເທດທີ່ໜ້າທ່ອງທ່ຽວທີ່ສຸດໃນໂລກ, ມໍລະດົກໂລກວັດພູຈຳປາສັກ, ທົ່ງໄຫຫີນຊຽງຂວາງ, ວັດວາອາຮາມ, ວັດທະນາທຳຮີດຄອງປະເພນີ ແລະ ວິຖີຊີວິດຂອງປະຊາຊົນລາວບັນດາເຜົ່າ, ນ້ຳຕົກຕາດ, ຖ້ຳ, ປ່າສະຫງວນ, ພູຜາ, ປ່າໄມ້ຂຽວງາມຕະຫຼອດປີ, ອາກາດສົດ ແລະ ອື່ນໆ.

ປັດຈຸບັນ, ຊັບພະຍາກອນທ່ອງທ່ຽວຢູ່ປະເທດເຮົາ ຍັງບໍ່ທັນໄດ້ຮັບການພັດທະນາໃຫ້ເປັນລະບົບຄົບຊຸດເທື່ອເປັນຕົ້ນແມ່ນການສ້າງສິ່ງອຳນວຍຄວາມສະດວກ, ການບໍລິການທີ່ໄດ້ມາດຕະຖານ ແລະ ການໂຄສະນາ. ການພັດທະນາຂະແໜງປິ່ນອ້ອມການທ່ອງທ່ຽວ ກໍ່ຍັງບໍ່ທັນເປັນລະບົບຄົບຊຸດ, ຍັງມີຊັບພະຍາກອນທ່ອງທ່ຽວຫຼາຍແຫ່ງຢູ່ເຂດຫ່າງໄກສອກຫຼີກ ທີ່ຍັງບໍ່ທັນໄດ້ຮັບການສຳຫຼວດ ແລະ ບຸກເບີກເສັ້ນທາງໄປເຖິງ. ສະນັ້ນ, ຈຶ່ງເຫັນວ່າໂອກາດ ແລະ ທ່າແຮງບົ່ມຊ້ອນໃນການພັດທະນາຊັບພະຍາກອນທ່ອງທ່ຽວຂອງລາວເຮົາແມ່ນຍັງມີຫຼວງຫຼາຍ.

**6) ທ່າແຮງດ້ານຊັບພະຍາກອນມະນຸດ**

ໃນປີ 2015, ພົນລະເມືອງລາວມີປະມານ 6,5 ລ້ານຄົນ ໂດຍສ່ວນໃຫຍ່ແມ່ນເປັນພົນລະເມືອງໜຸ່ມທີ່ມີອາຍຸຕ່ຳກວ່າ 20 ປີ ກວມເອົາຫຼາຍກວ່າ 48% ຂອງຈຳນວນພົນລະເມືອງທັງໝົດ; ໃນນັ້ນ, ພົນລະເມືອງໃນກຸ່ມອາຍຸ 0-14 ປີ ມີປະມານ 2,34 ລ້ານຄົນ (ຍິງ 1,1 ລ້ານຄົນ), ກຸ່ມອາຍຸ 15-64 ປີ ປະມານ 4,04 ລ້ານຄົນ (ຍິງ 2,03 ລ້ານຄົນ) ແລະ ຮອດປີ 2015, ພວກເຮົາຈະມີພົນລະເມືອງໃນກຸ່ມອາຍຸ 0-14 ປີ ຫຼຸດລົງເປັນ 2,32 ລ້ານ

ຄົນ (ຍິງ 1,15 ລ້ານຄົນ), ກຸ່ມອາຍຸ 15-64 ປີ ເພີ່ມຂຶ້ນເປັນ 4,16 ລ້ານຄົນ (ຍິງ 2,09 ລ້ານຄົນ), ກຸ່ມອາຍຸ 65 ປີ ຂຶ້ນໄປ ເພີ່ມຂຶ້ນເປັນ 253 ພັນຄົນ (ຍິງ 137 ພັນຄົນ).

ສໍາລັບປະຊາກອນໃນເກນອາຍຸອອກແຮງງານ (15-64 ປີ) ມີທ່າອ່ຽງເພີ່ມຂຶ້ນຈາກ 57% ໃນປີ 2005 ແລະ ຈະເພີ່ມຂຶ້ນເປັນ 62% ໃນປີ 2015; ສ່ວນປະຊາກອນອາຍຸ 65 ປີ ຂຶ້ນໄປ ມີປະມານ 4%. ຈາກຕົວເລກດັ່ງກ່າວສະແດງໃຫ້ເຫັນວ່າປະຊາກອນລາວໃນເກນອາຍຸອອກແຮງງານ (15-64 ປີ) ຈະເປັນກໍາລັງແຮງງານທີ່ເຂັ້ມແຂງສໍາລັບການພັດທະນາເສດຖະກິດໃນອະນາຄົດ. ນອກຈາກນັ້ນ, ປະຊາກອນໃນປະເທດເຮົາແມ່ນປະກອບດ້ວຍຫຼາຍຊົນເຜົ່າທີ່ມີວັດທະນະທໍາຮີດຄອງປະເພນີທີ່ຫຼາກຫຼາຍ ແລະ ແຕກຕ່າງກັນ ເຊິ່ງອັນນີ້ກໍຈະເປັນທ່າແຮງທີ່ສໍາຄັນໜຶ່ງຂອງການພັດທະນາປະເທດໃນຕໍ່ໜ້າ.

### 2.1.2.2 ສິ່ງທ້າທາຍ ແລະ ຂໍ້ຈໍາກັດ:

ໄປພ້ອມກັບບັນດາທ່າແຮງບົ່ມຊ້ອນທີ່ພວກເຮົາມີຄືດັ່ງກ່າວມານັ້ນ, ພວກເຮົາກໍຍັງມີບັນດາຂໍ້ຈໍາກັດ ແລະ ສິ່ງທ້າທາຍຕໍ່ການພັດທະນາຈໍານວນໜຶ່ງຄືດັ່ງນີ້:

1) ຄຸນນະພາບ ແລະ ປະລິມານທາງດ້ານຊັບພະຍາກອນມະນຸດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາຍັງຈໍາກັດຢູ່ ເຊັ່ນ: ການພັດທະນາຊັບພະຍາກອນມະນຸດໃຫ້ພຽງພໍທັງດ້ານປະລິມານ ແລະ ຄຸນນະພາບ, ແຕ່ແຮງງານລາວສ່ວນໃຫຍ່ (70% ຂອງແຮງງານທັງໝົດ) ແມ່ນຍັງເຮັດວຽກຢູ່ໃນຂະແໜງກະສິກໍາແບບແຮງງານຄອບຄົວກະແຈກກະຈາຍຢູ່ຕາມເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ເຮັດໃຫ້ການສະໜອງແຮງງານ ສໍາລັບໂຄງການພັດທະນາຕ່າງໆຍັງຂາດແຄນຫຼາຍ ເຊິ່ງຈໍາເປັນຕ້ອງໄດ້ນໍາເຂົ້າແຮງງານຈາກຕ່າງປະເທດເປັນຈໍານວນບໍ່ໜ້ອຍ ໂດຍສະເພາະແມ່ນຈາກ ສສຫວຽດນາມ. ປະເທດເຮົາຍັງບໍ່ທັນມີນັກບໍລິຫານ, ນັກວິທະຍາສາດ, ນັກຊ່ຽວຊານ, ກໍາມະກອນທີ່ມີສີມື ແລະ ວິຊາການທີ່ເກັ່ງພຽງພໍ ໂດຍສະເພາະໃນຂົງເຂດການຜະລິດ, ເຊິ່ງໃນຕົວຈິງແລ້ວແມ່ນຍັງອີງໃສ່ຊ່ຽວຊານຈາກຕ່າງປະເທດຫຼາຍ ເພື່ອຕອບສະໜອງຄວາມຕ້ອງການຂອງໂຄງການພັດທະນາຕ່າງໆ.

2) ແຫຼ່ງທຶນເພື່ອການພັດທະນາຂອງພວກເຮົາຍັງຈໍາກັດ ເຊິ່ງທຶນສ່ວນໃຫຍ່ແມ່ນຍັງອີງໃສ່ທຶນມາຈາກຕ່າງປະເທດເປັນຕົ້ນຕໍ ໂດຍສະເພາະແມ່ນການລົງທຶນໂດຍກົງ, ການກູ້ຢືມ ແລະ ການຊ່ວຍເຫຼືອລ້າຈາກຕ່າງປະເທດ. ການອີງໃສ່ແຫຼ່ງທຶນມາຈາກຕ່າງປະເທດຄືດັ່ງກ່າວນັ້ນ ໄດ້ກາຍເປັນສິ່ງທ້າທາຍຕໍ່ພາຍໃນຂອງພວກເຮົາ ເປັນຕົ້ນແມ່ນບັນຫາຄວາມເປັນເຈົ້າຕົນເອງ, ບັນຫາການຂຶ້ນກັບປັດໄຈພາຍນອກ, ບັນຫາສັງຄົມ, ບັນຫາການຄຸ້ມຄອງ, ບັນຫາຜົນປະໂຫຍດ ແລະ ອື່ນໆ. ພາຍຫຼັງປະເທດເຮົາສາມາດບັນລຸໄດ້ມາດຖານຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນປີ 2020 ແລະ ຂ້າມຜ່ານຈາກປະເທດດ້ອຍພັດທະນາຢ່າງຂາດຕົວ ໃນປີ 2025 ແລ້ວ, ບາງສິດທິພິເສດຂອງຄູ່ຮ່ວມພັດທະນາສາກົນທີ່ໃຫ້ແກ່ປະເທດດ້ອຍພັດທະນາສໍາລັບປະເທດເຮົາກໍຈະຄ່ອຍຫຼຸດໜ້ອຍຖອຍລົງເປັນກ້າວໆ.

3) ການພັດທະນາເສດຖະກິດທີ່ຂະຫຍາຍຕົວສູງ ແລະ ລາຍຮັບຂອງລັດຖະບານໃນໄລຍະຜ່ານມາ ຕົ້ນຕໍແມ່ນມາຈາກຊັບພະຍາກອນທໍາມະຊາດເປັນຫຼັກ ໂດຍສະເພາະແມ່ນການຂຸດຄົ້ນບໍ່ແຮ່ ແລະ ໄຟຟ້າພະລັງນໍ້າ, ແຕ່ລາຍຮັບຕົວຈິງຂອງປະຊາຊົນສ່ວນຫຼາຍພັດຍັງຕໍ່າ ເຊິ່ງສະແດງອອກຄືປະຊາຊົນຫຼາຍກວ່າ 70% ເອື່ອຍອີງໃສ່ຂະແໜງກະສິກໍາ ເພື່ອການທໍາມາຫາກິນລ້ຽງຊີບ. ແຕ່ໄລຍະ 15 ປີຜ່ານມານີ້, ຂະແໜງກະສິກໍາຂະຫຍາຍຕົວສະເລ່ຍພຽງແຕ່ 2,8% ຕໍ່ປີເທົ່ານັ້ນ, ໃນຂະນະທີ່ພົນລະເມືອງລາວເຮົາ ພັດເພີ່ມຂຶ້ນ 2,2% ຕໍ່ປີ ນັ້ນໄດ້ສະແດງໃຫ້ເຮົາເຫັນວ່າລາຍໄດ້ຂອງປະຊາຊົນທີ່ເອື່ອຍອີງນໍາຂະແໜງກະສິກໍາແມ່ນເພີ່ມຂຶ້ນໃນລະດັບຕໍ່າຫຼາຍ. ການພັດທະນາເສດຖະກິດທີ່ຍັງອາໃສຂະແໜງຊັບພະຍາກອນທໍາມະຊາດເປັນຫຼັກນັ້ນຍັງຈະພົບກັບບັນຫາທີ່ຕິດພັນກັບການພັດທະນາໃຫ້ມີຄວາມຍືນຍົງ ແລະ ສີຂຽວອີກດ້ວຍ.

4) ສະພາບການໄຫຼເຂົ້າຂອງທຶນ ໂດຍສະເພາະແມ່ນຈາກການສົ່ງອອກສິນຄ້າໃນຂະແໜງຊັບພະຍາກອນທໍາມະຊາດ, ການລົງທຶນໂດຍກົງຈາກຕ່າງປະເທດ ແລະ ເງິນຊ່ວຍເຫຼືອເພື່ອການພັດທະນາເປັນຈໍານວນຫຼວງຫຼາຍ

ອາດຈະມີທ່າອ່ຽງເຮັດໃຫ້ອັດຕາແລກປ່ຽນຕົວຈິງຂອງເງິນກີບແຂງຄ່າຂຶ້ນ, ກົດດັນໃຫ້ມີໄພເງິນເຟີ້ພາຍໃນ ແລະ ເຮັດໃຫ້ຄວາມສາມາດແຂ່ງຂັນຂອງອຸດສາຫະກຳປຸງແຕ່ງເພື່ອສົ່ງອອກຫຼຸດລົງ. ສະພາບດັ່ງກ່າວນີ້, ອາດຈະເປັນສິ່ງທ້າທາຍທີ່ຈຳກັດອັດຕາການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດໃນອະນາຄົດກໍເປັນໄດ້[7].

5) ຂໍ້ຈຳກັດ ແລະ ສິ່ງທ້າທາຍອື່ນໆ ເຊັ່ນ: ໂຄງລ່າງພື້ນຖານຍັງບໍ່ທັນພຽງພໍ ແລະ ສະດວກສະບາຍເທື່ອ, ຄ່າຂົນສົ່ງສິນຄ້າອອກ ແລະ ນຳເຂົ້າຈາກປະເທດທີສາມ ແມ່ນສູງຫຼາຍ ເມື່ອທຽບກັບປະເທດຕ່າງໆໃນພາກພື້ນ, ການເຊື່ອມຕໍ່ດ້ານຄົມມະນາຄົມທາງອາກາດໂດຍກົງກັບປະເທດທີ່ສາມຍັງບໍ່ຫຼາຍ ໂດຍສະເພາະແມ່ນຕ້ອງຜ່ານປະເທດໄທ ຫຼື ສສຫວຽດນາມ ເປັນສ່ວນໃຫຍ່. ກົນໄກການບໍລິຫານຄຸ້ມຄອງຍັງບໍ່ທັນລົ່ງລ່ຽນເທົ່າທີ່ຄວນ, ການກຽມພ້ອມ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນຍັງມີຂໍ້ຈຳກັດ, ຄວາມສາມາດແກ່ງແຍ່ງແຂ່ງຂັນທາງດ້ານການຄ້າກັບບັນດາປະເທດໃນພາກພື້ນ ແລະ ສາກົນຍັງຈຳກັດຫຼາຍ, ສະຕິເຄົາລົບລະບຽບກົດໝາຍຂອງພະນັກງານ ແລະ ປະຊາຊົນເຮົາຍັງບໍ່ເຂັ້ມງວດເທົ່າທີ່ຄວນ, ປະກົດການຫຍໍ້ທໍ້ດ້ານສັງຄົມຍັງແຜ່ຫຼາຍ, ຄວາມຍຸຕິທຳທາງສັງຄົມຍັງບໍ່ທັນຮັບປະກັນໄດ້ຢ່າງທົ່ວເຖິງເທົ່າທີ່ຄວນ ຄືຍັງມີກໍລະນີແມ່ຍິງ ແລະ ເດັກຍິງຖືກຕົວະຍົວະຫຼອກລວງໄປເຮັດວຽກຢູ່ຕ່າງປະເທດແບບຜິດກົດໝາຍ, ພວກເຂົາເຫຼົ່ານັ້ນ ຈຶ່ງຕົກເປັນເຫຍື່ອຂອງການໃຊ້ຄວາມຮຸນແຮງ, ການຄ້າມະນຸດ, ການຂູດຮີດທາງເພດ ແລະ ອື່ນໆ.

## 2.2 ວິໄສທັດຮອດປີ 2030

ໂດຍອີງໃສ່ສະພາບແວດລ້ອມສາກົນ, ຈຸດພິເສດ, ສະພາວະຄວາມເປັນຈິງ ແລະ ແນວທາງຍຸດທະສາດຂອງການພັດທະນາ ສປປ ລາວ ເຮົາ. ລັດຖະບານແຫ່ງ ສປປ ລາວ ຈຶ່ງໄດ້ວາງວິໄສທັດຂອງການພັດທະນາປະເທດຮອດປີ 2030 ໄວ້ດັ່ງນີ້:

ຮອດປີ 2030, ສປປ ລາວ ສ້າງໄດ້ບາດລ້ຽວໃໝ່ໃນການພັດທະນາໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງຕາມທິດເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ,[8]ລາຍໄດ້ແຫ່ງຊາດສະເລ່ຍຕໍ່ຫົວຄົນເພີ່ມຂຶ້ນຫຼາຍກວ່າ 4 ເທົ່າຂອງປີ 2015, ມີອຸດສາຫະກຳເສົາຄ້ຳ ແລະ ໂຄງລ່າງພື້ນຖານເສດຖະກິດທີ່ເຂັ້ມແຂງ ສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບຫຼາຍຂຶ້ນ; ສັງຄົມມີຄວາມສະຫງົບສຸກ, ຍຸຕິທຳ, ມີປະຊາທິປະໄຕ ແລະ ສີວິໄລ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນປຶກແຜ່ນ, ຄວາມແຕກໂຕນກັນດ້ານການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດ, ຊັ້ນຄົນຕ່າງໆໃນສັງຄົມຖືກຫຍັບໃກ້ເຂົ້າຫາກັນ, ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການຍົກລະດັບສູງຂຶ້ນ, ຊັບພະຍາກອນມະນຸດໄດ້ຮັບການພັດທະນາມີຄຸນນະພາບດີຂຶ້ນ, ປະຊາຊົນສາມາດເຂົ້າເຖິງການບໍລິການສັງຄົມທີ່ມີຄຸນນະພາບຢ່າງທົ່ວເຖິງ, ສິດທິຂອງພົນລະເມືອງມີການຮັບປະກັນດ້ວຍການຄຸ້ມຄອງລັດຕາມກົດໝາຍທີ່ສັກສິດ, ລະບອບການປົກຄອງຕາມທິດ 3 ສ້າງມີຄວາມເຂັ້ມແຂງ; ສິ່ງແວດລ້ອມທຳມະຊາດໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິພາບ ແລະ ຍືນຍົງ; ລະບົບການເມືອງການປົກຄອງມີສະຖຽນລະພາບ ແລະ ເຂັ້ມແຂງ; ມີຄວາມສາມາດເຊື່ອມໂຍງ ແລະ ເຊື່ອມຈອດຢ່າງກວ້າງຂວາງ ແລະ ເລິກເຊິ່ງກັບພາກພື້ນ ແລະ ສາກົນ.

---

[7] ຖ້າຫາກມູນຄ່າການລົງທຶນຂອງຕ່າງປະເທດ ແລະ ເງິນຊ່ວຍເຫຼືອເພື່ອການພັດທະນາຫາກຫຼຸດລົງ 10% ຕໍ່ປີ ຕະຫຼອດໄລຍະແຕ່ສົກປີ 2015 ຫາ 2020 ຈະເຮັດໃຫ້ອັດຕາການຂະຫຍາຍຕົວຂອງເສດຖະກິດໂດຍລວມໃນແຕ່ລະປີຫຼຸດລົງສະເລ່ຍ 0,5%.

[8] ລວມຍອດລາຍຮັບປະຊາຊາດຕໍ່ຫົວຄົນ (GNI ຄິດໄລ່ແບບ Atlas) ຕ້ອງຢູ່ໃນລະຫວ່າງ 5.800-18.000 ໂດລາ ຕາມມາດຖານຂອງປະເທດລາຍຮັບປານກາງສູງ ຊຶ່ງຄາດຄະເນແລ້ວ ຮອດປີ 2030 GNI ຂອງປະເທດເຮົາສະເລ່ຍຕໍ່ຫົວຄົນຢ່າງໜ້ອຍຕ້ອງບັນລຸໄດ້ປະມານ 7.000 ໂດລາສະຫະລັດ, ເພີ່ມຂຶ້ນປະມານ 4,5 ເທົ່າ GNI ໃນປີ 2015.

## 2.3 ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025)

ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແມ່ນຍຸດທະສາດບຸກທະລຸ ເພື່ອພັດທະນາປະເທດໃຫ້ຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາໃນປີ 2020 ແລະ ສືບຕໍ່ສູ້ຊົນຂ້າມຜ່ານຈາກສະຖານະພາບດັ່ງກ່າວໃຫ້ໄດ້ຢ່າງຂາດຕົວໃນປີ 2025 ເຊິ່ງຍຸດທະສາດນີ້ໄດ້ກໍານົດທິດທາງລວມ, ເປົ້າໝາຍ ແລະ ຄາດໝາຍລວມ ແລະ ບັນດາຍຸດທະສາດລະດັບຊາດທີ່ເປັນບຸລິມະສິດໄວ້ດັ່ງຕໍ່ໄປນີ້:

### 2.3.1 ທິດທາງລວມ

1) ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ແລະ XI ຂອງພັກ ໃຫ້ເປັນແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມຕາມທິດສ້າງບາດກ້າວບຸກທະລຸທັງ 4 ດ້ານໃຫ້ເຂັ້ມແຂງ, ຮັບປະກັນສະຖຽນລະພາບທາງດ້ານການເມືອງໃຫ້ມີຄວາມໝັ້ນຄົງໜັກແໜ້ນ, ສັງຄົມມີຄວາມສະຫງົບສຸກ, ມີປະຊາທິປະໄຕ, ສີວິໄລ ແລະ ຍຸຕິທໍາ.
2) ຕັ້ງໜ້າ ແລະ ສູ້ຊົນປະຕິບັດບັນດາຄາດໝາຍຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ໃນປີ 2020 (LDCs), ສ້າງພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ ເພື່ອຫຼີກລ້ຽງຊຸມປະເທດທີ່ມີລາຍຮັບປານກາງ, ປະຕິບັດບັນດາເປົ້າໝາຍການພັດທະນາ ຕາມທິດສີຂຽວ ແລະ ຍືນຍົງ (SDGs).
3) ພັດທະນາຢ່າງສົມສ່ວນລະຫວ່າງການພັດທະນາເສດຖະກິດ, ວັດທະນາທໍາ-ສັງຄົມ, ພັດທະນາຊັບພະຍາກອນມະນຸດ ແລະ ປົກປັກຮັກສາສິ່ງແວດລ້ອມ, ໂດຍຖືເອົາ:
   - <u>ການພັດທະນາເສດຖະກິດເປັນໃຈກາງ</u>: ໂດຍຊຸກຍູ້ໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ, ມີຄຸນນະພາບຕາມທິດສີຂຽວ ແລະ ຍືນຍົງ; ຫັນປ່ຽນໂຄງປະກອບເສດຖະກິດໃຫ້ໄປຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ໂດຍເນັ້ນໃສ່ການຜະລິດກະສິກໍາ ເພື່ອຄໍ້າປະກັນສະບຽງອາຫານ, ການພັດທະນາຂະແໜງການ ແລະ ການຜະລິດທີ່ມີມູນຄ່າເພີ່ມສູງຂຶ້ນຕິດພັນກັບອຸດສາຫະກໍາ ແລະ ການບໍລິການ ໂດຍສະເພາະອຸດສາຫະກໍາໄຟຟ້າ ແລະ ປຸງແຕ່ງ, ບໍລິການທີ່ປິ່ນອ້ອມການທ່ອງທ່ຽວ, ຫັນເປັນເສດຖະກິດສັງຄົມພູມປັນຍາ; ຊຸກຍູ້ການພັດທະນາ ແລະ ນໍາໃຊ້ວິທະຍາສາດ-ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດກັບສິ່ງແວດລ້ອມເຂົ້າສູ່ການຜະລິດ; ນໍາໃຊ້ທ່າແຮງບົ່ມຊ້ອນທີ່ໄດ້ປຽບຂອງປະເທດ, ຂະແໜງການ ແລະ ເຂດແຄ້ວນຕິດພັນກັບກາລະໂອກາດຂອງພາກພື້ນ ແລະ ສາກົນ ໃຫ້ມີປະສິດທິຜົນສູງສຸດ; ຕິດຕາມ ແລະ ຄຸ້ມຄອງເສດຖະກິດມະຫາພາກໃຫ້ມີສະຖຽນລະພາບ, ເພີ່ມທະວີຄວາມສາມາດແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ-ກາງ ແລະ ສົ່ງເສີມການສ້າງ ແລະ ພັດທະນາຜູ້ປະກອບການໃໝ່; ສົ່ງເສີມການລະດົມແຫຼ່ງທຶນຈາກທຸກພາກສ່ວນເສດຖະກິດເຂົ້າສູ່ການພັດທະນາ.
   - <u>ການພັດທະນາວັດທະນາທໍາ-ສັງຄົມເປັນເປົ້າໝາຍຂອງການພັດທະນາ:</u> ໂດຍສຸມໃສ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ, ປົກປັກຮັກສາ ແລະ ສົ່ງເສີມວັດທະນະທໍາອັນດີງາມຂອງຊາດສົມທົບກັບວັດທະນາທໍາອັນຍອດຍິ່ງຂອງສາກົນ; ພັດທະນາຊັບພະຍາກອນມະນຸດໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ ໂດຍສຸມໃສ່ພັດທະນາຂະແໜງການສຶກສາ, ສາທາລະນະສຸກ ແລະ ແຮງງານ ເພື່ອແນໃສ່ສ້າງນັກວິທະຍາສາດ, ນັກຄົ້ນຄວ້າ, ນັກຊ່ຽວຊານ, ນັກວິຊາການ ແລະ ແຮງງານທີ່ມີສີມືໃນດ້ານຕ່າງໆ; ຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກນ້ອຍ, ຍົກລະດັບອາຍຸຍືນສະເລ່ຍຂອງປະຊາຊົນໃຫ້ສູງຂຶ້ນ ດ້ວຍການພັດທະນາຂະແໜງສະຫວັດດີການສັງຄົມໃຫ້ດີຂຶ້ນ, ຂະຫຍາຍລະບົບປົກປ້ອງທາງສັງຄົມໃຫ້ກວ້າງຂວາງກວ່າເກົ່າ, ເພີ່ມທະວີຄວາມຍຸຕິທໍາຂອງສັງຄົມ, ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ປະຊາຊົນບັນດາເຜົ່າໃຫ້ສູງຂຶ້ນ.

- <u>ການປົກປັກຮັກສາສະພາບແວດລ້ອມເປັນສິ່ງຈໍາເປັນ:</u> ໂດຍສຸມໃສ່ປົກປັກຮັກສາ ແລະ ຟື້ນຟູສະພາບແວດລ້ອມທໍາມະຊາດໃຫ້ມີຄວາມຍືນຍົງ ແລະ ເປັນສີຂຽວ, ພັດທະນາກົນໄກຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ຮັບປະກັນການນໍາໃຊ້ຊັບພະຍາກອນທໍາມະຊາດໃຫ້ເກີດປະໂຫຍດສູງສຸດ, ມີຄວາມໝັ້ນຄົງ-ຍືນຍົງ.

4) ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ພັດທະນາການປົກຄອງ ແລະ ລະບອບລະບຽບການບໍລິຫານລັດດ້ວຍກົດໝາຍໃຫ້ມີຄວາມສັກສິດ; ຫັນບັນດາກະຊວງ-ອົງການຂັ້ນສູນກາງ ໃຫ້ປະຕິບັດພາລະບົດບາດຄຸ້ມຄອງມະຫາພາກເປັນຕົ້ນຕໍ ແລະ ເພີ່ມຄວາມຮັບຜິດຊອບໃຫ້ອົງການປົກຄອງທ້ອງຖິ່ນຫຼາຍຂຶ້ນຕາມທິດ 3 ສ້າງ ໃຫ້ມີຄວາມເຂັ້ມແຂງ, ໝັກແໜ້ນ ແລະ ຍືນຍົງ-ຕໍ່ເນື່ອງ.

5) ເພີ່ມທະວີການຮ່ວມມື, ການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ, ຫັນປະເທດໃຫ້ເປັນໃຈກາງເຊື່ອມຕໍ່ ແລະ ການບໍລິການຜ່ານຂອງພາກພື້ນໃຫ້ມີປະສິດທິຜົນສູງສຸດ, ເຂົ້າຮ່ວມຂະບວນການເຄື່ອນໄຫວຂອງສາກົນຢ່າງເປັນເຈົ້າການຕາມແນວທາງການຕ່າງປະເທດຂອງພັກ ແລະ ນະໂຍບາຍຂອງລັດຖະບານ, ເພີ່ມທະວີຄວາມສາມາດແກ່ງແຍ່ງແຂ່ງຂັນ, ໝູນໃຊ້ກາລະໂອກາດຂອງຕະຫຼາດປະເທດອ້ອມຂ້າງ.

## 2.3.2 ເປົ້າໝາຍ ແລະ ຄາດໝາຍລວມຂອງຍຸດທະສາດຮອດປີ 2025

1) ຮັກສາສະຖຽນລະພາບທາງດ້ານການເມືອງໃຫ້ໝັກແໜ້ນບົນພື້ນຖານການສືບຕໍ່ປັບປຸງບູລະນະລະບອບປະຊາທິປະໄຕປະຊາຊົນທີ່ມີພັກປະຊາຊົນປະຕິວັດລາວເປັນແກນນໍາໃຫ້ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ມີປະຊາທິປະໄຕ; ມີຄວາມສາມັກຄີປອງດອງເປັນປຶກແຜ່ນພາຍໃນຊາດຢ່າງໝັກແໜ້ນ; ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທໍາ;
2) ພັດທະນາປະເທດສໍາລັບໄລຍະຂ້າມຜ່ານການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃຫ້ໄດ້ຢ່າງໝັກແໜ້ນໃນປີ 2025 (LDCs); ສູ້ຊົນປະຕິບັດບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃຫ້ມີຄວາມຄືບໜ້າ ເພື່ອສາມາດບັນລຸໄດ້ໃນປີ 2030;
3) ລວມຍອດຜະລິດຕະພັນພາຍໃນຂະຫຍາຍຕົວສະເລ່ຍບໍ່ຫຼຸດ 7,5% ຕໍ່ປີ, ຮອດປີ 2025 ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນໃຫ້ບັນລຸໄດ້ຫຼາຍກວ່າ 2 ເທົ່າຕົວທຽບກັບປີ 2015;
4) ຫຼຸດຜ່ອນອັດຕາຄວາມທຸກຍາກຂອງປະຊາຊົນໃຫ້ຢູ່ໃນລະດັບບໍ່ເກີນ 5%; ສ້າງຄອບຄົວພັດທະນາໃຫ້ໄດ້ຫຼາຍກວ່າ 60% ຂອງຈໍານວນຄອບຄົວທັງໝົດ; ສ້າງບ້ານພັດທະນາໃຫ້ໄດ້ຫຼາຍກວ່າ 70% ຂອງຈໍານວນບ້ານທັງໝົດໃນທົ່ວປະເທດ;
5) ຊັບພະຍາກອນມະນຸດໄດ້ຮັບການພັດທະນາດີຂຶ້ນ [9] ພົນລະເມືອງລາວໃນເກນອາຍຸໄດ້ຮັບການສຶກສາພື້ນຖານຂັ້ນມັດທະຍົມຕົ້ນ. ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍສູງກວ່າ 73 ປີ. ວຽກງານກິລາ ໄດ້ຮັບການພັດທະນາກ້າວສູ່ລະດັບສາກົນ ແລະ ຫັນບາງປະເພດກິລາທີ່ມີທ່າແຮງໃຫ້ເປັນກິລາອາຊີບ. ພົນລະເມືອງລາວໄດ້ເຂົ້າຮ່ວມໃນລະບົບການປົກປ້ອງທາງສັງຄົມຢ່າງກວ້າງຂວາງ, ກໍາລັງແຮງງານໄດ້ຮັບການພັດທະນາທັງດ້ານປະລິມານ ແລະ ຄຸນນະພາບ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ. ສ້າງນັກຄົ້ນຄວ້າວິທະຍາສາດໃຫ້ໄດ້ຫຼາຍກວ່າ 11 ຄົນຕໍ່ປະຊາກອນ 10 ພັນຄົນ, ສ້າງໃຫ້ໄດ້ບັນດາສະຖາບັນຄົ້ນຄວ້າ, ສູນຝຶກອົບຮົມ, ສູນຖ່າຍທອດເຕັກໂນໂລຊີ, ສູນບໍລິການວິທະຍາສາດ ແລະ ເຕັກໂນໂລຊີ ແລະ ຫ້ອງທົດລອງທີ່ເຫັນວ່າມີຄວາມຈໍາເປັນ;

---

[9] ຮອດປີ 2025 ຄາດວ່າພົນລະເມືອລາວຈະມີປະມານ 7,67 ລ້ານຄົນ ແລະ ມີກໍາລັງແຮງງານທັງໝົດປະມານ 4,7 ລ້ານຄົນ (ອີງຕາມທ່າອ່ຽງການຂະຫຍາຍຕົວຂອງກໍາລັງແຮງງານໃນເກນອາຍຸເຮັດວຽກ (15-60 ປີ).

6) ປົກປັກຮັກສາ ແລະ ຟື້ນຟູເນື້ອທີ່ປ່າໄມ້ປົກຫຸ້ມໃຫ້ຢູ່ໃນລະດັບບໍ່ຫຼຸດ 70% ຂອງເນື້ອທີ່ທົ່ວປະເທດ (ນັບທັງພື້ນທີ່ປູກຕົ້ນໄມ້ອຸດສາຫະກຳຍາວນານ);
7) ສປປ ລາວ ມີເພື່ອນມິດສາກົນຢ່າງກວ້າງຂວາງ, ມີຄວາມສາມາດແກ່ງແຍ່ງແຂ່ງຂັນ ໃນເຄືອຂ່າຍການຜະລິດ ແລະ ສາມາດເຂົ້າຮ່ວມໃນຂະບວນວິວັດແຫ່ງການເຊື່ອມໂຍງເສດຖະກິດຂອງພາກພື້ນ ແລະ ສາກົນຢ່າງຕັ້ງໜ້າ; ເປັນເຈົ້າການການປະກອບສ່ວນໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມືພັດທະນາໃນພາກພື້ນ ແລະ ໃນໂລກ.

### 2.3.3 ບັນດາຍຸດທະສາດລະດັບຊາດຂອງການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025)

ເພື່ອຜັນຂະຫຍາຍບັນດາທິດທາງ, ເປົ້າໝາຍ ແລະ ຄາດໝາຍສູ້ຊົນຂ້າງເທິງນັ້ນ ພວກເຮົາຈະໄດ້ສຸມໃສ່ປະຕິບັດ 7 ຍຸດທະສາດລະດັບຊາດດັ່ງນີ້:

#### 2.3.3.1 ຍຸດທະສາດການພັດທະນາເສດຖະກິດຢ່າງຕໍ່ເນື່ອງຕາມທິດທີ່ມີຄຸນນະພາບ, ສົມດຸນ, ຍືນຍົງ ແລະ ສີຂຽວ

**1. ເປົ້າໝາຍ:**

1) ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ແລະ ໝັ້ນທ່ຽງດ້ວຍຈັງຫວະສະເລ່ຍ 7,5% ຕໍ່ປີ;
2) ເສດຖະກິດມະຫາພາກມີສະຖຽນລະພາບ ແລະ ມີຄວາມໝັ້ນທ່ຽງ;
3) ຄວາມທຸກຍາກສືບຕໍ່ຫຼຸດລົງ, ຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;
4) ສາມາດຮັບປະກັນການຜະລິດສະບຽງອາຫານໃຫ້ພຽງພໍກັບຄວາມຕ້ອງການພາຍໃນ ແລະ ເປັນສິນຄ້າສົ່ງອອກຈຳນວນໜຶ່ງ;
5) ມີການຈັດສັນເຂດການພັດທະນາດ້ານຕ່າງໆຢ່າງເປັນລະບົບ.

**2. ວຽກງານຈຸດສຸມ:**

1) ສຸມໃສ່ການຄຸ້ມຄອງ ແລະ ນຳໃຊ້ນະໂຍບາຍເສດຖະກິດມະຫາພາກຢ່າງເໝາະສົມ ເພື່ອຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ສ້າງສະພາບແວດລ້ອມທີ່ດີຕໍ່ການຜະລິດ ແລະ ດຳເນີນທຸລະກິດ;
2) ສຸມໃສ່ພັດທະນາຂະແໜງທີ່ມີທ່າແຮງບົ່ມຊ້ອນ ແລະ ກາລະໂອກາດໄດ້ປຽບຢູ່ພາຍໃນ, ພາກພື້ນ ແລະ ສາກົນ ດ້ວຍການຊຸກຍູ້ການລົງທຶນຂອງທຸກພາກສ່ວນເສດຖະກິດເຂົ້າໃນການກໍ່ສ້າງໂຄງການໃຫຍ່ລະດັບຊາດຈຳນວນໜຶ່ງ ເພື່ອເປັນເສົາຄ້ຳ ແລະ ເປັນຕົວຂັບເຄື່ອນເສດຖະກິດແຫ່ງຊາດໃຫ້ຂະຫຍາຍຕົວໄວ, ໃຫ້ສາມາດສ້າງລາຍຮັບງົບປະມານພາຍໃນໄດ້ຫຼາຍຂຶ້ນ ເປັນຕົ້ນແມ່ນສຸມໃສ່ພັດທະນາບັນດາໂຄງການເຂື່ອນໄຟຟ້າ, ໂຄງການທາງລົດໄຟ, ໂຄງການພັດທະນາເຂດອຸດສາຫະກຳ, ເຂດເສດຖະກິດພິເສດ ແລະ ສະເພາະ. ພ້ອມກັນນັ້ນ, ກໍຊຸກຍູ້ສົ່ງເສີມການພັດທະນາຂະແໜງການທີ່ຂະຫຍາຍຕົວປານກາງ ແລະ ຕ່ຳ ໃຫ້ມີຄວາມຍືນຍົງໄປພ້ອມໆກັນ ເປັນຕົ້ນແມ່ນການບໍລິການທ່ອງທ່ຽວ, ການບໍລິການຜ່ານຂອງພາກພື້ນ ແລະ ການຜະລິດກະສິກຳໃຫ້ມີມູນຄ່າເພີ່ມສູງຂຶ້ນ ໂດຍຜ່ານການຊຸກຍູ້ສົ່ງເສີມທຸກພາກສ່ວນເສດຖະກິດ ໂດຍສະເພາະບັນດາວິສາຫະກິດຂະໜາດນ້ອຍ-ຂະໜາດກາງ ແລະ ການຜະລິດຂອງປະຊາຊົນ. ຮັບປະກັນການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງຮອບຄອບ, ມີປະສິດທິພາບ ແລະ ປະສິດທິຜົນ, ມີຄວາມໝັ້ນຄົງ-ຍືນຍົງ ແລະ ຍຸຕິທຳ ເພື່ອໃຫ້ເກີດຜົນປະໂຫຍດສູງສຸດແກ່ປະເທດຊາດ;
3) ກຳນົດໂຄງການຜະລິດທີ່ເປັນບູລິມະສິດ, ຈັດສັນເຂດການຜະລິດຕາມເຂດແຄວ້ນຢ່າງຈະແຈ້ງ, ມີຈຸດສຸມ ແລະ ມີຄວາມສົມສ່ວນ, ສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຂອງແຕ່ລະບ່ອນ ເພື່ອເປັນບ່ອນທຳມາຫາກິນ ແລະ ເປັນເຂດການຜະລິດທີ່ຍືນຍົງຂອງປະຊາຊົນ;

4) ສຸມໃສ່ການພັດທະນາຊົນນະບົດຮອບດ້ານ ແລະ ສ້າງກົນໄກເຮັດໃຫ້ປະຊາຊົນມີສ່ວນຮ່ວມຢ່າງທົ່ວເຖິງໃນການພັດທະນາ ເພື່ອຮັບປະກັນຜົນປະໂຫຍດຂອງການຂະຫຍາຍຕົວຂອງເສດຖະກິດເຂົ້າສູ່ປະຊາຊົນຢ່າງທົ່ວເຖິງ.

5) ສຸມໃສ່ລະດົມ ແລະ ພັດທະນາບັນດາປັດໄຈສະໜັບສະໜູນທີ່ຈຳເປັນ ເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາ ເປັນຕົ້ນແມ່ນແຫຼ່ງທຶນ, ແຮງງານ ແລະ ເຕັກໂນໂລຊີ; ຍົກສູງປະສິດທິພາບຂອງການຜະລິດ ແລະ ຄຸນນະພາບຂອງຜົນຜະລິດໃຫ້ສູງຂຶ້ນ ເພື່ອຮັບປະກັນການຄໍ້າປະກັນສະບຽງອາຫານໃຫ້ພຽງພໍກັບຄວາມຕ້ອງການ ແລະ ມີສ່ວນເຫຼືອໄວ້ເປັນສິນຄ້າ.

6) ສຸມໃສ່ຈັດສັນເຂດການພັດທະນາໃຫ້ມີຄວາມສົມສ່ວນ ແລະ ເປັນລະບົບ ເປັນຕົ້ນແມ່ນ: ເຂດກະສິກຳ, ເຂດປ່າໄມ້ປະເພດຕ່າງໆ, ເຂດແຫຼ່ງນໍ້າ, ເຂດອຸດສາຫະກຳ, ເຂດຕົວເມືອງທີ່ພັກອາໃສ, ໂຄງລ່າງພື້ນຖານ ແລະ ເຂດອື່ນໆຕາມຄວາມເໝາະສົມ.

### 2.3.3.2 ຍຸດທະສາດເພື່ອບັນລຸບັນດາເປົ້າໝາຍຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ (LDCs) ໃນປີ 2020 ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs)

**1. ເປົ້າໝາຍ:**

1) ສຸມໃສ່ປະຕິບັດເປົ້າໝາຍຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ (LDCs) ໂດຍສະເພາະແມ່ນເປົ້າໝາຍລາຍໄດ້ແຫ່ງຊາດຕໍ່ຫົວຄົນ (GNI), ດັດຊະນີຊັບສິນມະນຸດ (HAI) ແລະ ດັດຊະນີຄວາມບອບບາງຂອງເສດຖະກິດ (EVI).

2) ສຸມໃສ່ປະຕິບັດບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDGs)[10] ໃຫ້ມີຄວາມຄືບໜ້າ.

**2. ວຽກງານຈຸດສຸມ:**

1) ສຸມໃສ່ປະຕິບັດບັນດາເງື່ອນໄຂເພື່ອບັນລຸເປົ້າໝາຍຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ (LDCs) ໂດຍສຸມໃສ່ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດຖະແຫຼງການ ແລະ ແຜນງານອິສແຕນບູນ ສຳລັບປະເທດດ້ອຍພັດທະນາໃນໄລຍະ 2016-2020 ໂດຍສຸມໃສ່ 8 ວຽກບູລິມະສິດ ຄື: 1) ສຸມໃສ່ພັດທະນາຄວາມສາມາດ ເພື່ອຍົກສູງສະມັດຕະພາບ ເປັນຕົ້ນແມ່ນ ໂຄງລ່າງພື້ນຖານ, ພະລັງງານ, ວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳ, ການພັດທະນາພາກເອກະຊົນ; 2) ພັດທະນາຂະແໜງກະສິກຳ, ການຄໍ້າປະກັນສະບຽງອາຫານ ແລະ ການພັດທະນາຊົນນະບົດ; 3) ພັດທະນາການຄ້າຕ່າງປະເທດໃຫ້ໄດ້ຫຼາຍຂຶ້ນ; 4) ຜະລິດສິນຄ້າ ແລະ ການບໍລິການໃຫ້ມີຄວາມຫຼາກຫຼາຍຂຶ້ນ; 5) ພັດທະນາຂະແໜງສັງຄົມ ແລະ ຊັບພະຍາກອນມະນຸດ ໂດຍສະເພາະການສຶກສາ, ການຝຶກອົບຮົມ, ປະຊາກອນຊາວໜຸ່ມ, ບົດບາດຍິງ-ຊາຍ, ແມ່ຍິງ, ການປະກັນສັງຄົມ ແລະ ການກິນດື່ມສະອາດ ໂດຍສະເພາະແມ່ນນໍ້າກິນ-ນໍ້າໃຊ້ຖືກຫຼັກອະນາໄມ; 6) ແກ້ໄຂບັນຫາວິກິດການ ແລະ ສິ່ງທ້າທາຍຕ່າງໆ ເປັນຕົ້ນແມ່ນວິກິດການທາງດ້ານເສດຖະກິດແບບກະທັນຫັນ, ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ; 7) ການຈັດຫາແຫຼ່ງທຶນສຳລັບການພັດທະນາ ແລະ ການຝຶກອົບຮົມຍົກລະດັບຂີດຄວາມສາມາດ; 8) ສ້າງຄວາມເຂັ້ມແຂງລະບົບການບໍລິຫານ-ການປົກຄອງໃນທຸກລະດັບ.

2) ສຸມໃສ່ ແລະ ໃຫ້ບູລິມະສິດແກ່ວຽກງານການພັດທະນາຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງກັບການປະຕິບັດທຸກເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໂດຍສະເພາະແມ່ນເປົ້າໝາຍທີ 2, 3 ແລະ 4 ທີ່ໄດ້ເຊື່ອມສານເອົາເປົ້າໝາຍ MDGs ທີ່ເຮົາບໍ່ສາມາດບັນລຸໄດ້ ໃນປີ 2015 ເຂົ້າໄວ້ນຳ ເຊັ່ນ: ເປົ້າໝາຍທີ່ກ່ຽວຂ້ອງກັບການຂາດສານອາຫານ, ອັດຕາການເຂົ້າຮຽນຊັ້ນປະຖົມສຸດທີ, ອັດຕາການຕາຍຂອງແມ່ ແລະ ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າ 5 ປີ ເປັນຕົ້ນ. ນອກຈາກນີ້, ຍັງສືບຕໍ່ປະຕິບັດ

---

[10] ຊຶ່ງລວມເຖິງບັນດາເປົ້າໝາຍ MDGs ທີ່ຍັງບໍ່ທັນບັນລຸໄດ້ໃນປີ 2015 ທີ່ໄດ້ເຊື່ອມສານເຂົ້າໃນເປົ້າໝາຍ SDGs ແລ້ວ.

ເປົ້າໝາຍ MDGs ອື່ນໆທີ່ຍັງບໍ່ທັນບັນລຸ ເຊັ່ນ: ອັດຕາສ່ວນເນື້ອທີ່ການເກັບກູ້ລະເບີດທີ່ຍັງບໍ່ທັນແຕກ ເປັນຕົ້ນ.

3) ສຸມໃສ່ລະດົມບັນດາແຫຼ່ງທຶນ ແລະ ເພີ່ມທະວີການຮ່ວມມືກັບຄູ່ຮ່ວມພັດທະນາ ເພື່ອຈັດຕັ້ງປະຕິບັດ ບັນດາໂຄງການບຸລິມະສິດທີ່ກ່ຽວຂ້ອງກັບການບັນລຸໄດ້ບັນດາເປົ້າໝາຍດັ່ງກ່າວ.

**2.3.3.3 ຍຸດທະສາດວ່າດ້ວຍການພັດທະນາຊັບພະຍາກອນມະນຸດ**

**1. ເປົ້າໝາຍ:** ສຸມໃສ່ພັດທະນາຊັບພະຍາກອນມະນຸດ ເພື່ອຍົກສູງຄຸນນະພາບຊີວິດຂອງປະຊາຊົນ ບັນດາເຜົ່າ ໂດຍເລັ່ງໃສ່ 3 ດ້ານຄື:

1) **ດ້ານຄຸນສົມບັດສິນທຳປະຕິວັດ:** ມີຄຸນທາດການເມືອງດີ, ເປັນຄົນຊື່ສັດບໍລິສຸດ, ມີຄວາມມານະ ອົດທົນສູງ, ມີກິລິຍາມາລະຍາດດີ, ມີຄວາມສາມັກຄີ, ມີນໍ້າໃຈເສຍສະຫຼະ, ມີແບບແຜນການດຳລົງຊີ ວິດຢ່າງປະຢັດມັດທະຍັດ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດບ້ານເມືອງ ແລະ ມີອຸດົມການສັງຄົມ ນິຍົມ.

2) **ດ້ານສະຕິປັນຍາ ແລະ ທັກສະ:** ເປັນຄົນສະຫຼາດ, ຫຼັກແຫຼມ, ມີຫົວຄິດປະດິດສ້າງ ແລະ ວິທະ ຍາສາດ, ມີພຶກໄຫວດີ, ມີຄວາມຮູ້, ຄວາມສາມາດ ແລະ ສີມືແຮງງານທີ່ສອດຄ່ອງກັບການພັດທະນາ, ຮັກການຮຽນຮູ້ຕະຫຼອດຊີວິດ, ມີຄວາມຮັບຜິດຊອບສູງ ແລະ ລະບຽບວິໄນໃນການອອກແຮງງານ.

3) **ດ້ານສຸຂະພາບ ແລະ ຮ່າງກາຍ:** ເປັນຄົນມີສຸຂະພາບ ແລະ ພະລານາໄມດີ, ມີໂພຊະນາການດີ, ຮ່າງກາຍສົມບູນ ແລະ ອາຍຸຍືນຍາວ.

**2. ວຽກງານຈຸດສຸມ:**

ເພື່ອບັນລຸເປົ້າໝາຍດັ່ງກ່າວ ຍຸດທະສາດພັດທະນາຊັບພະຍາກອນມະນຸດສຸມໃສ່: (1) ການສຶກສາ ອົບຮົມດ້ານການເມືອງ-ແນວຄິດ ແລະ ດ້ານຄຸນສົມບັດສິນທຳປະຕິວັດໃຫ້ແກ່ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ນຳໄປປະຕິບັດໃນວິຖີການດຳລົງຊີວິດຂອງຕົນຢ່າງເຄັ່ງຄັດ ເພື່ອໃຫ້ເຂົາເຈົ້າກາຍເປັນຄົນດີ, ມີຄຸນ ນະທຳ, ຈົງຮັກພັກດີຕໍ່ປະເທດຊາດບ້ານເມືອງ, ມີອຸດົມການສັງຄົມນິຍົມ; (2) ເພີ່ມທະວີການກໍ່ສ້າງ ແລະ ຄຸ້ມຄອງພະນັກງານ, ຍົກລະດັບຄວາມສາມາດຂອງພະນັກງານນຳພາຄຸ້ມຄອງຕາມສາຍຕຳແໜ່ງ ບໍລິຫານ ແລະ ພະນັກງານບໍລິຫານໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ແລະ ປັບປຸງລະບົບຄ່າ ຕອບແທນ, ນະໂຍບາຍ ແລະ ສະຫວັດດີການຕ່າງໆຕໍ່ພະນັກງານ-ລັດຖະກອນຢ່າງເໝາະສົມ; (3) ປັບປຸງ ແລະ ປະຕິຮູບລະບົບການສຶກສາເນັ້ນໃສ່ການປັບປຸງຫຼັກສູດການຮຽນການສອນ, ການພັດທະນາ ສີມືແຮງງານທີ່ມີສ່ວນຮ່ວມຂອງຜູ້ປະກອບການ, ຂະແໜງການເສດຖະກິດຕ່າງໆ ແລະ ສະຖາບັນການ ສຶກສາໃນພາກພື້ນ, ສະໜອງພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອຮັບໃຊ້ການຮຽນ-ການສອນ; ຂະຫຍາຍ ອັດຕາການປົກຄຸມຂອງຕາໜ່າງການສຶກສາ ແລະ ການພັດທະນາສີມືແຮງງານ ໂດຍເລັ່ງໃສ່ໄວໜຸ່ມ, ແມ່ຍິງ ແລະ ປະຊາຊົນບັນດາເຜົ່າຜູ້ດ້ອຍໂອກາດ ແລະ ຂະຫຍາຍການສຶກສາຂອງເດັກກ່ອນໄວຮຽນ ໃຫ້ ກວ້າງຂວາງ ແລະ ມີປະສິດທິຜົນສູງ; ເອົາໃຈໃສ່ພິເສດການລົງທຶນໃສ່ເດັກຜູ້ດ້ອຍໂອກາດຢູ່ຊົນນະບົດ ແລະ ເດັກນ້ອຍທີ່ມີພອນສະຫວັນຈາກກຸ່ມປະຊາກອນທີ່ດ້ອຍໂອກາດ; (4) ສົ່ງເສີມສຸຂະພາບ ແລະ ພະ ລານາໄມສົມບູນໃຫ້ທົ່ວປວງຊົນ ໂດຍສຸມໃສ່ການປຸກລະດົມການເຂົ້າຮ່ວມໃນວຽກງານຮັກສາສຸຂະພາບ ເພື່ອເຮັດໃຫ້ວຽກງານດັ່ງກ່າວເປັນວຽກງານຂອງປວງຊົນ, ເອົາໃຈໃສ່ວຽກງານໂພຊະນາການທີ່ເພື່ອແກ້ ບັນຫາການຂອດ ແລະ ການຂາດສານອາຫານຂອງເດັກນ້ອຍ; ປັບປຸງໂຄງລ່າງດ້ານການບໍລິການ ສາທາລະນະສຸກ; ສ້າງ ແລະ ຍົກລະດັບພະນັກງານ ແລະ ຊ່ຽວຊານຂອງວຽກງານຮັກສາສຸຂະພາບ; ສົ່ງ ເສີມການຫຼິ້ນກິລາເພື່ອສຸຂະພາບ; (5) ສ້າງສີມືແຮງງານ, ດຸ່ນດ່ຽງແຮງງານຕາມກົນໄກຕະຫຼາດ ແລະ ຍົກ ປະສິດທິພາບຂອງແຮງງານໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຜູ້ ໃຊ້ແຮງງານ; (6) ສຸມໃສ່ເຜີຍແຜ່, ສົ່ງເສີມ ແລະ ຍົກສູງຄຸນຄ່າທາງດ້ານວັດທະນະທຳໃຫ້ແກ່ປະຊາຊົນ.

ນອກຈາກນີ້, ຕ້ອງສຸມໃສ່ພັດທະນາຊັບພະຍາກອນມະນຸດໃນດ້ານອື່ນໆທີ່ພົວພັນກັບຫຼາຍຂະແໜງການ ເຊັ່ນ: ການປົກປ້ອງປະຊາກອນຈາກຄວາມສ່ຽງທີ່ຮ້າຍແຮງຕ່າງໆ, ການສ້າງຄວາມສະເໝີພາບບົດບາດຍິງ-ຊາຍ, ການປະຕິບັດພັນທະຕ່າງໆໃນກອບການຮ່ວມມືກັບພາກພື້ນ ແລະ ສາກົນ.

**2.3.3.4 ຍຸດທະສາດການປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ, ມີປະສິດທິຜົນ ແລະ ຕາມທິດທັນເປັນສີຂຽວ**

**1. ເປົ້າໝາຍ:**

1) ພັດທະນາ ແລະ ປົກປັກຮັກສາແຫຼ່ງຊັບພະຍາກອນທຳມະຊາດ ເປັນຕົ້ນແມ່ນ: ທີ່ດິນ, ປ່າໄມ້, ແຮ່ທາດ, ແຫຼ່ງນ້ຳ, ອາກາດ ໃຫ້ມີການນຳໃຊ້ໃຫ້ເກີດປະໂຫຍດສູງສຸດ, ມີຄວາມຍືນຍົງ, ໝັ້ນຄົງ, ຍຸຕິທຳ ແລະໄປຕາມທິດສີຂຽວ;
2) ຮັບປະກັນການບັນເທົາ, ຮັບມື ແລະ ປັບຕົວເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດທີ່ສູງຂຶ້ນ.

**2. ວຽກງານຈຸດສຸມ:**

1) ສຸມໃສ່ຄົ້ນຄວ້າບັນດານິຕິກຳ ແລະ ແຜນແມ່ບົດທີ່ຈຳເປັນກ່ຽວກັບການປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຂອງຊາດທີ່ກ່ຽວຂ້ອງກັບທີ່ດິນ, ປ່າໄມ້, ແຮ່ທາດ, ແຫຼ່ງນ້ຳ ແລະ ອາກາດ ເປັນຕົ້ນແມ່ນນິຕິກຳ ແລະ ແຜນແມ່ບົດກ່ຽວກັບການນຳໃຊ້ທີ່ດິນກະສິກຳ, ການນຳໃຊ້ແຫຼ່ງນ້ຳແບບປອດສານພິດ, ເປັນມິດກັບສິ່ງແວດລ້ອມ, ການຮັກສາອາກາດໃຫ້ສົດຊື່ນ ແລະ ສະອາດ ເຫຼົ່ານີ້ເປັນຕົ້ນ;
2) ພັດທະນາອຸດສາຫະກຳປຸງແຕ່ງວັດຖຸດິບຈາກຊັບພະຍາກອນທຳມະຊາດ ເພື່ອສ້າງມູນຄ່າເພີ່ມໃຫ້ໄດ້ຫຼາຍຂຶ້ນ ເປັນຕົ້ນແມ່ນອຸດສາຫະກຳປຸງແຕ່ງໄມ້, ປຸງແຕ່ງແຮ່ທາດ, ປຸງແຕ່ງນ້ຳສະອາດ ເພື່ອເປັນສິນຄ້າສຳລັບຊົມໃຊ້ພາຍໃນ ແລະ ສົ່ງອອກ.
3) ພັດທະນາ ແລະ ນຳໃຊ້ພະລັງງານທົດແທນ, ສຸມໃສ່ສ້າງຄວາມຫຼາກຫຼາຍໃຫ້ແກ່ການພັດທະນາຂະແໜງການເສດຖະກິດທີ່ນຳໃຊ້ຊັບພະຍາກອນທຳມະຊາດໜ້ອຍທີ່ສຸດ ເພື່ອສ້າງແຫຼ່ງລາຍໄດ້ທົດແທນຈາກຂະແໜງຊັບພະຍາກອນທຳມະຊາດທີ່ນັບມື້ຈະບົກແຫ້ງໄປ ເປັນຕົ້ນແມ່ນສົ່ງເສີມການປູກ ແລະ ນຳໃຊ້ໄມ້ປູກແທນໄມ້ທຳມະຊາດ, ພັດທະນາກະສິກຳປອດສານພິດ, ພັດທະນາຂະແໜງບໍລິການ ເປັນຕົ້ນແມ່ນທ່ອງທ່ຽວ ແລະ ການບໍລິການປິ່ນອ້ອມການທ່ອງທ່ຽວໃຫ້ກວມອັດຕາສ່ວນຢູ່ໃນ ລວມຍອດຜະລິດຕະພັນພາຍໃນຫຼາຍຂຶ້ນ.
4) ສ້າງລະບົບການຄຸ້ມຄອງ, ກວດກາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃຫ້ມີຄວາມເຂັ້ມແຂງ;
5) ປັບປຸງກົງຈັກການຈັດຕັ້ງ, ເຄືອຂ່າຍການປະສານງານ ແລະ ຂີດຄວາມສາມາດຂອງໜ່ວຍງານຄຸ້ມຄອງໄພພິບັດແຫ່ງຊາດ.

**2.3.3.5 ຍຸດທະສາດວ່າດ້ວຍການເພີ່ມທະວີຄວາມສັກສິດຂອງລະບົບການປົກຄອງດ້ວຍກົດໝາຍຂອງລັດປະຊາທິປະໄຕປະຊາຊົນ**

**1. ເປົ້າໝາຍ:**

1) ປັບປຸງ ແລະ ພັດທະນາລະບົບກົງຈັກການປົກຄອງ, ການບໍລິຫານລັດດ້ວຍລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນແມ່ນອົງການນິຕິບັດຍັດ, ອົງການບໍລິຫານ, ອົງການຕຸລາການໃຫ້ເຂັ້ມແຂງ ແລະ ມີປະສິດທິພາບສູງຂຶ້ນ;
2) ປັບປຸງບັນດາອົງການໃນລະບົບອຳນາດລັດໃຫ້ສົມບູນຕາມທິດ 3 ສ້າງ, ສອດຄ່ອງກັບຍຸດທະສາດການປົກຄອງຂອງປະເທດ;
3) ປັບປຸງບັນດານິຕິກຳ, ນະໂຍບາຍ ແລະ ລະບຽບການຕ່າງໆໃຫ້ຄົບຖ້ວນ, ຮັດກຸມ ແລະ ຈະແຈ້ງ;
4) ກົນໄກການປະສານງານລະຫວ່າງສາຍຂວາງ ແລະ ສາຍຕັ້ງໄດ້ຮັບການປັບປຸງໃຫ້ກົມກຽວກັນ.

**2. ວຽກງານຈຸດສຸມ:**

1) ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຫ້ຄົບຖ້ວນ, ສອດຄ່ອງກັບສະພາບ ແລະ ເງື່ອນໄຂຕົວຈິງຂອງປະເທດ ທັງສາມາດນຳໃຊ້ໄດ້ຢ່າງມີຜົນສັກສິດສູງ, ສ້າງ ແລະ ປັບປຸງລະບອບລະບຽບການບໍລິຫານລັດໃຫ້ສະດວກ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນ;
2) ກຳນົດພາລະບົດບາດຂອງແຕ່ລະອົງການລັດໃຫ້ຈະແຈ້ງ ແລະ ຊັດເຈນໄປພ້ອມກັບການເພີ່ມທະວີຄວາມສັກສິດ, ຄວາມມີປະສິດທິພາບ ແລະ ມີຄວາມໂປ່ງໃສໃນການຄຸ້ມຄອງບໍລິຫານລັດ, ແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງກັບທ້ອງຖິ່ນຕາມທິດ 3 ສ້າງໃຫ້ເປັນລະບົບຫຼາຍຂຶ້ນ ແລະ ເສີມຂະຫຍາຍຄວາມຮັບຜິດຊອບ, ຄວາມຕັ້ງໜ້າເປັນເຈົ້າການຂອງທ້ອງຖິ່ນ;
3) ເຊີດຊູບົດບາດຂອງສະພາແຫ່ງຊາດ ໃນຖານະເປັນອົງການຕົວແທນແຫ່ງສິດອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ຕົກລົງບັນດາບັນຫາພື້ນຖານຂອງປະເທດຊາດໃຫ້ສູງຂຶ້ນຕື່ມ, ສ້າງຕັ້ງ ແລະ ເສີມຂະຫຍາຍບົດບາດ ແລະ ຄວາມຮັບຜິດຊອບຂອງສະພາປະຊາຊົນທ້ອງຖິ່ນໃຫ້ສູງຂຶ້ນ, ເພີ່ມຄວາມເອົາໃຈໃສ່ຕໍ່ການແກ້ໄຂຜົນຂອງການຕິດຕາມກວດກາໃນພາກຕົວຈິງຕື່ມອີກ; ປັບປຸງກົງຈັກການຈັດຕັ້ງຂອງສະພາແຫ່ງຊາດໃຫ້ສົມຄູ່ກັບທີ່ຕັ້ງ ແລະ ພາລະບົດບາດຂອງຕົນຕື່ມອີກ;
4) ປັບປຸງວຽກງານຄຸ້ມຄອງລັດຖະກອນໃຫ້ສອດຄ່ອງ; ສ້າງ ແລະ ປະຕິບັດຍຸດທະສາດພັດທະນາລັດຖະກອນໃນທົ່ວປະເທດ;
5) ປັບປຸງອົງການຕຸລາການ ເປັນຕົ້ນແມ່ນ ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ກະຊວງຍຸຕິທຳ ແລະ ປັບປຸງອົງການກວດສອບແຫ່ງລັດໃຫ້ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ, ໜັກແໜ້ນທາງດ້ານບຸກຄະລາກອນ ແລະ ມີພື້ນຖານວັດຖຸເຕັກນິກທີ່ທັນສະໄໝ ເພື່ອສາມາດປະຕິບັດພາລະບົດບາດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສັກສິດ, ທັງສອດຄ່ອງກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນໄລຍະໃໝ່;
6) ກໍ່ສ້າງ, ບຳລຸງຖັນແຖວພະນັກງານ-ລັດຖະກອນໃຫ້ມີຄວາມຮູ້-ຄວາມສາມາດສູງມີຄຸນສົມບັດ ແລະ ຈັນຍາບັນໃນການປະຕິບັດໜ້າທີ່ຂອງລັດຖະກອນ ແລະ ປັບປຸງລະບົບລັດຖະກອນໃຫ້ຄົບຖ້ວນ;
7) ສ້າງ ແລະ ປັບປຸງການແບ່ງງານ, ກົນໄກປະສານງານລະຫ່ວາງສູນກາງກັບສູນກາງ, ສູນກາງກັບທ້ອງຖິ່ນຕາມທິດແບ່ງວຽກ, ແບ່ງສິດ ແລະ ແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງ, ເສີມຂະຫຍາຍຄວາມເປັນເຈົ້າການ, ຄວາມຮັບຜິດຊອບຂອງທ້ອງຖິ່ນໄປພ້ອມກັບການເພີ່ມທະວີການກວດກາຂອງສູນກາງ ແລະ ຂະແໜງການສາຍຕັ້ງໃຫ້ຫຼາຍຂຶ້ນ.

### 2.3.3.6 ຍຸດທະສາດການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ

**1. ເປົ້າໝາຍ:**

1) ມີເພື່ອນມິດສາກົນຢ່າງກວ້າງຂວາງ, ການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍນັບມື້ນັບຫຼາຍຂຶ້ນ;
2) ສາມາດເຂົ້າຮ່ວມໃນຂະບວນວິວັດແຫ່ງການເຊື່ອມໂຍງເສດຖະກິດຂອງພາກພື້ນ ແລະ ສາກົນ ຢ່າງມີປະສິດທິຜົນ ແລະ ເປັນເຈົ້າການຫຼາຍກວ່າເກົ່າ;
3) ມີຄວາມສາມາດແຂ່ງຂັນ ແລະ ເຂົ້າຮ່ວມໃນເຄືອຂ່າຍການຜະລິດຂອງພາກພື້ນ ແລະ ສາກົນຫຼາຍຂຶ້ນເພື່ອຮັບປະກັນຜົນປະໂຫຍດໃຫ້ແກ່ປະເທດ.

**2. ວຽກງານຈຸດສຸມ:**

1) ສືບຕໍ່ຍຶດໝັ້ນໃນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ແລະ ເປີດກວ້າງການພົວພັນກັບບັນດາປະເທດ, ເຂດແຄວ້ນແບບຫຼາຍທິດ-ຫຼາຍຝ່າຍ ແລະ ຫຼາຍລະດັບບົນພື້ນຖານຍຶດໝັ້ນຜົນປະໂຫຍດຂອງຊາດ; ສືບຕໍ່ປັບປຸງ, ເພີ່ມທະວີການພົວ

ພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມືກັບບັນດາປະເທດສັງຄົມນິຍົມ, ໃນນັ້ນ: ສືບຕໍ່ເພີ່ມທະວີຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານກັບ ສສ ຫວຽດນາມ, ເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອກັບ ສປຈີນ ບົນຈິດໃຈບ້ານໃກ້ເຮືອນຄຽງທີ່ດີ, ເປັນເພື່ອນມິດທີ່ດີ ແລະ ເປັນຄູ່ຮ່ວມມືທີ່ໄວ້ໃຈໄດ້; ເສີມຂະຫຍາຍການພົວພັນທີ່ດີກັບປະເທດອ້າຍນ້ອງອື່ນໆ, ຮັດແໜ້ນການພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງທີ່ມີຊາຍແດນຮ່ວມກັນ, ສືບຕໍ່ພົວພັນກັບບັນດາປະເທດພັດທະນາແລ້ວ ແລະ ບັນດາປະເທດທີ່ກຳລັງພັດທະນາ, ຂະບວນການບໍ່ຮ່ວມກຸ່ມ, ກຸ່ມ 77, ກຸ່ມປະເທດທີ່ໃຊ້ພາສາຝຣັ່ງ, ກຸ່ມປະເທດກຳລັງພັດທະນາທີ່ບໍ່ຕິດກັບທະເລ ແລະ ກັບບັນດາອົງການຈັດຕັ້ງສາກົນອື່ນໆ ໂດຍແນໃສ່ເຮັດໃຫ້ບັນດາປະເທດ ແລະ ອົງການຈັດຕັ້ງສາກົນກາຍເປັນຄູ່ຮ່ວມມືທີ່ເຂັ້ມແຂງ, ໝັ້ນຄົງ ແລະ ຍາວນານ;

2) ຍົກສູງຄວາມຮັບຜິດຊອບໃນການປະຕິບັດບັນດາພັນທະຕ່າງໆຂອງສາກົນໃຫ້ມີຜົນສັກສິດ ແລະ ເປັນປະໂຫຍດຕໍ່ປະເທດຊາດ; ຍົກສູງບົດບາດທາງດ້ານການເມືອງ ແລະ ເສດຖະກິດຂອງປະເທດໃນເວທີສາກົນໃຫ້ສູງຂຶ້ນ, ມີທ່າບຸກໃນການດຶງດູດການລົງທຶນຕ່າງປະເທດໂດຍກົງ ແລະ ຊຸກຍູ້ສົ່ງເສີມການພົວພັນຮ່ວມມື, ຂົນຂວາຍ ແລະ ຍາດແຍ່ງທຶນຊ່ວຍເຫຼືອທາງການເພື່ອການພັດທະນາໂດຍຜ່ານຂະບວນການໂຕະມົນຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນເລັ່ງລະດົມທຶນຈາກຄູ່ຮ່ວມພັດທະນາທີ່ສຳຄັນ;
3) ເປັນເຈົ້າການເຂົ້າຮ່ວມໃນຂະບວນການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງຕັ້ງໜ້າ ໂດຍສະເພາະປະຊາຄົມເສດຖະກິດອາຊຽນ (AEC), ອາຊຽນ+6 (ຈີນ, ເກົາຫຼີ, ຍີ່ປຸ່ນ, ນິວເຊແລນ, ອົດສຕຣາລີ, ອິນເດຍ), ອະນຸພາກພື້ນແມ່ນ້ຳຂອງ (GMS) ແລະ ອົງການການຄ້າໂລກ (WTO). ສືບຕໍ່ປັບປຸງສະພາບແວດລ້ອມການລົງທຶນ ແລະ ດຳເນີນທຸລະກິດພາຍໃນໃຫ້ເຂັ້ມແຂງ, ມີການເລືອກເຟັ້ນການດຶງດູດໂຄງການລົງທຶນຕ່າງປະເທດທີ່ມີຄຸນນະພາບ, ມີຄວາມຊ່ຽວຊານ, ມີການຖ່າຍທອດ ແລະ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ມີຄວາມສາມາດຂະຫຍາຍຕະຫຼາດສົ່ງອອກໄດ້. ພ້ອມດຽວກັນ, ຄວນເອົາໃຈໃສ່ພັດທະນາວິສາຫະກິດພາຍໃນ ໃຫ້ສາມາດເຂົ້າຮ່ວມໃນເຄືອຂ່າຍການຜະລິດພາກພື້ນ ແລະ ສາກົນຢ່າງຕັ້ງໜ້າ;
4) ສືບຕໍ່ຍົກລະດັບ ແລະ ພັດທະນາພື້ນຖານໂຄງລ່າງທາງລົດ, ທາງລົດໄຟ, ທາງອາກາດ ເພື່ອເຊື່ອມຈອດກັບບັນດາປະເທດອ້ອມຂ້າງ, ພາກພື້ນ ແລະ ສາກົນ; ປັບປຸງລະບົບບໍລິການຂົນສົ່ງ Logistics ໃຫ້ມີຄວາມສະດວກ, ປອດໄພ ແລະ ທັນສະໄໝຫຼາຍຂຶ້ນ.

### 2.3.3.7 ຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝ

**1. ເປົ້າໝາຍ:**

1) ຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຜະລິດໃນໂຄງປະກອບເສດຖະກິດແຫ່ງຊາດ;
2) ມີການນຳໃຊ້ ແລະ ພັດທະນາເຕັກໂນໂລຊີທີ່ທັນສະໄໝ, ສະອາດເປັນມິດກັບສິ່ງແວດລ້ອມ;
3) ມີໂຄງລ່າງພື້ນຖານທີ່ເຂັ້ມແຂງ, ທັນສະໄໝ, ສາມາດຮອງຮັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ສຳລັບຂະແໜງການຕ່າງໆ, ການເຊື່ອມຈອດກັບເຄືອຂ່າຍການຜະລິດທີ່ມີມູນຄ່າເພີ່ມສູງຂອງພາກພື້ນ ແລະ ສາກົນ;
4) ຫັນເປັນຕົວເມືອງ, ຫັນເປັນທັນສະໄໝດ້ານຮູບແບບຂອງການດຳລົງຊີວິດ ເພື່ອຊຸກຍູ້ການເຕີບໂຕຂອງເສດຖະກິດ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

**2. ວຽກງານຈຸດສຸມ:**

1) ໃຫ້ບູລິມະສິດແກ່ການພັດທະນາ ແລະ ຍົກສູງປະສິດທິພາບ, ປະສິດທິຜົນຂອງການຜະລິດທີ່ເປັນມິດ

ກັບສິ່ງແວດລ້ອມ ໃນບັນດາອຸດສາຫະກຳເສົາຄ້ຳຕ່າງໆເຊັ່ນ: ອຸດສາຫະກຳໄຟຟ້າ ເປັນເສົາຄ້ຳດ້ານການສະໜອງພະລັງງານຮັບໃຊ້ການຜະລິດຂອງອຸດສາຫະກຳພາຍໃນ ແລະ ສົ່ງອອກ; ອຸດສາຫະກຳທ່ອງທ່ຽວ ແລະ ປຸງແຕ່ງກະສິກຳ/ອາຫານ ເປັນເສົາຄ້ຳດ້ານການສ້າງລາຍຮັບທີ່ຕິດພັນກັບປະຊາກອນເປັນສ່ວນໃຫຍ່; ອຸດສາຫະກຳປຸງແຕ່ງອື່ນໆ (ເຊັ່ນ: ອີເລັກໂຕຣນິກ, ເຄື່ອງໄຟຟ້າ, ເຄື່ອງກໍ່ສ້າງ, ປຸງແຕ່ງແຮ່ທາດ ແລະ ອື່ນໆ) ເປັນເສົາຄ້ຳດ້ານການຜະລິດທີ່ຕິດພັນກັບເຄືອຂ່າຍການຜະລິດຂອງພາກພື້ນ ແລະ ສາກົນ;

2) ເອົາໃຈໃສ່ພັດທະນາ, ຍົກສູງປະສິດທິພາບ, ປະສິດທິຜົນ ແລະ ຫັນເປັນທັນສະໄໝໃນຂະແໜງການຕ່າງໆ ເພື່ອສະໜອງວັດຖຸດິບ, ແຫຼ່ງທຶນ, ໂຄງລ່າງ ແລະ ການບໍລິການທີ່ຈຳເປັນສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເປັນຕົ້ນແມ່ນຂະແໜງກະສິກຳ-ປ່າໄມ້ ໃຫ້ສາມາດຮັບປະກັນທາງດ້ານສະບຽງອາຫານ ແລະ ສະໜອງໃຫ້ແກ່ການຜະລິດຂອງອຸດສາຫະກຳປຸງແຕ່ງກະສິກຳ; ຂະແໜງທະນາຄານໃຫ້ສາມາດສະໜັບສະໜູນທາງດ້ານແຫຼ່ງທຶນ ແລະ ເປັນຕົວກາງໃນການຊຳລະສະສາງທຸລະກິດເຊື່ອມຈອດການຜະລິດ ແລະ ການຕະຫຼາດທັງພາຍໃນ ແລະ ພາກພື້ນ; ຂະແໜງໂທລະຄົມ ແລະ ການສື່ສານ ເພື່ອອຳນວຍຄວາມສະດວກດ້ານການຕິດຕໍ່ສື່ສານ, ການດຳເນີນທຸລະກິດ-ການຜະລິດ ແລະ ຂະແໜງຂົນສົ່ງ ແລະ ບໍລິການຜ່ານ ເພື່ອຮອງຮັບການບໍລິການຜ່ານຂອງພາກພື້ນ;

3) ສືບຕໍ່ຫັນເປັນທັນສະໄໝໃນຂະແໜງບໍລິການຕ່າງໆ ເຊັ່ນ: ຂະແໜງການເງິນ-ງົບປະມານ, ສຶກສາ, ສາທາລະນະສຸກ, ຖະແຫຼງຂ່າວວັດທະນະທຳ, ການປົກຄອງ-ການບໍລິຫານລັດ, ການບໍລິການສາທາລະນະ ແລະ ອື່ນໆ ໃຫ້ມີຄວາມສະດວກ, ທັນສະໄໝ ແນໃສ່ເຮັດໃຫ້ການເຄື່ອນໄຫວຂອງຂະແໜງການດັ່ງກ່າວ ມີຄຸນນະພາບ, ມີປະສິດທິພາບ ແລະ ປະສິດທິຜົນ ແລະ ຊຸກຍູ້ສົ່ງເສີມການຫັນເປັນອຸດສາຫະກຳ ແລະ ທັນສະໄໝໂດຍລວມ;

4) ພັດທະນາເຂດຈຸດສຸມຕ່າງໆໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໂດຍກຳນົດເປັນເຂດການຜະລິດຕາມເຂດແຄວ້ນ. ພາກເໜືອ ສຸມໃສ່ອຸດສາຫະກຳທ່ອງທ່ຽວ ແລະ ອຸດສາຫະກຳໜັກ; ພາກກາງ ສຸມໃສ່ການບໍລິການ, ປຸງແຕ່ງສະບຽງອາຫານ ແລະ ອຸດສາຫະກຳເບົາອື່ນໆ ເຊັ່ນ: ອຸດສາຫະກຳຜະລິດຊິ້ນສ່ວນ ແລະ ປະກອບເຄື່ອງເອເລັກໂຕນິກ, ຍານພາຫະນະ ແລະ ອື່ນໆ; ສຳລັບ ພາກໃຕ້ ສຸມໃສ່ການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງກະສິກຳ ເຊັ່ນ: ອຸດສາຫະກຳປຸງແຕ່ງກາເຟ, ປຸງແຕ່ງໄມ້, ປຸງແຕ່ງຢາງພາລາ ແລະ ອື່ນໆ;

5) ປັບປຸງ ແລະ ລະດົມການລົງທຶນ ແລະ ການພັດທະນາເຂົ້າໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະທີ່ລັດຖະບານ ໄດ້ຮັບຮອງແລ້ວ, ເລັ່ງໃສ່ອຸດສາຫະກຳຕ່າງໆທີ່ຕິດພັນກັບເຄືອຂ່າຍການຜະລິດຂອງພາກພື້ນ ແລະ ສາກົນ;

6) ສ້າງ ແລະ ພັດທະນາແຮງງານໃຫ້ມີຄວາມຮູ້, ຄວາມສາມາດ ແລະ ສີມືສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດທັງພາຍໃນ ແລະ ຕ່າງປະເທດ;

7) ນຳໃຊ້ ແລະ ພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳທີ່ກ້າວໜ້າ, ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມເຂົ້າໃນການຜະລິດ ແລະ ການດຳລົງຊີວິດຂອງປະຊາຊົນ;

8) ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ແລະ ມີປະສິດທິຜົນດ້ານການຄົມມະນາຄົມຂົນສົ່ງ ແລະ ການບໍລິການຜ່ານຂອງພາກພື້ນ;

9) ສຶກສາຄົ້ນຄວ້າ, ກຳນົດເຂດ ແລະ ສ້າງແຜນພັດທະນາ ເພື່ອຫັນເປັນຕົວເມືອງນ້ອຍ, ຕົວເມືອງໃຫຍ່, ນະຄອນ ແລະ ເຂດການຜະລິດຕ່າງໆ ເພື່ອສ້າງຄວາມໜາແໜ້ນ ແລະ ຄວາມພຽງພໍທາງດ້ານກຳລັງແຮງງານ, ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

ນອກຈາກນີ້, ຕ້ອງເອົາໃຈໃສ່ປະຕິບັດບັນດານະໂຍບາຍສະໜັບສະໜູນການຫັນເປັນອຸດສາຫະກໍາ ແລະ ທັນສະໄໝຕ່າງໆ ເຊັ່ນ: ນະໂຍບາຍສ້າງສິ່ງອໍານວຍຄວາມສະດວກໃຫ້ແກ່ການດໍາເນີນທຸລະກິດຂອງວິສາຫະກິດຕ່າງໆ ໂດຍສະເພາະວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ຄຸ້ມຄອງເສດຖະກິດມະຫາພາກໃຫ້ມີສະຖຽນລະພາບ, ສົ່ງເສີມການເຂົ້າເຖິງ, ການນໍາໃຊ້ ແລະ ພັດທະນາເຕັກໂນໂລຊີ (ນະວັດຕະກໍາ), ສົ່ງເສີມການເຂົ້າເຖິງແຫຼ່ງທຶນ, ປະຕິບັດ ແລະ ບັງຄັບໃຊ້ບັນດາກົດໝາຍ ແລະ ນິຕິກໍາ, ພັດທະນາຊັບພະຍາກອນມະນຸດ, ຈັດສັນ ແລະ ພັດທະນາທີ່ດິນ, ນະໂຍບາຍສົ່ງເສີມການປະຢັດ ແລະ ການອອມ.

# ພາກທີ III: ນະໂຍບາຍ, ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດ

## 3.1 ນະໂຍບາຍ:

ເພື່ອຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນການບູລິມະສິດດັ່ງກ່າວໃຫ້ມີປະສິດທິຜົນ ແລະ ບັນລຸຜົນຕາມເປົ້າໝາຍ ແລະ ຄາດໝາຍສູ້ຊົນທີ່ໄດ້ກໍານົດໄວ້ນັ້ນ ແມ່ນຕ້ອງສຸມໃສ່ຄົ້ນຄວ້າປະຕິບັດບັນດານະໂຍບາຍຕົ້ນຕໍຈໍານວນໜຶ່ງຄື:

1) ຫັນປ່ຽນຮູບແບບການພັດທະນາເສດຖະກິດຈາກທາງກວ້າງໄປສູ່ທາງເລິກ, ຫັນຈາກການເນັ້ນໜັກແຕ່ທາງດ້ານປະລິມານໄປສູ່ການຍົກສູງສະມັດຕະພາບການຜະລິດ ແລະ ຄຸນນະພາບຂອງຜະລິດຕະພັນເປັນຕົ້ນຕໍ, ຍົກສູງປະສິດທິຜົນການລົງທຶນ, ການນໍາໃຊ້ຊັບພະຍາກອນຢ່າງສົມເຫດສົມຜົນ ແລະ ຄຸ້ມຄ່າລວມທັງການປະຢັດວັດຖຸດິບ, ປະຢັດພະລັງງານ ແລະ ຫຼຸດຜ່ອນມົນລະພິດ, ສົ່ງເສີມການປະດິດສ້າງໃໝ່ ແລະ ການນໍາໃຊ້ວິທະຍາການໃໝ່ທີ່ເປັນມິດກັບສິ່ງແວດລ້ອມ ແລະ ສັງຄົມ;
2) ເອົາໃຈໃສ່ດຸ່ນດ່ຽງບັນຫາພື້ນຖານໃນລະບົບເສດຖະກິດແຫ່ງຊາດ ເປັນຕົ້ນແມ່ນການດຸ່ນດ່ຽງລະຫວ່າງການລົງທຶນກັບການຂະຫຍາຍຕົວ ແລະ ສະຖຽນລະພາບດ້ານມະຫາພາກ, ການດຸ່ນດ່ຽງລະຫວ່າງເສດຖະກິດກັບສັງຄົມ ແລະ ສິ່ງແວດລ້ອມກໍຄືລະຫວ່າງການຜະລິດກັບການນໍາໃຊ້ແຫຼ່ງຊັບພະຍາກອນ, ລະຫວ່າງການລົງທຶນກັບການສະໜອງ ແລະ ຄວາມຕ້ອງການແຮງງານ, ລະຫວ່າງການໃຊ້ສອຍກັບການສະສົມ ແລະ ອື່ນໆ;
3) ປະຕິບັດນະໂຍບາຍ 3 ສ້າງໃຫ້ມີຜົນສໍາເລັດ ແລະ ຜັນຂະຫຍາຍໄປສູ່ເຂດອື່ນໆທີ່ມີເງື່ອນໄຂໃນທົ່ວປະເທດ, ສ້າງບັນດານະໂຍບາຍ ທີ່ມີລັກສະນະກະຕຸກຊຸກຍູ້ການພັດທະນາ, ຮັບປະກັນການພັດທະນາທີ່ສະເໝີພາບ, ມີຄວາມຍືນຍົງ ແລະ ໄປຕາມທິດສີຂຽວໃຫ້ຄົບຖ້ວນຫຼາຍຂຶ້ນ ເປັນຕົ້ນແມ່ນນະໂຍບາຍສົ່ງເສີມການລົງທຶນ ແລະ ຊຸກຍູ້ການຜະລິດ, ນະໂຍບາຍຄຸ້ມຄອງເສດຖະກິດມະຫາພາກໃຫ້ມີຄວາມໝັ້ນທ່ຽງ, ນະໂຍບາຍພັດທະນາຊັບພະຍາກອນມະນຸດ, ນະໂຍບາຍເຄື່ອນຍ້າຍແຮງງານພາຍໃນ ແລະ ລະຫວ່າງປະເທດ, ນະໂຍບາຍພັດທະນາເຂດແຄວ້ນ, ນະໂຍບາຍດ້ານສິ່ງແວດລ້ອມ, ນະໂຍບາຍຕ່າງໆທີ່ກ່ຽວຂ້ອງກັບການຄ້າພາຍໃນ ແລະ ຕ່າງປະເທດ, ນະໂຍບາຍດ້ານການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແລະ ນະ ໂຍບາຍອື່ນໆທີ່ເຫັນວ່າມີຄວາມຈໍາເປັນ;
4) ປະຕິບັດແຜນນະໂຍບາຍເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງສະເໝີຕົ້ນສະເໝີປາຍຕໍ່ໄປຢ່າງຍາວນານ, ສົ່ງເສີມການລົງທຶນໂດຍກົງຂອງຕ່າງປະເທດ ເພື່ອນໍາເອົາຄວາມຮູ້, ວິທະຍາສາດ ແລະ ເຕັກໂນໂລຊີເຂົ້າມານໍາໃຊ້; ຍາດແຍ່ງເອົາການຊ່ວຍເຫຼືອເພື່ອການພັດທະນາຈາກເພື່ອນມິດສາກົນຢ່າງຕັ້ງໜ້າ;
5) ສ້າງບັນດາປະຖົມປັດໄຈຮອງຮັບອັນຈໍາເປັນໃຫ້ໄດ້ໂດຍພື້ນຖານ ເປັນຕົ້ນແມ່ນທຶນຮອນ, ວັດຖຸ-ເຕັກນິກ ແລະ ວິທະຍາສາດ, ຂໍ້ມູນຂ່າວສານ, ບຸກຄະລາກອນ, ຜູ້ປະກອບການ ແລະ ກໍາລັງແຮງງານ;

5) ເລັ່ງລັດດຳເນີນໂຄງການຂະໜາດໃຫຍ່ດ້ານພະລັງງານ, ທາງລົດໄຟ, ທາງດ່ວນ, ສະໜາມບິນ, ລະບົບການບໍລິການຂົນສົ່ງ ແລະ ຄ່ຽນຖ່າຍສິນຄ້າ ແລະ ອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

## 3.2 ກົນໄກຈັດຕັ້ງປະຕິບັດ

ກົນໄກຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນງານບຸລິມະສິດແມ່ນສຸມໃສ່ປະຕິບັດກົນໄກແຜນການຕິດພັນກັບກົນໄກຕະຫຼາດ ແລະ ກົນໄກປະສານງານຢ່າງກົມກຽວກັນດັ່ງນີ້:

**ກ. ນຳໃຊ້ກົນໄກແຜນການຢ່າງເປັນລະບົບ ແລະ ກຳນົດບົດບາດຂອງລັດໃຫ້ຈະແຈ້ງ:**

ລັດຖະບານຈັດຕັ້ງຜັນຂະຫຍາຍຍຸດທະສາດນີ້ໃຫ້ເປັນແຜນງານ, ແຜນການ 5 ປີ, ແຜນການ ປະຈຳປີ ແລະ ໂຄງການຂອງຂະແໜງການ ແລະ ທ້ອງຖິ່ນໃຫ້ເປັນລະອຽດ; ເພີ່ມຂີດຄວາມສາມາດ ແລະ ປະສິດທິພາບຂອງການຄຸ້ມຄອງລັດຕໍ່ເສດຖະກິດ, ປັບປຸງລະບອບລະບຽບການ ແລະ ກົນໄກຄຸ້ມຄອງເສດຖະກິດໃຫ້ມີລັກສະນະສົ່ງເສີມຢ່າງຕັ້ງໜ້າຄື:

1) ສຸມໃສ່ປະຕິບັດບົດບາດຄຸ້ມຄອງມະຫາພາກດ້ວຍກົດໝາຍ, ນະໂຍບາຍ ແລະ ມາດຕະການອື່ນໆ ເພື່ອອຳນວຍຄວບຄຸມເສດຖະກິດໃຫ້ມີການຂະຫຍາຍຕົວຢ່າງໝັ້ນທ່ຽງ;
2) ສຸມໃສ່ດັດສົມ, ສົ່ງເສີມ ແລະ ຄຸ້ມຄອງກົນໄກຕະຫຼາດ, ນຳໃຊ້ດ້ານຕັ້ງໜ້າຂອງກົນໄກຕະຫຼາດໃຫ້ເກີດປະໂຫຍດສູງສຸດ; ເຮັດໃຫ້ຕະຫຼາດມີບົດບາດເປັນຕົວກຳນົດການນຳໃຊ້ທຶນຮອນ, ແຫຼ່ງວັດຖຸດິບໃຫ້ເກີດປະໂຫຍດສູງສຸດ, ທັງກະຕຸກຊຸກຍູ້ຜູ້ປະກອບການໃຫ້ມີຄວາມຫ້າວຫັນປະດິດສ້າງ, ນຳໃຊ້ວິທະຍາສາດ-ວິທະຍາການໃໝ່ເຂົ້າສູ່ການຜະລິດທຸລະກິດ ແລະ ການບໍລິການດ້ວຍການປັບປຸງລະບອບລະບຽບຕາມການກົນໄກໃຫ້ເອື້ອອຳນວຍ ແລະ ຮັດກຸມຕື່ມອີກ; ເດັດດ່ຽວແກ້ໄຂຂອດທີ່ກີດໜ່ວງ-ອັດຕັນໃຫ້ທະລຸໂລ່ງໂປ່ງໄສຍິ່ງຂຶ້ນ. ຄຽງຄູ່ນັ້ນ, ຕ້ອງເອົາໃຈໃສ່ຈຳກັດດ້ານຫຍໍ້ທໍ້ຂອງຕະຫຼາດ ເພື່ອຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວໄປຢ່າງຖືກທິດຖືກທາງ ແລະ ມີຄວາມສົມດຸນໃນດ້ານຕ່າງໆທັງສອດຄ່ອງກັບຈຸດໝາຍແຫ່ງການພັດທະນາປະເທດຊາດ ທັງເສີມສ້າງໄດ້ຄວາມສະເໝີພາບ ແລະ ຄວາມຍຸຕິທຳໃນສັງຄົມ, ບໍ່ໃຫ້ມີລະດັບການພັດທະນາທີ່ແຕກໂຕນກັນຫຼາຍລະຫວ່າງບໍລິເວນເຂດແຄວ້ນຕ່າງໆຂອງປະເທດ ແລະ ບໍ່ໃຫ້ເກີດມີການແຍກຂໍ້ທຸກ-ຂໍ້ຮັ່ງທີ່ແຕກໂຕນກັນເກີນໄປໃນສັງຄົມ;
3) ຄຸ້ມຄອງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມໂດຍນຳໃຊ້ລະບົບການແຈກຢາຍລາຍໄດ້ໃຫ້ສົມເຫດສົມຜົນຕາມທິດຕອບສະໜອງຜົນປະໂຫຍດຂອງຜູ້ອອກແຮງງານ, ຂອງຜູ້ປະກອບການ, ຂອງລັດ ແລະ ລວມໝູ່ຢ່າງເປັນທຳ ແລະ ກົມກຽວກັນ;
4) ເອົາໃຈໃສ່ຈັດສັນລາຍຮັບທີ່ໄດ້ຈາກການຂຸດຄົ້ນຊັບພະຍາກອນທຳມະຊາດໃຫ້ສົມເຫດສົມຜົນ ແລະ ຍຸຕິທຳຕື່ມອີກ; ຈັດສັນຢ່າງເໝາະສົມໃຫ້ແກ່ທ້ອງຖິ່ນ ແລະ ຮາກຖານຊຸມຊົນທີ່ຕິດພັນກັບໂຄງການ; ຈັດສັນໃຫ້ແກ່ການຟື້ນຟູບູລະນະຊັບພະຍາກອນທຳມະຊາດ ແລະ ການພັດທະນາຊັບພະຍາກອນມະນຸດໃຫ້ຫຼາຍຂຶ້ນກວ່າເກົ່າ;
5) ບັນດາກະຊວງອົງການລັດຂັ້ນສູນກາງ ຕ້ອງປະຕິບັດພາລະບົດບາດຄຸ້ມຄອງມະຫາພາກຢ່າງຄົບຖ້ວນ ແລະ ຮັດກຸມໂດຍສຸມໃສ່ການສ້າງແຜນການຜັນຂະຫຍາຍການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ແລະ ແຜນຍຸດທະສາດແຫ່ງການພັດທະນາທີ່ຂຶ້ນກັບຄວາມຮັບຜິດຊອບຂອງຂະແໜງການຕົນໃຫ້ວ່ອງໄວທັນການ ແລະ ຊີ້ນຳການຈັດຕັ້ງປະຕິບັດໃຫ້ເປັນຈິງ; ສຸມໃສ່ຄົ້ນຄວ້າປັບປຸງ ຫຼື ອອກນະໂຍບາຍ ແລະ ກົດໝາຍ ສຳລັບການຄຸ້ມຄອງຂະແໜງການໃຫ້ຄົບຖ້ວນສົມບູນ; ສຸມໃສ່ຂຶ້ນແຜນກຳນົດ ແລະ ຈັດຕັ້ງປະຕິບັດການກໍ່ສ້າງບຳລຸງຍົກລະດັບພະນັກງານໃຫ້ທົ່ວທຸກຂະແໜງການ; ສຸມໃສ່ຄົ້ນຄວ້າວິທະຍາສາດ ແລະ ເຜີຍແຜ່ແນະນຳການນຳໃຊ້ວິທະຍາສາດ ແລະ ວິທະຍາການໃໝ່; ສຸມໃສ່ຕິດຕາມ, ກວດກາ, ປະ

ເມີນຜົນ ແລະ ຊ່ວຍຍູ້ໜູນທ້ອງຖິ່ນ ແລະ ຫົວໜ່ວຍຈຸນລະພາກໃນການຈັດຕັ້ງປະຕິບັດກົດໝາຍ, ນະໂຍບາຍ ແລະ ວຽກງານຕ່າງໆຂອງຂະແໜງການຕົນໃຫ້ຖືກຕ້ອງ ແລະ ໄດ້ຮັບຜົນດີ;

6) ກຳນົດໃຫ້ຈະແຈ້ງກ່ຽວກັບຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບລະຫວ່າງອົງການຄຸ້ມຄອງຂັ້ນສູນກາງກັບທ້ອງຖິ່ນ, ປັບປຸງກົນໄກການປະສານສົມທົບລະຫວ່າງສາຍຕັ້ງກັບສາຍຂວາງ, ລະຫວ່າງການລວມສູນກັບການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບຄຸ້ມຄອງໃຫ້ມີຄວາມກົມກຽວ;

7) ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດວິໄນແຜນການ ແລະ ວິໄນການເງິນ, ມີໄຫວພິບໃນການປະຕິບັດນະໂຍບາຍການເງິນ-ເງິນຕາ, ເພີ່ມລັກສະນະຕັ້ງໜ້າໃນການປະຕິບັດນະໂຍບາຍການເງິນ-ເງິນຕາ ເພື່ອສົ່ງເສີມຢ່າງແຂງແຮງຂະແໜງການຜະລິດ ແລະ ການບໍລິການທີ່ພວກເຮົາມີທ່າແຮງ, ລວມທັງສົ່ງເສີມຫົວໜ່ວຍທຸລະກິດຂະໜາດນ້ອຍ-ຂະໜາດກາງໄປຄວບຄູ່ກັບໂຄງການລົງທຶນຂະໜາດໃຫຍ່ທີ່ເປັນບູລິມະສິດ ເພື່ອສ້າງຖານການຂະຫຍາຍຕົວທີ່ໝັ້ນຄົງ;

8) ປະຕິບັດບັນດາແຜນງານ, ໂຄງການຮ່ວມມື ແລະ ການເຊື່ອມໂຍງໃນອະນຸພາກພື້ນແມ່ນໍ້າຂອງ, ອາຊຽນ ແລະ ສາກົນດ້ວຍຄວາມເປັນເຈົ້າການສູງ; ຄົ້ນຄວ້າໃຫ້ເລິກເຊິ່ງ ແລະ ສ້າງໂຄງການອັນຈະແຈ້ງ ເພື່ອຂົນຂວາຍ, ຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາເຂົ້າໃນການຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງຂອງປະເທດເຮົາ; ປັບປຸງແລະຍົກສູງຂີດຄວາມສາມາດຂອງປະເທດເຮົາໃນທຸກດ້ານ, ຊ່ວຍຍູ້ໜູນເຊິ່ງກັນ ແລະ ກັນລະຫວ່າງພາກລັດກັບພາກທຸລະກິດ ເພື່ອເປີດກວ້າງການຮ່ວມມືໃນຫຼາຍລະດັບ, ຫຼາຍທິດ, ຫຼາຍຮູບການທັງແບບສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອຕອບສະໜອງຜົນປະໂຫຍດຂອງກັນ ແລະ ກັນຢ່າງເໝາະສົມ ທັງໃນສະເພາະໜ້າ ແລະ ຍາວນານ;

9) ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຕາມກົດໝາຍ, ຮັບປະກັນໃຫ້ທົ່ວສັງຄົມດຳລົງຊີວິດຢູ່ພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ ເປັນຕົ້ນແມ່ນພະນັກງານລັດຖະກອນທຸກຄົນຕ້ອງເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍ, ເປັນແບບຢ່າງໃນການພັດທະນາ ແລະ ການດຳລົງຊີວິດທີ່ປອດໃສຂາວສະອາດພາຍໃຕ້ລັດຖະທຳມະນູນ ແລະ ລະບົບກົດໝາຍຂອງຊາດ; ເອົາໃຈໃສ່ປົກປ້ອງ ແລະ ເສີມຂະຫຍາຍສິດປະຊາທິປະໄຕກຳຄືຜົນປະໂຫຍດອັນຊອບທຳຂອງພົນລະເມືອງຢ່າງແທ້ຈິງ.

**ຂ. ນຳໃຊ້ກົນໄກຕະຫຼາດທີ່ມີການດັດສົມຂອງລັດ, ຊຸກຍູ້ສົ່ງເສີມກຳລັງແຮງສັງລວມຂອງຊາດ ແລະ ຂອງທຸກພາກສ່ວນເສດຖະກິດເຂົ້າໃນການພັດທະນາຢ່າງແຂງແຮງ:**

1) ສ້າງເງື່ອນໄຂ ແລະ ກົນໄກເອື້ອອຳນວຍໃຫ້ທຸກພາກສ່ວນເສດຖະກິດຂະຫຍາຍຕົວ ແລະ ປະກອບສ່ວນເຂົ້າໃນການພັດທະນາຢ່າງແຂງແຮງ ເພື່ອຫັນປ່ຽນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ ແລະ ສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມໃຫ້ສົມບູນຍິ່ງໆຂຶ້ນ;

2) ປະຕິບັດນະໂຍບາຍສະເໝີພາບຕໍ່ບັນດາພາກສ່ວນເສດຖະກິດຢ່າງສະເໝີຕົ້ນສະເໝີປາຍ, ປັບປຸງລະບົບນິຕິກຳໃຫ້ສອດຄ່ອງເໝາະສົມຕື່ມອີກ ເພື່ອຮັບປະກັນໃຫ້ບັນດາພາກສ່ວນເສດຖະກິດສາມາດເຄື່ອນໄຫວຢ່າງມີຄວາມສະເໝີພາບຕໍ່ໜ້າກົດໝາຍຢ່າງແທ້ຈິງ, ທັງມີສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ບັນດາພາກສ່ວນເສດຖະກິດເຫຼົ່ານັ້ນ ສາມາດເຄື່ອນໄຫວຕາມກົນໄກຕະຫຼາດໄດ້ຢ່າງຄ່ອງຕົວ ເພື່ອໃຫ້ທຸກພາກສ່ວນເສດຖະກິດສາມາດປະກອບສ່ວນເຂົ້າໃນການຂະຫຍາຍກຳລັງການຜະລິດ, ສ້າງສາພັດທະນາປະເທດຊາດໄດ້ຢ່າງເໝາະສົມ, ທັງມີຄວາມສາມາດແຂ່ງຂັນເພີ່ມຂຶ້ນໃນຂະບວນວິວັດແຫ່ງການເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

3) ປັບປຸງກໍ່ສ້າງພາກສ່ວນເສດຖະກິດຂອງລັດໃຫ້ມີຄວາມເຂັ້ມແຂງ ເພື່ອເປັນກຳລັງແຮງຮ່ວມກັບພາກສ່ວນເສດຖະກິດອື່ນໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ; ປັບປຸງລັດວິສາຫະກິດໃຫ້ມີປະສິດທິຜົນ ແລະ ທັນສະໄໝດ້ວຍມາດຕະການຕ່າງໆທີ່ເໝາະສົມ ລວມທັງການຫັນໄປສູ່ວິສາຫະກິດປະສົມ ຫຼື

ຮຸ້ນສ່ວນ; ຄົ້ນຄວ້າສ້າງຕັ້ງລັດວິສາຫະກິດໃໝ່ຂຶ້ນໃນບາງຂະແໜງການທີ່ເຫັນວ່າມີຄວາມຈຳເປັນ ແລະ ມີເງື່ອນໄຂຄວາມສາມາດດຳເນີນງານຢ່າງມີປະສິດທິຜົນສູງ ເປັນຕົ້ນແມ່ນໃນຂະແໜງການທີ່ມີຄວາມສຳຄັນສຳລັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂະແໜງການທີ່ຊ່ວຍສ້າງການສົມທົບທຶນໄດ້ ແລະ ຂະແໜງການທີ່ຊ່ວຍໃຫ້ລັດສາມາດສະໜອງການບໍລິການສາທາລະນະປະໂຫຍດໃຫ້ແກ່ປະຊາຊົນພົນລະເມືອງໄດ້ຢ່າງກວ້າງຂວາງ ແລະ ທົ່ວເຖິງກວ່າເກົ່າ ເຊິ່ງພາກສ່ວນເສດຖະກິດອື່ນບໍ່ໃຫ້ຄວາມສົນໃຈ ຫຼື ບໍ່ສາມາດເຮັດໄດ້;

4) ສົ່ງເສີມພາກສ່ວນເສດຖະກິດຮ່ວມມືຂອງປະຊາຊົນດ້ວຍຫຼາຍຮູບການທີ່ເໝາະສົມ ລວມທັງເສດຖະກິດຄອບຄົວ, ເສດຖະກິດຄອບຄົວແບບເປີດກວ້າງ ແລະ ວິສາຫະກິດຂະໜາດນ້ອຍ-ຂະໜາດກາງໃຫ້ເຂັ້ມແຂງກວ່າເກົ່າ; ວາງນະໂຍບາຍສົ່ງເສີມທີ່ເປັນລະບົບຄົບຊຸດເປັນຕົ້ນແມ່ນນະໂຍບາຍດ້ານການສະໜອງທຶນ, ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີໃໝ່ ລວມທັງດ້ານວິຊາການ ແລະ ການຕະຫຼາດທີ່ໝັ້ນທ່ຽງເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ພາກສ່ວນເສດຖະກິດດັ່ງກ່າວສາມາດເຄື່ອນໄຫວໄດ້ຢ່າງມີຊີວິດຊີວາຢູ່ໃນພື້ນຖານເສດຖະກິດແຫ່ງຊາດ;

5) ປະຕິບັດນະໂຍບາຍສົ່ງເສີມພາກສ່ວນເສດຖະກິດເອກະຊົນທັງພາຍໃນ ແລະ ຕ່າງປະເທດໃຫ້ມີການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ສືບຕໍ່ສົ່ງເສີມການລົງທຶນໂດຍກົງຂອງເອກະຊົນພາຍໃນ ແລະ ຕ່າງປະເທດຢ່າງມີຈຸດສຸມ. ພ້ອມກັນນັ້ນ, ກໍຕ້ອງດຳເນີນການປັບປຸງສະພາບແວດລ້ອມ ສຳລັບການດຳເນີນການທຸລະກິດຂອງພາກສ່ວນເສດຖະກິດດັ່ງກ່າວໃນຂົງເຂດກະສິກຳ, ອຸດສາຫະກຳໃຫ້ດີຂຶ້ນຕື່ມອີກ ເປັນຕົ້ນແມ່ນອຸດສາຫະກຳປຸງແຕ່ງກະສິກຳ ແລະ ການບໍລິການເພື່ອເຮັດໃຫ້ພື້ນຖານເສດຖະກິດແຫ່ງຊາດຂອງພວກເຮົາມີກຳລັງແຮງ ແລະ ມີຄວາມສາມາດແຂ່ງຂັນສູງຂຶ້ນ.

**ຄ. ປັບປຸງ ແລະ ພັດທະນາກົນໄກປະສານງານລະຫວ່າງລັດກັບລັດ, ລັດກັບພາກທຸລະກິດ, ລັດກັບເອກະຊົນໃຫ້ເຂົ້າສູ່ລະບົບທີ່ມີປະສິດທິພາບສູງ, ມີຄວາມໂລ່ງລ່ຽນ, ສະດວກສະບາຍ ແລະ ວ່ອງໄວ:**

1) ປັບປຸງບັນດາອົງການໃນລະບົບອຳນາດລັດໃຫ້ກະທັດຮັດ, ໜັກແໜ້ນ, ເຂັ້ມແຂງ; ກຳນົດພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງອົງການລັດຕ່າງໆ ຢູ່ໃນຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ຈະແຈ້ງ; ແບ່ງຂັ້ນຄຸ້ມຄອງລະຫວ່າງອົງການຂັ້ນສູນກາງກັບທ້ອງຖິ່ນໃຫ້ຊັດເຈນ;

2) ອອກນິຕິກຳ ສຳລັບການປະສານງານ ແລະ ການສະໜອງຂໍ້ມູນລະຫວ່າງສູນກາງກັບສູນກາງ, ສູນກາງກັບທ້ອງຖິ່ນ, ສາຍຕັ້ງກັບສາຍຂວາງ ພ້ອມທັງແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ປະສານງານໃຫ້ມີຄວາມກົມກຽວກັນ.

3) ນຳໃຊ້ສື່ສານມວນຊົນ ແລະ ສື່ສັງຄົມອອນໄລຍ໌ ເພື່ອໂຄສະນາເຜີຍແຜ່ ແລະ ສົນທະນາແລກປ່ຽນຄຳຄິດຄຳເຫັນສາທາລະນະ, ຈັດກອງປະຊຸມສຳມະນາປຶກສາຫາລືຮ່ວມລະຫວ່າງພາກລັດ ແລະ ທຸລະກິດເອກະຊົນເປັນປະຈຳ ເປັນຕົ້ນແມ່ນເວທີນັກທຸລະກິດໜຸ່ມ, ນັກທຸລະກິດຍິງ, ສະມາຄົມທຸລະກິດຕ່າງໆ ແລະ ອື່ນໆ.

## 3.3 ມາດຕະການຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ໃຫ້ມີຜົນສຳເລັດດີນັ້ນແມ່ນໜ້າທີ່ຂອງທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ທົ່ວປວງຊົນ; ແມ່ນຂອງທຸກຂັ້ນ, ທຸກຂະແໜງການນັບແຕ່ສູນກາງລົງຮອດທ້ອງຖິ່ນ. ມາດຕະການຈັດຕັ້ງປະຕິບັດຍຸດທະສາດນີ້ໃຫ້ເປັນຮູບປະທຳແມ່ນລວມມີກົນໄກໃນການສ້າງຄວາມເປັນເອກະພາບໃນການຮັບຮູ້ເຊື່ອມຊຶມ, ການຫັນເປັນແຜນວຽກ, ແຜນຄົນ ແລະ ແຜນເງິນດັ່ງຕໍ່ໄປນີ້:

**ກ. ມາດຕະການດ້ານການຈັດຕັ້ງ:**

1) ການນໍາຂັ້ນລັດຖະບານ, ກະຊວງ, ອົງການທຽບເທົ່າ, ນະຄອນຫຼວງ ແລະ ແຂວງຈັດຕັ້ງການເຊື່ອມຊຶມເນື້ອໃນຍຸດທະສາດນີ້ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນໃຫ້ເລິກເຊິ່ງ ທັງຊີ້ນໍາການຈັດຕັ້ງຜັນຂະຫຍາຍໃຫ້ເປັນຍຸດທະສາດການພັດທະນາ ໄລຍະ 10 ປີ (2016-2025) ຂອງຂະແໜງການ ແລະ ທ້ອງຖິ່ນຂອງຕົນ ໂດຍຜັນຂະຫຍາຍອອກເປັນແຜນງານ, ແຜນການ ແລະ ໂຄງການທີ່ສາມາດຈັດຕັ້ງປະຕິໄດ້ຕົວຈິງຢູ່ໃນຂະແໜງການຕົນ; ສ້າງເປັນບົດສຶກສາຄົ້ນຄວ້າລົງເລິກລະອຽດ ສໍາລັບຂະແໜງການພ້ອມທັງກໍານົດວຽກງານບຸລິມະສິດ ເພື່ອດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງການເພື່ອການພັດທະນາ.

2) ເສີມຂະຫຍາຍພາລະບົດບາດຂອງທຸກອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ, ແນວໂຮມ, ບັນດາອົງການຈັດຕັ້ງມະຫາຊົນ, ປະຊາຊົນ, ບັນດາການຈັດຕັ້ງສັງຄົມ, ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດນີ້ໃຫ້ເປັນຮູບປະທໍາ.

3) ມອບໃຫ້ຫ້ອງວ່າການລັດຖະບານອອກດໍາລັດຈັດຕັ້ງປະຕິບັດ, ມອບໃຫ້ກະຊວງແຜນການ ແລະ ການລົງທຶນເປັນໃຈກາງປະສານງານລະຫວ່າງບັນດາຂະແໜງການອ້ອມຂ້າງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດນີ້ໃຫ້ເປັນອັນລະອຽດ, ມີປະສິດທິພາບ ແລະ ມີປະສິດທິຜົນສູງສຸດ.

**ຂ. ມາດຕະການດ້ານການເງິນ ແລະ ແຫຼ່ງທຶນພັດທະນາ:**

1) ລະດົມ, ຊຸດຄົ້ນ ແລະ ນໍາໃຊ້ແຫຼ່ງທຶນຈາກທຸກພາກສ່ວນເສດຖະກິດເຂົ້າໃສ່ການພັດທະນາຢ່າງມີຈຸດສຸມເປັນຕົ້ນແມ່ນ: ງົບປະມານຂອງລັດ; ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ; ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ; ສິນເຊື່ອທະນາຄານ, ສະຫະກອນອອມຊັບ ແລະ ສະຖາບັນການເງິນຈຸນລະພາກ ແລະ ທຶນຂອງປະຊາຊົນເອງ,

2) ຍົກສູງປະສິດທິຜົນ ແລະ ຄຸນນະພາບຂອງທຶນ, ຫຼຸດຜ່ອນການຮົ່ວໄຫຼ ແລະ ການຟູມເຟືອຍໃນການລົງທຶນຂອງລັດ. ການລົງທຶນຂອງລັດ ຕ້ອງຮັບໃຊ້ເປົ້າໝາຍຍຸດທະສາດຂອງລັດ, ລົງທຶນເຂົ້າໃນອຸດສາຫະກໍາ ແລະ ຂົງເຂດທີ່ສໍາຄັນຕໍ່ຄວາມໝັ້ນຄົງຂອງຊາດ ແລະ ເປັນສາຍເລືອດຂອງເສດຖະກິດໃຫ້ຫຼາຍຂຶ້ນ.

**ຄ. ມາດຕະການດ້ານການຕິດຕາມ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດຍຸດທະສາດ:**

1) ສ້າງກົນໄກ ແລະ ແຜນການ ສໍາລັບການຕິດຕາມ, ກວດກາ, ປະເມີນຜົນ ແລະ ຕີລາຄາສະພາບການຈັດຕັ້ງຜັນຂະຫຍາຍຍຸດທະສາດນີ້ໃຫ້ເປັນປົກກະຕິ. ຖ້າຫາກມີບັນຫາໃໝ່ເກີດຂຶ້ນໃນໄລຍະການຈັດຕັ້ງປະຕິບັດຍຸດທະສາດນີ້ແມ່ນຕ້ອງໄດ້ມີການປັບປຸງໃຫ້ສອດຄ່ອງກັບສະພາບການໃໝ່ພາຍໃຕ້ທິດຊີ້ນໍາຂອງກົມການເມືອງສູນກາງພັກ.

2) ປັບປຸງລະບົບ ແລະ ເຄື່ອງມືໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງຜັນຂະຫຍາຍຍຸດທະສາດນີ້ໃຫ້ເປັນລະບົບຄົບຊຸດ.

## ເອກະສານຊ້ອນທ້າຍ 1: ຕາຕະລາງສຳຄັນທາງດ້ານເສດຖະກິດ-ສັງຄົມ

### ຕາຕະລາງ 1: ການຂະຫຍາຍຕົວຂອງເສດຖະກິດ ແລະ ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນ:

| ລ/ດ | ລາຍການ | 2001-05 | | 2006-10 | | 2011-14 | 2014-15 |
|---|---|---|---|---|---|---|---|
| | | ແຜນ | ບັນລຸ | ແຜນ | ບັນລຸ | ບັນລຸ | ຄາດຄະເນ |
| 1 | ອັດຕາການຂະຫຍາຍໂຕຂອງ GDP | 7-7,5% | 6,3% | 7,5-8% | 7,9% | 8,1% | 7,5 |
| 2 | GDP ຕໍ່ຫົວຄົນ*(ໂດລາສະຫະລັດ) | 500-550 | 491 | 700-750 | 1.069 | 1.671 | 1.970 |

**ແຫຼ່ງຂໍ້ມູນ:** ກົມແຜນການ, ສູນສະຖິຕິແຫ່ງຊາດ, ຕົວເລກຄາດຄະເນຈາກສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ.
***ໝາຍເຫດ:** ຕົວເລກທ້າຍໄລຍະ

### ຕາຕະລາງ 2: ການປ່ຽນແປງຂອງໂຄງປະກອບເສດຖະກິດ:

| ລດ | ລາຍການ | 1999/00 | 2004/05 | 2009/10 | 2013/14 | 2014/15 |
|---|---|---|---|---|---|---|
| 1 | ກະສິກຳ-ປ່າໄມ້ | 46,2% | 34,9% | 28,9% | 24,8% | 23,7% |
| 2 | ອຸດສາຫະກຳ-ກໍ່ສ້າງ | 17,9% | 21,4% | 26,9% | 27,5% | 29,1% |
| 3 | ບໍລິການ | 35,9% | 43,7% | 44,2% | 47,7% | 47,2% |

**ແຫຼ່ງຂໍ້ມູນ**: ກົມແຜນການ, ສູນສະຖິຕິແຫ່ງຊາດ, ຕົວເລກຄາດຄະເນຈາກສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ.

### ຕາຕະລາງ 3: ການປ່ຽນແປງຂອງໂຄງປະກອບແຮງງານ (2000-2015):

| ລ/ດ | ລາຍການ | 2005 | 2010 | 2015 |
|---|---|---|---|---|
| 1 | ກະສິກຳ-ປ່າໄມ້ | 78,5% | 71,3% | 65,3% |
| 2 | ອຸດສາຫະກຳ-ກໍ່ສ້າງ | 4,8% | 8,3% | 11,4% |
| 3 | ບໍລິການ | 16,7% | 20,4% | 23,3% |

**ແຫຼ່ງຂໍ້ມູນ:** ກອງປະຊຸມພາຍໃນກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄັ້ງວັນທີ 3 ມີນາ 2015.

## ຕາຕະລາງ 4: ຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍ MDGs ໃນປີ 2013:

| ເປົ້າໝາຍສະຫະສະວັດ ດ້ານການພັດທະນາ | ຕົວຊີ້ບອກ | | ພື້ນຖານ | ຄວາມຄືບໜ້າ | ເປົ້າໝາຍ 2015 |
|---|---|---|---|---|---|
| **ເປົ້າໝາຍ 1: ລຶບລ້າງຄວາມທຸກຍາກ ແລະ ຄວາມອຶດຫິວ** | 1.1 | ສັດສ່ວນຂອງປະຊາກອນຢູ່ລຸ່ມເສັ້ນຄວາມທຸກຍາກທາງການ (%) | 46 (1992) | 20,5 (2012/13)* | 24 |
| | 1.8 | ອັດຕາສ່ວນຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ (%) | 44 (1993) | 27 (2011/2012) | 22 |
| | 1.9 | ອັດຕາສ່ວນຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີທີ່ມີຄວາມສູງຕໍ່າກວ່າມາດຕະຖານ (%) | 48 (1993) | 38 (2011/2012) | 34 |
| **ເປົ້າໝາຍ 2: ຮັບປະກັນໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ** | 2.1 | ອັດຕາການເຂົ້າໂຮງຮຽນປະຖົມສຸດທິ (%) | 58,8 (1992) | 95,2 (2012) | 98 |
| | 2.3 | ອັດຕາການເຂົ້າຮຽນ ແລະ ສືບຕໍ່ຮຽນຮອດຊັ້ນ ປ 5 ຂອງເດັກ (%) | 47,7 (1992) | 70 (2012) | 95 |
| | 2.4 | ອັດຕາການຮູ້ໜັງສືຂອງປະຊາກອນໜຸ່ມ (15-24 ປີ) (%) | 71,1 (1995) | 73,1 (2011) | 99 |
| **ເປົ້າໝາຍ 3: ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ** | 3.1 | ຈຳນວນເດັກນ້ອຍຍິງທີ່ເຂົ້າໂຮງຮຽນຕໍ່ກັບເດັກນ້ອຍຊາຍຈຳນວນ100 ຄົນໃນແຕ່ລະຊັ້ນຮຽນ | | | |
| | | ຊັ້ນປະຖົມ | 0,79 (1990) | 0,91 (2012) | 1 |
| | | ຊັ້ນມັດທະຍົມຕອນຕົ້ນ | 0,70 (1990) | 0,89 (2012) | 1 |
| | | ຊັ້ນມັດທະຍົມຕອນປາຍ | 0,67 (1990) | 0,83 (2012) | 1 |
| **ເປົ້າໝາຍ 4: ຫຼຸດຜ່ອນອັດຕາການຕາຍຂອງເດັກ** | 4.1 | ອັດຕາການຕາຍຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ (1.000 ທີ່ເກີດມີຊີວິດ) | 170 (1993) | 79 (2011) | 70 |
| | 4.2 | ອັດຕາການຕາຍຂອງເດັກນ້ອຍອາຍຸຕໍ່າກວ່າ 1 ປີ (1.000 ທີ່ເກີດມີຊີວິດ) | 114 (1993) | 68 (2011) | 45 |
| | 4.3 | ອັດຕາການສັກຢາກັນໝາກແດງໃນເດັກນ້ອຍ 1 ປີລົງມາ (%) | 67 (1995) | 72 (2011) | 90 |
| **ເປົ້າໝາຍ 5: ສົ່ງເສີມສຸຂະພາບຂອງແມ່** | 5.1 | ອັດຕາການຕາຍຂອງແມ່ (ຕໍ່ 100.000 ຄົນ) | 796 (1995) | 357 (2009) | 260 |
| | 5.2 | ອັດຕາຂອງການເກີດລູກທີ່ໄດ້ຮັບການຊ່ວຍເຫຼືອຈາກຊ່ຽວຊານ (%) | 14 (2000) | 42 (2011) | 50 |
| | 5.3 | ອັດຕາການຄຸມກຳເນີດ (%) | 13 (1990) | 50 (2011) | 55 |
| | 5.5 | ອັດຕາການເຂົ້າເຖິງການເບິ່ງແຍງຄັນ (%) | 21 (2000) | 28,5 (2005) | 60 |
| **ເປົ້າໝາຍ 6: ຕ້ານກັບເຊື້ອພະຍາດ** | 6.1 | ອັດຕາການຕິດເຊື້ອ HIV ໃນກຸ່ມປະຊາກອນທົ່ວໄປທີ່ມີອາຍຸແຕ່ 15-49 ປີ | 0,1 | 0,28 (2012) | <1 |

| | | | | | |
|---|---|---|---|---|---|
| **HIV/AIDS, ມາລາເຣຍ ແລະ ເຊື້ອພະຍາດອື່ນໆ** | 6.5 | ອັດຕາການຕາຍຍ້ອນໄຂ້ຍຸງ (ຕໍ່ 100.000 ຄົນ) | 7,1 (2000) | 0,3 (2011) | 0,2 |
| | 6.8 | ອັດຕາການຕິດເຊື້ອວັນນະໂລກ (ຕໍ່ 100.000ຄົນ) | 492 (1990) | 213 (2011) | 240 |
| **ເປົ້າໝາຍ 7: ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ** | 7.1 | ອັດຕາສ່ວນຂອງເນື້ອທີ່ປ່າໄມ້ປົກຫຸ້ມ (%) | 49,1 (1982) | 40,34 (2010) | 65 |
| | 7.8 | ອັດຕາການດື່ມນ້ຳສະອາດ (%) | 28 (1990) | 70 (2011) | 80 |
| | 7.9 | ອັດຕາການນຳໃຊ້ວິດຖ່າຍຂອງປະຊາຊົນ (%) | 17 (1995) | 57 (2011) | 60 |
| **ເປົ້າໝາຍ 9: ຫຼຸດຜ່ອນຜົນກະທົບຈາກລູກລະເບີດບໍ່ທັນແຕກ ໃນ ສປປ ລາວ** | 9.1 | ເນື້ອທີ່ທີ່ໄດ້ຮັບການເກັບກູ້ລະເບີດ (ເຮັກຕາ/ປີ) | 580,77 (1999) | 6.034 (2011) | 20.000 |
| | 9.2 | ຈຳນວນຜູ້ບາດເຈັບ ແລະ ຕາຍຍ້ອນອຸບັດຕິເຫດຈາກລະເບີດບໍ່ທັນແຕກ (ກໍລະນີ/ປີ) | 257 (1999) | 99 (2011) | < 75 |

**ແຫຼ່ງຂໍ້ມູນ:** ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍສະຫະສະວັດດ້ານການພັດທະນາຂອງ ສປປ ລາວ ປະຈຳປີ 2013

* ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ກາງສະໄໝ, ກະຊວງແຜນການ ແລະ ການລົງທຶນ, ປີ 2013.

## ເອກະສານຊ້ອນທ້າຍ 2: ບາງເປົ້າໝາຍສູ້ຊີນຂອງຍຸດທະສາດຮອດ ປີ 2030

| ເປົ້າໝາຍ | 2014/15 | 2020 | 2025 | 2030 |
|---|---|---|---|---|
| GDP ລາຄາໃນປີ (ຕື້ກີບ) | 102,320 | 187,931 | 344,339 | 630,922 |
| GDP ຕໍ່ຫົວຄົນ (USD) | 1,970 | 3,197 | 5,257 | 8,922 |
| GNI ຕໍ່ຫົວຄົນ (USD) (Atlas Method) | 1,554 | 2,522 | 4,146 | 7,037 |
| ປະຊາກອນ (ລ້ານຄົນ) | 6.49 | 7.08 | 7.67 | 8.15 |
| ອັດຕາຄວາມທຸກຍາກຂອງປະຊາຊົນ (% ຂອງປະຊາກອນ) | 23.2 (2013) | | ≤5 | |
| ອາຍຸຍືນສະເລ່ຍ (ປີ) | 66.9 | 72 | > 73 | |
| ຈຳນວນນັກວິທະຍາສາດ (ຕໍ່ປະຊາກອນ 10.000 ຄົນ) | 1.1 | | 11 | |
| ອັດຕາການປົກຫຸ້ມຂອງປ່າ (%ຂອງເນື້ອທີ່ທັງໝົດ) | 40.3 (2012) | | ≥70 | |
| ຈຳນວນບ້ານພັດທະນາ (% ຂອງຈຳນວນບ້ານທັງໝົດ) | 27.7%(2014) | | > 70 | |
| ອັດຕາການເຊື່ອມໂຍງທາງການຄ້າ (ມູນຄ່າການນຳເຂົ້າ ແລະ ສົ່ງອອກທຽບ GDP) | | ບໍ່ຫຼຸດ 70% | ບໍ່ຫຼຸດ 95% | ຫຼາຍກວ່າ 100% |
| ການຂະຫຍາຍຕົວຂອງປະລິມານເງິນ M2 | 23.25% (2001-15) | ບໍ່ເກີນ 24% | | |
| ລາຍຮັບ(ຕື້ກີບ) | 24,6% GDP (2011-15) | 18-20% GDP | 19-21% GDP | |
| ລາຍຈ່າຍ | 29,3% GDP (2011-15) | ບໍ່ໃຫ້ເກີນ 25% GDP | ບໍ່ໃຫ້ເກີນ 26% GDP | |

**ໝາຍເຫດ:**

1) ອັດຕາການເຕີບໂຕຂອງ GDP ສະເລ່ຍ 7.5% ຕໍ່ປີ (ສຳລັບໄລຍະ 2016-2025). ຖ້າຍັງເຕີບໂຕໃນຈັງຫວະດັ່ງກ່າວຕໍ່ໄປ ຈະສາມາດອອກຈາກ UM ຫຼື ກາຍເປັນປະເທດລາຍຮັບສູງ ໃນປີ 2041 ຊຶ່ງຈະຢູ່ໃນ LM 17 ປີ ແລະ ຢູ່ໃນ UM 13 ປີ. ຖ້າການເຕີບໂຕຊ້າລົງ (ຫຼັງປະຕິບັດຍຸດທະສາດ 10 ປີ) ແຕ່ປີ 2026 ເປັນຕົ້ນໄປ ໃນລະດັບ 7% ຈະສາມາດອອກຈາກ UM ໃນປີ 2042. ຖ້າຊ້າລົງໃນລະດັບ 6,5% ແຕ່ປີ 2026 ເປັນຕົ້ນໄປ ຈະອອກຈາກ UM ໄດ້ໃນປີ 2043.
2) ຕົວເລກຄາດຄະເນລາຍຮັບ ແລະ ລາຍຈ່າຍທັງໝົດໃນປີ 2016-2020 ແມ່ນໄດ້ຈາກແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ກະຊວງແຜນການ ແລະ ການລົງທຶນ, ສ່ວນຕົວເລກລາຍຮັບ-ລາຍຈ່າຍໃນປີອື່ນໆແມ່ນໄດ້ຈາກວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາການເງິນແຫ່ງລັດຮອດປີ 2025 ຂອງກະຊວງການເງິນ
3) ມາດຖານຈັດລະດັບລາຍຮັບຂອງທະນາຄານໂລກ ຄັ້ງລ້າສຸດແມ່ນຕົວເລກປີ 2014 ຊຶ່ງປະກາດໃນປີ 2015. ສຳລັບມາດຖານຮອດປີ 2030 ແມ່ນຄາດຄະເນໂດຍສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ໂດຍອີງໃສ່ອັດຕາການປັບຂຶ້ນຂອງມາດຖານໃນແຕ່ລະໄລຍະ ໂດຍເລືອກໄລຍະທີ່ແທດເໝາະກັບປັດຈຸບັນທີ່ສຸດ ເຊິ່ງກຳນົດສົມມຸດຖານໃຫ້ມາດຖານດັ່ງກ່າວ ເພີ່ມຂຶ້ນປີລະປະມານ 2% ດັ່ງຕາຕະລາງລຸ່ມນີ້:

| ການຈັດປະເພດລາຍຮັບ | 2014 | 2015 | 2020 | 2025 | 2030 |
|---|---|---|---|---|---|
| ລາຍຮັບຕ່ຳ (L) | < 1.045 | < 1.070 | < 1.190 | < 1.330 | < 1.480 |
| ລາຍຮັບປານກາງຕ່ຳ (LM) | 1.045– 4125 | 1.070– 4200 | 1.190– 4.700 | 1.330– 5.200 | 1.480– 5.800 |
| ລາຍຮັບປານກາງສູງ (UM) | 4.126– 12.735 | 4.200– 13.000 | 4.700– 14.500 | 5.200– 16.200 | 5.800– 18.000 |
| ລາຍຮັບສູງ (H) | > 12.735 | > 13.000 | > 14.500 | > 16.200 | > 18.000 |

## ເອກະສານຊ້ອນທ້າຍ 3: ມາດຖານ ແລະ ເງື່ອນໄຂຂອງປະເທດດ້ອຍພັດທະນາ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ

**I. ມາດຖານຂອງປະເທດດ້ອຍພັດທະນາ:**

ປະເທດດ້ອຍພັດທະນາ ແມ່ນປະເທດທີ່ຖືກປະເມີນວ່າສະຖານະພາບດ້ານເສດຖະກິດ ແລະ ສັງຄົມຂອງປະເທດມີຄວາມບອບບາງ, ບໍ່ເຂັ້ມແຂງ ເມື່ອທຽບກັບບັນດາປະເທດຕ່າງໆໃນໂລກ. ສະຖານະພາບດັ່ງກ່າວ ໄດ້ສ້າງຄວາມບອບບາງທີ່ອ່ອນໄຫວທີ່ສຸດຕໍ່ບັນດາວິກິດການຕ່າງໆທີ່ກະທົບໃສ່ນັບທັງວິກິດການເສດຖະກິດ ກໍຄືວິກິດການໄພທຳມະຊາດທີ່ນັບມື້ເພີ່ມຂຶ້ນ. ສະພາບຄວາມບອບບາງດັ່ງກ່າວຖືກວັດແທກໂດຍ 1) ລະດັບລາຍໄດ້ແຫ່ງຊາດສະເລ່ຍຕໍ່ຄົນຕໍ່ປີ (GNI per capita) ເຊິ່ງແມ່ນການວັດແທກການພັດທະນາດ້ານເສດຖະກິດ; 2) ລະດັບການພັດທະນາຊັບພະຍາກອນມະນຸດ ໂດຍນຳໃຊ້ດັດຊະນີຊັບສິນມະນຸດ (Human Asset Index – HAI) ເປັນຕົວວັກແທກ ເຊິ່ງແມ່ນການວັດແທກການພັດທະນາດ້ານສັງຄົມ; ແລະ 3) ລະດັບຄວາມບອບບາງ ຫຼື ຄວາມສ່ຽງດ້ານເສດຖະກິດຂອງປະເທດ ໂດຍນຳໃຊ້ດັດຊະນີຄວາມບອບບາງດ້ານເສດຖະກິດ (Economic Vulnerability Index–EVI) ເປັນຕົວວັດແທກ ເຊິ່ງແມ່ນການວັດແທກເຖິງໂຄງສ້າງດ້ານເສດຖະກິດທີ່ມີຄວາມບອບບາງ ຫຼື ສ່ຽງຕໍ່ການກະທົບຈາກວິກິດການຈາກຂ້າງນອກ.

ແຕ່ລະມາດຖານແມ່ນຈະໄດ້ຖືກປະເມີນທຸກໆ 3 ປີ ເຊິ່ງອາດຈະມີການປ່ຽນແປງໂດຍອີງໃສ່ສະພາບຕົວຈິງທາງດ້ານເສດຖະກິດ-ສັງຄົມຂອງໂລກໃນໄລຍະ 3 ປີຜ່ານມາ.

1) ສຳລັບມາດຖານດ້ານລາຍໄດ້ແຫ່ງຊາດ (GNI) ຕໍ່ຄົນຕໍ່ປີ ແມ່ນອີງໃສ່ມາດຖານປະເທດລາຍຮັບຕ່ຳທີ່ກຳນົດໂດຍທະນາຄານໂລກ.
2) ສຳລັບມາດຖານດັດຊະນີໝາຍຊັບສິນມະນຸດ (HAI) ແມ່ນຄິດໄລ່ມາຈາກການວັດແທກດ້ານສາທາລະນະສຸກ/ໂພຊະນາການ ແລະ ດ້ານການສຶກສາ. ສຳລັບຕົວຊີ້ວັດດ້ານສາທາລະນະສຸກ ແລະ ໂພຊະນາການປະກອບມີ ຄື: 1) ອັດຕາສ່ວນປະຊາກອນທີ່ຂາດສານອາຫານ; ແລະ 2) ອັດຕາການຕາຍຂອງເດັກອາຍຸຕ່ຳກວ່າ 5 ປີ. ສຳລັບຕົວຊີ້ວັດດ້ານການສຶກສາປະກອບມີ: 1) ອັດຕາການເຂົ້າຮຽນຊັ້ນມັດທະຍົມຂອງເດັກ; ແລະ 2) ອັດຕາການຮູ້ໜັງສືຂອງຜູ້ໃຫຍ່.
3) ສຳລັບມາດຖານດັດຊະນີໝາຍຄວາມບໍ່ໝັ້ນຄົງດ້ານເສດຖະກິດ (EVI) ແມ່ນປະເມີນໄດ້ຈາກ 8 ຕົວຊີ້ບອກ ຄື: 1) ຈຳນວນປະຊາກອນ; 2) ທີ່ຕັ້ງທີ່ສອກຫຼີກຂອງປະເທດ; 3) ການພົວພັນການຄ້າໃນໂລກ; 4) ສັດສ່ວນຂອງກະສິກຳ-ປ່າໄມ້ຕໍ່ GDP; 5) ຈຳນວນປະຊາກອນທີ່ຂາດທີ່ຢູ່ອາໄສເນື່ອງຈາກໄພທຳມະຊາດ; 6) ຄວາມບໍ່ມີສະຖຽນລະພາບຂອງການຜະລິດກະສິກຳ; 7) ຄວາມບໍ່ມີສະຖຽນລະພາບຂອງການສົ່ງອອກສິນຄ້າອຸດສາຫະກຳ ແລະ ບໍລິການ ແລະ 8) ຈຳນວນປະຊາກອນທີ່ຖືກຜົນກະທົບຈາກໄພທຳມະຊາດ.

ສຳລັບມາດຖານ ຫຼື ຕົວຊີ້ບອກກ່ຽວກັບການຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາທີ່ກຳນົດຫຼ້າສຸດໃນປີ 2015 ມີ ດັ່ງນີ້:

1. ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນຕ້ອງ ຫຼາຍກວ່າ 1.242 ໂດລາສະຫະລັດ/ຄົນ/ປີ.
2. ດັດຊະນີຊັບສິນມະນຸດ (Human Asset Index ຫຼື HAI) ຕ້ອງສູງກວ່າ 66
3. ດັດຊະນີຄວາມບອບບາງຂອງເສດຖະກິດ (Economic Vulnerability Index ຫຼື EVI) ຕ້ອງຕ່ຳກວ່າ 32

ນອກຈາກນີ້, ໃນປີ 1991 CDP ຍັງໄດ້ມີການຕົກລົງຕື່ມໃສ່ອີກ 3 ມາດຖານຄື:ຖ້າປະເທດໃດເຖິງມີລາຍໄດ້ຕ່ຳ ແລະ ໄດ້ຕາມມາດຖານເພື່ອບັນຈຸເຂົ້າ LDCs ກໍຕາມແຕ່ມີຈຳນວນປະຊາກອນຫຼາຍກວ່າ 75 ລ້ານຄົນແມ່ນ

ຈະບໍ່ຖືກຈັດເຂົ້າໃນ LDCs ເນື່ອງຈາກສະພາບປະຊາກອນທີ່ຫຼວງຫຼາຍແມ່ນເງື່ອນໄຂພັດທະນາດ້ານທຶນມະນຸດ, ແຮງງານ, ຕະຫຼາດຂອງເສດຖະກິດ. ເຖິງຢ່າງໃດກໍຕາມ, ໃນຕົວຈິງກໍມີບາງປະເທດທີ່ມີປະຊາກອນຫຼາຍກວ່າ 75 ລ້ານຄົນ (ຕົວຢ່າງ: ປະເທດບັງກະລາເທດມີປະຊາກອນຫຼາຍກວ່າ 150 ລ້ານຄົນ) ແຕ່ກໍຍັງຖືກຈັດເຂົ້າໃນບັນຊີປະເທດດ້ອຍພັດທະນາຂອງໂລກ. ເນື່ອງຈາກຄວາມຕ້ອງການຂອງປະເທດດັ່ງກ່າວເອງເຫັນວ່າປະເທດຕົນຍັງມີຄວາມສ່ຽງຫຼາຍທາງດ້ານເສດຖະກິດ-ສັງຄົມຈຶ່ງຍັງສະໝັກໃຈເຂົ້າຢູ່ໃນບັນຊີປະເທດດ້ອຍພັດທະນາທີ່ສຸດຂອງໂລກ ເພື່ອຈະໄດ້ຮັບສິດທິພິເສດດ້ານການຊ່ວຍເຫຼືອ ແລະ ດ້ານຕ່າງໆຈາກສາກົນ.

## II. ເງື່ອນໄຂຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ

ເງື່ອນໄຂຫຼຸດພົ້ນຈາກສະຖານະພາບ ຫຼື ອອກຈາກບັນຊີປະເທດດ້ອຍພັດທະນາ ຕ້ອງບັນລຸໜຶ່ງໃນສອງກໍລະນີດັ່ງລຸ່ມນີ້:

<u>ກໍລະນີໜຶ່ງ</u>: ບັນລຸເງື່ອນໄຂດຽວຄື ລາຍໄດ້ແຫ່ງຊາດ (GNI) ຫຼາຍກວ່າເງື່ອນໄຂຫຼຸດພົ້ນ 2 ເທົ່າຕົວ ຄື 2 ເທົ່າຕົວ ຂອງ 1.242 ໂດລາສະຫະລັດ ຫຼື GNI ຕ້ອງໄດ້ 2.484 ໂດລາສະຫະລັດ/ຄົນ/ປີ ຂຶ້ນໄປ.

<u>ກໍລະນີສອງ</u>: ຕ້ອງບັນລຸ 2 ໃນ 3 ເງື່ອນໄຂດັ່ງກ່າວຂ້າງເທິງ. ຕ້ອງໄດ້ບັນລຸເງື່ອນໄຂດັ່ງກ່າວ ຕາມການປະເມີນຂອງສາກົນ 2 ຄັ້ງທຸກໆ 3 ປີຕິດຕໍ່ກັນ.

ໃນກໍລະນີທີ່ບັນລຸບັນດາເງື່ອນໄຂ ເພື່ອຫຼຸດພົ້ນແລ້ວ ແຕ່ຖ້າປະເທດກ່ຽວຂ້ອງບໍ່ຢາກອອກຈາກບັນຊີປະເທດດ້ອຍພັດທະນາກໍ່ສາມາດເຈລະຈາຕໍ່ລອງກັນໄດ້ດ້ວຍເຫດຜົນສຳຄັນຕ່າງໆ.

## III. ຂັ້ນຕອນການປະເມີນ ແລະ ບັນຈຸເອົາປະເທດດ້ອຍພັດທະນາ

ພາຍຫຼັງການປະເມີນດ້ານວິຊາການຂອງຄະນະວິຊາການຈາກ CDP ສຳລັບຊ່ວງໄລຍະ 3 ປີ ຜ່ານມາແລ້ວລວມທັງມາດຖານ ແລະ ລາຍຊື່ປະເທດທີ່ຈະຖືກບັນຈຸເຂົ້າໃນບັນຊີປະເທດ LDCs ສຳເລັດແລ້ວ, ກົມວຽກງານເສດຖະກິດ-ສັງຄົມຂອງ ສປຊ (UN Department of Economic and Social Affairs - DESA) ຈະແຈ້ງໃຫ້ລັດຖະບານຂອງປະເທດທີ່ໄດ້ຮັບການປະເມີນວ່າຈະຖືກຈັດເຂົ້າໃນບັນຊີປະເທດດ້ອຍພັດທະນາຂອງໂລກໂດຍມີໃບປະເມີນດ້ານເສດຖະກິດ-ສັງຄົມຂອງປະເທດດັ່ງກ່າວ.

ຫຼັງຈາກນັ້ນ, ຖ້າປະເທດໃດຫາກມີໜັງສືຮັບຮອງຢ່າງເປັນທາງການກ່ຽວກັບຜົນຂອງການປະເມີນ ຫຼື ບໍ່ມີໜັງສືປະຕິເສດຜົນການປະເມີນ, CDP ຈະເຮັດລາຍງານຜົນດັ່ງກ່າວລວມທັງບັນຊີລາຍຊື່ປະເທດ LDCs ຕາມການເຫັນດີຫຼືບໍ່ມີການຄັດຄ້ານໄປຍັງ ECOSOC ເພື່ອສືບຕໍ່ຂັ້ນຕອນຮັບຮອງຢ່າງເປັນທາງການຢູ່ກອງປະຊຸມສະມັດຊາໃຫຍ່ຂອງ ສປຊ. ແຕ່ຖ້າຫາກມີປະເທດໃດໄດ້ສົ່ງໜັງສືທີ່ເປັນທາງການຕໍ່ການທີ່ບໍ່ເຫັນດີກັບຜົນຂອງການປະເມີນດັ່ງກ່າວ FDESA ຈະບັນທຶກໄວ້ ແລະ ຈະບໍ່ບັນຈຸປະເທດດັ່ງກ່າວເຂົ້າໃນບັນຊີທີ່ນຳສະເໜີໃຫ້ ECOSOC. ຫຼັງຈາກນັ້ນ, ECOSOC ກໍຈະນຳສະເໜີຢູ່ໃນກອງປະຊຸມສະມັດຊາໃຫຍ່ຂອງ ສປຊ ເພື່ອອອກມະຕິຮັບຮອງເອົາ.

ສຳລັບປະເທດທີ່ປະຕິເສດຜົນການປະເມີນຢ່າງເປັນທາງການນັ້ນ, ກໍຈະບໍ່ຖືກຈັດເຂົ້າໃນບັນຊີດັ່ງກ່າວຕົວຢ່າງ: ປະເທດການາ, ປາປົວນິວກີນີ ແລະ ຊິມບັບເວ ໄດ້ປະຕິເສດຜົນການປະເມີນຂອງ CDP. ໃນໄລຍະຜ່ານມາຕົວເລກການປະເມີນຂອງຄະນະກຳມະການດັ່ງກ່າວ ແມ່ນບໍ່ຖືກຕ້ອງຕາມສະພາບຕົວຈິງດ້ານເສດຖະກິດ ແລະ ສັງຄົມຂອງປະເທດດັ່ງກ່າວ. ໃນປັດຈຸບັນ, ປະເທດດັ່ງກ່າວກໍບໍ່ໄດ້ຖືກຈັດເຂົ້າໃນບັນຊີປະເທດດ້ອຍພັດທະນາທີ່ສຸດໃນໂລກຕາມການປະເມີນ.

ສຳລັບຂັ້ນຕອນການພິຈາລະນາຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ຫຼື ອອກຈາກບັນຊີປະເທດດ້ອຍພັດທະນາມີ ຄື: ແຕ່ລະ 3 ປີໃດຄະນະກຳມະການດ້ານນະໂຍບາຍການພັດທະນາ (CDP) ຂອງອົງການສະຫະປະຊາຊາດ (UN) ຈະມີການປະເມີນຄວາມຄືບໜ້າ ແລະ ພິຈາລະນາການອອກຈາກບັນຊີປະເທດດ້ອຍພັດທະນາເທື່ອໜຶ່ງ. ການຕີລາຄາຄັ້ງສຸດທ້າຍຂອງ CDP ແມ່ນປີ 2015, ຄັ້ງຕໍ່ໄປແມ່ນປີ 2018, 2021 ແລະແຕ່ລະ 3 ປີ ຕໍ່ໆໄປ.

## IV. ຄວາມຄືບໜ້າໃນການປະຕິບັດມາດຖານ ແລະ ເງື່ອນໄຂຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ສຳລັບ ສປປ ລາວ

ອີງຕາມການປະເມີນຄວາມຄືບໜ້າການປະຕິບັດຄາດໝາຍຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາຄັ້ງຫຼ້າສຸດສຳລັບ ສປປ ລາວ, ໃນປີ 2015 ເຮົາສາມາດບັນລຸໄດ້ ຄື: GNI ບັນລຸໄດ້ 1.232 ໂດລາ, ເທົ່າກັບ 99% ຂອງເງື່ອນໄຂຫຼຸດພົ້ນ, HAI ບັນລຸໄດ້ 60,8 ເທົ່າກັບ 92% ແລະ EVI ບັນລຸໄດ້ 36,2 ເທົ່າກັບ 88% ຂອງເງື່ອນໄຂຫຼຸດພົ້ນ. ສະນັ້ນປີ 2015 ປະເທດເຮົາຍັງບໍ່ສາມາດບັນລຸໄດ້ຈັກເງື່ອນໄຂເລີຍ. (ລາຍລະອຽດຢູ່ເອກະສານຊ້ອນທ້າຍ)

ເຖິງແນວໃດກໍ່ຕາມ, ຄາດວ່າພວກເຮົາສາມາດບັນລຸໄດ້ 2 ຕົວຊີ້ບອກ ຄື: GNI ແລະ HAI ໃນປີ 2018, ເຊິ່ງຖືວ່າສາມາດບັນລຸເງື່ອນໄຂຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາຄັ້ງທຳອິດຂອງ ສປປ ລາວ, ແຕ່ CDP ຈະມີການປະເມີນອີກ ໃນປີ 2021, ຖ້າສາມາດບັນລຸເງື່ອນໄຂຫຼຸດພົ້ນໄດ້ອີກ CDP ຈະພິຈາລະນາການຫຼຸດພົ້ນໃຫ້ ສປປ ລາວ ໃນປີ 2024 ບົນພື້ນຖານການສະເໜີຂອງລັດຖະບານ ສປປ ລາວ.

ສະນັ້ນ, ຕາມການປະເມີນຂ້າງເທິງຮອດປີ 2020 ພວກເຮົາຈະສາມາດບັນລຸໄດ້ພຽງແຕ່ເງື່ອນໄຂຈຳນວນໜຶ່ງຂອງການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາເທົ່ານັ້ນ, ຍັງບໍ່ສາມາດຫຼຸດພົ້ນອອກຈາກສະຖານະພາບ ຫຼື ຫຼຸດພົ້ນອອກຈາກບັນຊີປະເທດດ້ອຍພັດທະນາໄດ້ຢ່າງສົມບູນເທື່ອ ເນື່ອງຈາກມີຂັ້ນຕອນ ແລະ ຂະບວນການສະເໜີຫຼຸດພົ້ນຢ່າງສົມບູນແກ່ຍາວເປັນເວລາຫຼາຍກວ່າ 3 ປີ ພາຍຫຼັງບັນລຸໄດ້ເງື່ອນໄຂຂອງການຫຼຸດພົ້ນເທື່ອທຳອິດ.

## ເອກະສານຊ້ອນທ້າຍ 4: ເປົ້າໝາຍການພັດທະນາແບບຍືນຍົງ (SDGs)

ໃນວັນທີ 25 ເດືອນກັນຍາ 2015, ຜູ້ຕາງໜ້າຈາກ 193 ປະເທດຂອງສະມັດຊາໃຫຍ່ສະຫະປະຊາຊາດ ລວມທັງ ສປປ ລາວ ໄດ້ຮັບຮອງເອົາວາລະການພັດທະນາຮອດປີ 2030 ເຊິ່ງມີຫົວຂໍ້ວ່າ ປ່ຽນແປງໂລກຂອງພວກເຮົາ: ວາລະປີ 2030 ເພື່ອການພັດທະນາແບບຍືນຍົງ, ເຊິ່ງລວມມີ 17 ເປົ້າໝາຍ (169 ຄາດໝາຍຍ່ອຍ) ສຳລັບ ສປປ ລາວ ໄດ້ສະເໜີເປົ້າໝາຍ MDG 9 ທີ່ຍັງບໍ່ທັນສາມາດປະຕິບັດສຳເລັດໃນປີ 2015 ເຂົ້າຕື່ມເປັນເປົ້າໝາຍການພັດທະນາແບບຍືນຍົງທີ 18 ດັ່ງນີ້:

ເປົ້າໝາຍທີ 1: ລຶບລ້າງຄວາມທຸກຍາກທຸກຮູບແບບໃນທຸກໆບ່ອນ;

ເປົ້າໝາຍທີ 2: ລຶບລ້າງຄວາມອຶດຫິວ, ບັນລຸການຄ້ຳປະກັນສະບຽງອາຫານ ແລະ ການມີສານອາຫານທີ່ໄດ້ຮັບການປັບປຸງ ແລະ ສົ່ງເສີມກະສິກຳແບບຍືນຍົງ;

ເປົ້າໝາຍທີ 3: ຮັບປະກັນຊີວິດທີ່ມີສຸຂະພາບດີ ແລະ ສົ່ງເສີມການເປັນຢູ່ທີ່ດີ ສຳລັບຄົນທຸກເກນອາຍຸ;

ເປົ້າໝາຍທີ 4: ຮັບປະກັນການສຶກສາທີ່ມີຄຸນນະພາບທີ່ມີລັກສະນະມີສ່ວນຮ່ວມ ແລະ ມີຄວາມສະ ເໝີພາບ ແລະ ສົ່ງເສີມໂອກາດການຮຽນຮູ້ຕະຫຼອດໄລຍະຂອງຊີວິດ ສຳລັບໝົດທຸກຄົນ;

ເປົ້າໝາຍທີ 5: ບັນລຸຄວາມສະເໝີພາບຍິງ-ຊາຍ ແລະ ໃຫ້ອຳນາດແກ່ແມ່ຍິງ ແລະ ເດັກນ້ອຍຍິງ;

ເປົ້າໝາຍທີ 6: ຮັບປະກັນການສະໜອງ ແລະ ການບໍລິຫານນ້ຳ ແລະ ສຸຂະນາໄມແບບຍືນຍົງໃຫ້ແກ່ໝົດທຸກຄົນ;

ເປົ້າໝາຍທີ 7: ຮັບປະກັນການເຂົ້າເຖິງພະລັງງານທີ່ສາມາດຊື້ໄດ້, ໄວ້ໃຈໄດ້, ຍືນຍົງ ແລະ ທັນສະໄໝສຳ ລັບໝົດທຸກຄົນ;

ເປົ້າໝາຍທີ 8: ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດທີ່ຕໍ່ເນື່ອງ, ມີສ່ວນຮ່ວມ ແລະ ຍືນຍົງ, ການຈ້າງງານທີ່ເຕັມທີ່ ແລະ ມີຜະລິດຕະພາບ ແລະ ວຽກທີ່ມີຄຸນຄ່າໃຫ້ແກ່ທຸກຄົນ;

ເປົ້າໝາຍທີ 9: ສ້າງພື້ນຖານໂຄງລ່າງທີ່ສາມາດຟື້ນໂຕໄວເມື່ອພົບພໍ້ວິກິດ, ສົ່ງເສີມການຫັນເປັນອຸດສາຫະ ກຳແບບມີສ່ວນຮ່ວມ ແລະ ຍືນຍົງ ແລະ ສົ່ງເສີມການມີຫົວຄິດປະດິດສ້າງ;

ເປົ້າໝາຍທີ 10: ຫຼຸດຜ່ອນຄວາມບໍ່ເທົ່າທຽມກັນພາຍໃນ ແລະ ລະຫວ່າງປະເທດ

ເປົ້າໝາຍທີ 11: ສ້າງໃຫ້ບັນດາເມືອງ ແລະ ການຕັ້ງຖິ່ນຖານຂອງມະນຸດມີສ່ວນຮ່ວມ, ປອດໄພ, ສາມາດຟື້ນໂຕໄວ ແລະ ຍືນຍົງ;

ເປົ້າໝາຍທີ 12: ຮັບປະກັນຮູບແບບການຊົມໃຊ້ ແລະ ການຜະລິດທີ່ຍືນຍົງ;

ເປົ້າໝາຍທີ 13: ປະຕິບັດມາດຕະການອັນຮີບດ່ວນເພື່ອຕໍ່ສູ້ກັບການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຂອງມັນ;

ເປົ້າໝາຍທີ 14: ອະນຸລັກ ແລະ ນຳໃຊ້ມະຫາສະມຸດ, ທະເລ ແລະ ຊັບພະຍາກອນທາງທະເລແບບຍືນຍົງເພື່ອການພັດທະນາແບບຍືນຍົງ;

ເປົ້າໝາຍທີ 15: ປົກປ້ອງ, ຟື້ນຟູ ແລະ ສົ່ງເສີມການນຳໃຊ້ລະບົບນິເວດເທິງໂລກແບບຍືນຍົງ, ຄຸ້ມຄອງປ່າແບບຍືນຍົງ, ຕໍ່ສູ້ກັບການເຮັດໃຫ້ທີ່ດິນກາຍເປັນທະເລຊາຍ ແລະ ຫຼຸດການເຮັດໃຫ້ດິນເຊື່ອມສະພາບລົງເຄິ່ງໜຶ່ງພ້ອມທັງຟື້ນຟູສະພາບດິນຄືນ ແລະ ຫຼຸດການສູນເສຍຊີວະນາໆພັນລົງເຄິ່ງໜຶ່ງ;

ເປົ້າໝາຍທີ 16: ສົ່ງເສີມສັງຄົມທີ່ສະຫງົບສຸກ ແລະ ມີສ່ວນຮ່ວມເພື່ອການພັດທະນາແບບຍືນຍົງ, ສະ ໜອງການເຂົ້າເຖິງຄວາມຍຸຕິທຳສຳລັບທຸກຄົນ ແລະ ສ້າງສະຖາບັນທີ່ມີປະສິດທິຜົນ, ມີຄວາມຮັບຜິດຊອບສູງ ແລະ ມີສ່ວນຮ່ວມໃນທຸກໆຂັ້ນ;

ເປົ້າໝາຍທີ 17: ສ້າງຄວາມເຂັ້ມແຂງໃຫ້ແກ່ວິທີທາງການຈັດຕັ້ງປະຕິບັດ ແລະ ຄືນຊີວິດໃຫ້ແກ່ການຮ່ວມມືລະດັບສາກົນເພື່ອການພັດທະນາແບບຍືນຍົງ;

ເປົ້າໝາຍທີ 18: ຫຼຸດຜ່ອນຜົນກະທົບຈາກລະເບີດທີ່ບໍ່ທັນແຕກໃນ ສປປ ລາວ.

- ສຳລັບລາຍລະອຽດກ່ຽວກັບບັນດາຄາດໝາຍຍ່ອຍຂອງແຕ່ລະເປົ້າໝາຍໃຫຍ່ນັ້ນຍັງຈະໄດ້ກຳນົດຕື່ມ.

## ເອກະສານຊ້ອນທ້າຍ 5: ດັດຊະນີໝາຍການພັດທະນາຂອງປະເທດດ້ອຍພັດທະນາ ໃນປີ 2015

| ລ/ດ | | ດັດຊະນີທີ່ເປັນມາດຖານ | | | | | | | | | ບັນລຸເງື່ອນໄຂຫຼຸດພົ້ນ |
|---|---|---|---|---|---|---|---|---|---|---|---|
| | | ລາຍໄດ້ຕໍ່ຫົວຄົນ (ໂດລາ, ນຳໃຊ້ວິທີ Atlas) | | | ດັດຊະນີຊັບສິນມະນຸດ | | | ດັດຊະນີຄວາມບອບບາງທາງເສດຖະກິດ | | | |
| | ປີ | 2009 | 2012 | 2015 | 2009 | 2012 | 2015 | 2009 | 2012 | 2015 | |
| | ມາດຕະຖານ | 1,086 | 1,190 | 1,242 | 66 | 66 | 66 | 38 | 32 | 32 | |
| | ປະເທດ | | | | | | | | | | |
| 1 | Afghanistan | 301 | 357 | 672 | 15.22 | 22.54 | 43.12 | 39.52 | 38.83 | 35.11 | |
| 2 | Angola | 1,963 | 3,747 | 4,518 | 26.01 | 31.60 | 41.91 | 49.77 | 51.29 | 39.73 | ບັນລຸ |
| 3 | Bangladesh | 453 | 637 | 926 | 53.34 | 54.68 | 63.80 | 23.21 | 32.41 | 25.11 | |
| 4 | Benin | 537 | 763 | 753 | 41.15 | 41.11 | 50.13 | 42.50 | 36.16 | 31.19 | |
| 5 | Bhutan | 1,487 | 1,700 | 2,277 | 58.64 | 59.05 | 67.86 | 52.93 | 44.19 | 40.19 | ບັນລຸ |
| 6 | Burkina Faso | 417 | 507 | 666 | 33.24 | 29.18 | 36.53 | 43.81 | 37.55 | 39.46 | |
| 7 | Burundi | 100 | 153 | 239 | 22.07 | 20.82 | 41.02 | 56.81 | 57.16 | 49.87 | |
| 8 | Cambodia | 490 | 707 | 852 | 57.77 | 57.93 | 67.17 | 55.63 | 50.47 | 38.27 | |
| 9 | Central African Republic | 363 | 447 | 439 | 27.24 | 21.55 | 22.92 | 45.06 | 35.65 | 33.52 | |
| 10 | Chad | 463 | 593 | 444 | 20.00 | 18.06 | 24.39 | 53.53 | 52.82 | 45.95 | |
| 11 | Comoros | 667 | 727 | 855 | 48.22 | 45.29 | 54.16 | 56.94 | 49.90 | 45.85 | |
| 12 | Democratic Republic of the Congo | 130 | 170 | 386 | 22.63 | 21.69 | 29.89 | 49.27 | 35.39 | 30.29 | |
| 13 | Djibouti | 1,050 | 1,235 | 1,629 | 44.51 | 42.43 | 54.56 | 51.20 | 46.30 | 37.69 | |
| 14 | Equatorial Guinea | 8,957 | 15,090 | 16,089 | 49.49 | 43.03 | 54.81 | 60.54 | 43.69 | 39.34 | ບັນລຸ |
| 15 | Eritrea | 197 | 293 | 444 | 36.21 | 35.61 | 41.16 | 55.46 | 58.99 | 56.75 | |

| | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|
| 16 | Ethiopia | 190 | 343 | 395 | 28.40 | 28.16 | 39.18 | 32.04 | 33.48 | 31.81 | |
| 17 | Gambia | 287 | 433 | 509 | 42.59 | 49.23 | 62.11 | 56.27 | 67.79 | 70.66 | |
| 18 | Guinea | 413 | 377 | 485 | 37.40 | 36.77 | 38.72 | 27.90 | 28.60 | 24.86 | |
| 19 | Guinea-Bissau | 187 | 547 | 567 | 33.82 | 34.21 | 44.82 | 60.53 | 60.52 | 53.55 | |
| 20 | Haiti | 490 | 645 | 696 | 39.79 | 35.57 | 39.32 | 52.19 | 47.31 | 34.12 | |
| 21 | Kiribati | 1,048 | 1,937 | 2,489 | 87.62 | 86.88 | 86.25 | 75.25 | 81.99 | 71.53 | ບັນລຸ |
| **22** | **Lao People's Democratic Republic** | **510** | **913** | **1,232** | **62.28** | **61.36** | **60.85** | **59.89** | **37.06** | **36.24** | |
| 23 | Lesotho | 940 | 1,050 | 1,374 | 61.87 | 62.06 | 62.92 | 49.94 | 45.86 | 42.91 | |
| 24 | Liberia | 133 | 190 | 340 | 30.61 | 38.55 | 46.24 | 65.46 | 60.97 | 57.92 | |
| 25 | Madagascar | 297 | 417 | 430 | 45.54 | 52.49 | 53.45 | 37.17 | 38.04 | 36.71 | |
| 26 | Malawi | 233 | 307 | 410 | 46.23 | 44.15 | 53.72 | 55.88 | 51.93 | 41.09 | |
| 27 | Mali | 470 | 563 | 666 | 32.64 | 30.17 | 45.49 | 42.32 | 36.78 | 33.29 | |
| 28 | Mauritania | 733 | 987 | 1,261 | 54.65 | 47.09 | 49.49 | 47.13 | 44.19 | 41.18 | |
| 29 | Mozambique | 307 | 420 | 546 | 27.52 | 30.72 | 41.75 | 48.68 | 44.37 | 38.06 | |
| 30 | Myanmar | 306 | 704 | 1,063 | 66.05 | 68.81 | 72.70 | 37.39 | 45.01 | 33.70 | |
| 31 | Nepal | 320 | 420 | 659 | 58.34 | 59.83 | 68.68 | 33.65 | 27.77 | 26.80 | ບັນລຸ |
| 32 | Niger | 267 | 347 | 389 | 22.84 | 24.28 | 34.75 | 45.84 | 38.63 | 37.63 | |
| 33 | Rwanda | 283 | 477 | 592 | 33.03 | 42.20 | 51.52 | 55.05 | 47.26 | 40.73 | |
| 34 | Sao Tome and Principe | 810 | 1,113 | 1,431 | 72.07 | 74.90 | 77.43 | 54.97 | 46.08 | 39.24 | ບັນລຸ |
| 35 | Senegal | 773 | 1,063 | 1,006 | 40.74 | 47.04 | 55.89 | 37.58 | 36.14 | 32.99 | |
| 36 | Sierra Leone | 237 | 333 | 567 | 20.42 | 24.79 | 34.76 | 50.67 | 48.50 | 48.93 | |
| 37 | Solomon Islands | 683 | 1,013 | 1,402 | 64.11 | 65.07 | 71.71 | 57.98 | 55.25 | 50.79 | ບັນລຸ |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| 38 | Somalia | 282 | 201 | 119 | 9.35 | 1.38 | 7.84 | 62.63 | 50.10 | 36.26 | |
| 39 | South Sudan | - | - | 573 | - | - | 29.11 | - | - | 55.96 | |
| 40 | Sudan | 787 | 1,213 | 1,511 | 51.41 | 52.64 | 56.55 | 52.86 | 44.44 | 49.94 | |
| 41 | Timor-Leste | 1,070 | 2,233 | 3,767 | 53.95 | 48.14 | 57.38 | 56.70 | 53.35 | 54.98 | ບັນລຸ |
| 42 | Togo | 350 | 460 | 491 | 42.56 | 45.49 | 58.68 | 42.79 | 35.36 | 33.55 | |
| 43 | Tuvalu | 2,544 | 4,993 | 5,788 | 88.36 | 88.05 | 88.82 | 79.69 | 63.93 | 53.98 | ບັນລຸ |
| 44 | Uganda | 303 | 463 | 663 | 51.28 | 45.78 | 53.63 | 51.91 | 36.23 | 31.77 | |
| 45 | United Republic of Tanzania | 373 | 497 | 779 | 40.58 | 40.10 | 51.98 | 31.02 | 28.69 | 28.77 | |
| 46 | Vanuatu | 1,737 | 2,540 | 2,997 | 72.28 | 77.69 | 81.25 | 62.30 | 46.78 | 47.70 | ບັນລຸ |
| 47 | Yemen | 767 | 1,020 | 1,234 | 52.13 | 52.34 | 59.79 | 44.90 | 38.47 | 35.43 | |
| 48 | Zambia | 647 | 1,010 | 1,327 | 40.68 | 36.88 | 40.85 | 52.79 | 53.03 | 45.61 | |

**<u>ອະທິບາຍສັບ:</u>**

GNI: Gross National Income (ລາຍໄດ້ແຫ່ງຊາດ);
EVI: Economic Vulneribility Index (ດັດຊະນີຄວາມບອບບາງທາງດ້ານເສດຖະກິດ);
HAI: Human Asset Index (ດັດຊະນີຊັບສິນມະນຸດ);
HDI: Human Development Index (ດັດຊະນີການພັດທະນາຊັບພະຍາກອນມະນຸດ);
PI: Poverty Index (ດັດຊະນີຄວາມທຸກຍາກ).

## ເອກະສານຊ້ອນທ້າຍ 6: ບັນຊີປະເທດຕາມການແບ່ງຂອງທະນາຄານໂລກຕາມລາຍຮັບ

| Low-income economies ($1,045 or less) | | 31 countries |
|---|---|---|
| Afghanistan | Gambia, The | Niger |
| Benin | Guinea | Rwanda |
| Burkina Faso | Guinea-Bisau | Sierra Leone |
| Burundi | Haiti | Somalia |
| Cambodia | Korea, Dem. People's Rep. | South Sudan |
| Central African Republic | Liberia | Tanzania |
| Chad | Madagascar | Togo |
| Comoros | Malawi | Uganda |
| Congo, Dem. Rep | Mali | Zimbabwe |
| Eritrea | Mozambique | |
| Ethiopia | Nepal | |

| Lower-middle-income economies ($1,046 to $4,125) | | 51 countries |
|---|---|---|
| Armenia | Indonesia | Samoa |
| Bangladesh | Kenya | São Tomé and Principe |
| Bhutan | Kiribati | Senegal |
| Bolivia | Kosovo | Solomon Islands |
| Cabo Verde | Kyrgyz Republic | Sri Lanka |
| Cameroon | Lao PDR | Sudan |
| Congo, Rep. | Lesotho | Swaziland |
| Côte d'Ivoire | Mauritania | Syrian Arab Republic |
| Djibouti | Micronesia, Fed. Sts. | Tajikistan |
| Egypt, Arab Rep. | Moldova | Timor-Leste |
| El Salvador | Morocco | Ukraine |
| Georgia | Myanmar | Uzbekistan |
| Ghana | Nicaragua | Vanuatu |
| Guatemala | Nigeria | Vietnam |
| Guyana | Pakistan | West Bank and Gaza |
| Honduras | Papua New Guinea | Yemen, Rep. |

| | | |
|---|---|---|
| India | Philippines | Zambia |

| Upper-middle-income economies ($4,126 to $12,735) | | 53 countries |
|---|---|---|
| Albania | Fiji | Namibia |
| Algeria | Gabon | Palau |
| American Samoa | Grenada | Panama |
| Angola | Iran, Islamic Rep. | Paraguay |
| Azerbaijan | Iraq | Peru |
| Belarus | Jamaica | Romania |
| Belize | Jordan | Serbia |
| Bosnia and Herzegovina | Kazakhstan | South Africa |
| Botswana | Lebanon | St. Lucia |
| Brazil | Libya | St. Vincent and the Grenadines |
| Bulgaria | Macedonia, FYR | Suriname |
| China | Malaysia | Thailand |
| Colombia | Maldives | Tonga |
| Costa Rica | Marshall Islands | Tunisia |
| Cuba | Mauritius | Turkey |
| Dominica | Mexico | Turkmenistan |
| Dominican Republic | Mongolia | Tuvalu |
| Ecuador | Montenegro | |

| High-income economies ($12,736 or more) | | 80 countries |
|---|---|---|
| Andorra | Germany | Poland |
| Antigua and Barbuda | Greece | Portugal |
| Argentina | Greenland | Puerto Rico |
| Aruba | Guam | Qatar |
| Australia | Hong Kong SAR, China | Russian Federation |
| Austria | Hungary | San Marino |
| Bahamas, The | Iceland | Saudi Arabia |
| Bahrain | Ireland | Seychelles |

| | | |
|---|---|---|
| Barbados | Isle of Man | Singapore |
| Belgium | Israel | Sint Maarten (Dutch part) |
| Bermuda | Italy | Slovak Republic |
| Brunei Darussalam | Japan | Slovenia |
| Canada | Korea, Rep. | Spain |
| Cayman Islands | Kuwait | St. Kitts and Nevis |
| Channel Islands | Latvia | St. Martin (French part) |
| Chile | Liechtenstein | Sweden |
| Croatia | Lithuania | Switzerland |
| Curaçao | Luxembourg | Taiwan, China |
| Cyprus | Macao SAR, China | Trinidad and Tobago |
| Czech Republic | Malta | Turks and Caicos Islands |
| Denmark | Monaco | United Arab Emirates |
| Estonia | Netherlands | United Kingdom |
| Equatorial Guinea | New Caledonia | United States |
| Faroe Islands | New Zealand | Uruguay |
| Finland | Northern Mariana Islands | Venezuela, RB |
| France | Norway | Virgin Islands (U.S.) |
| French Polynesia | Oman | |

## ຄະນະຮັບຜິດຊອບຄົ້ນຄວ້າ ແລະ ສ້າງວິໄສທັດຮອດປີ 2030 ແລະ ຍຸດທະສາດ ພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025)

**1. ຄະນະຮັບຜິດຊອບຊີ້ນໍາລວມ:**

ທ່ານ ສົມສະຫວາດ ເລັ່ງສະຫວັດ
ທ່ານ ສົມດີ ດວງດີ
ທ່ານ ດຣ. ບຸນທະວີ ສີສຸພັນທອງ

**2. ຄະນະຮັບບັນນາທິການ:**

ທ່ານ ດຣ. ລີເບີ ລີບົວປາວ
ທ່ານ ສຸພົດ ດາລາຈັນທຣາ
ທ່ານ ດຣ. ສະຖາບັນດິດ ອິນສີຊຽງໃໝ່

**3. ຄະນະທີມງານວິຊາການດ້ານເນື້ອໃນ:**

ທ່ານ ດຣ. ລີເບີ ລີບົວປາວ
ທ່ານ ດຣ. ສະຖາບັນດິດ ອິນສີຊຽງໃໝ່
ທ່ານ ດຣ. ສິດທິຣົດ ຣາຊະພົນ
ທ່ານ ດຣ. ສາຍຄໍາ ວໍລະເດດ
ທ່ານ ດຣ. ວັນທະນາ ນໍລິນທາ
ທ່ານ ດຣ. ທະນົງຊາຍ ສຸກຄໍາທັດ
ທ່ານ ນ. ລັດດາວັນ ຊົງວິໄລ
ທ່ານ ດຣ. ນ. ຈັນສະຖິດ ຈະເລີນສິນ

**4. ຄະນະກອງເລຂາ:**

ທ່ານ ແສງດາວ ຢ່າໝາວຕູ້
ທ່ານ ນ. ຄໍາເມີງ ບັນນະລາດ
ທ່ານ ນ. ພອນສະຫວັນ ສິດທິເດດ
ທ່ານ ຈັນສະໝອນ ວົງໄພສິດ
ທ່ານ ນ. ອໍາພາພອນ ໄຊຍະເສນ
ທ່ານ ນ. ດອກຟ້າ ສີໂຍທາ
ທ່ານ ວັນໄຊ ໄຊຍະວົງ
ທ່ານ ສຸລະໄຊ ບຸນທິເດດ

**ກະຊວງແຜນການ ແລະ ການລົງທຶນ**
**ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ**
**ຊັ້ນ 5 ຕຶກໃໝ່ ຜທ**
**ຖະໜົນສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ**
**ໂທລະສັບ & ແຟັກ: +856 21 245826**
**ອີເມວສ໌: info@neri.gov.la**
**ເວບໄຊ: www.neri.gov.la**